ທະນາຄານ ພັດທະນາ ອາຊີ

**ການຮ່ວມມື ລະຫວ່າງ ເອດີບີ – ລັດຖະບານ-ອົງການທີ່ບໍ່ຂຶ້ນກັບລັດຖະບານ**

**ໂຄງຮ່າງ ດຳເນີນງານ, 2003-2005**

**(ຮ່າງເອກກະສານ ເພື່ອປຶກສາຫາລື )**

ກຸມພາ **2003**

## ABBREVIATIONS

| | | |
|---|---|---|
| ADB | – | Asian Development Bank |
| AusAID | – | Australian Agency for International Development |
| CSO | – | civil society organization |
| CSP | – | Country Strategy and Program |
| DMC | – | developing member country |
| JFPR | – | Japan Fund for Poverty Reduction |
| LTSF | – | Long-Term Strategic Framework |
| MTS | – | Medium-Term Strategy |
| NGO | – | nongovernment organization |
| NGOC | – | NGO Center |
| OER | – | Office of External Relations |
| PPA | – | participatory poverty assessment |
| TA | – | technical assistance |
| RETA | – | regional technical assistance |
| RD | – | regional department |
| RM | – | resident mission |
| RSDD | – | Regional and Sustainable Development Department |

## NOTE

In this report, "$" refers to US dollars.

This document has been translated from English in order to reach a wider audience. However, English is the official language of the Asian Development Bank and the English original of this document is the only authentic (that is, official and authoritative) text. Any citations must refer to the English original of this document. The Asian Development Bank does not guarantee the accuracy of the translation and accepts no responsibility for any deviation from the original.

ເອກະສານນີ້ແມ່ນໄດ້ແປມາຈາກພາສາອັງກິດ ເພື່ອໃຫ້ແຈກຍາຍຢ່າງກ້ວາງຂວາງ. ເຖິງຢ່າງໃດກໍຕາມ, ພາສາອັງກິດ ເປັນພາສາທາງການຂອງ ທະນາຄານ ພັດທະນາ ອາຊີ ແລະສະບັບຕົ້ນທີ່ເປັນພາສາອັງກິດ ຂອງເອກະສານນີ້ເປັນ ເອກະສານທີ່ສັກສິດ (ເປັນທາງການ ແລະ ສັກສິດ). ຖ້າມີການອ້າງອີງ ຕ້ອງອີງໃສ່ເອກະສານສະບັບຕົ້ນທີ່ເປັນພາສາອັງ ກິດ. ທະນາຄານ ພັດທະນາ ອາຊີຈະບໍ່ຮັບປະກັນຄວາມຖືກຕ້ອງຂອງການແປ ແລະ ບໍ່ຮັບຜິດຊອບຖ້າມີການແຕກຕ່າງ ຈາກສະບັບຕົ້ນຕໍ.

# CONTENTS

EXECUTIVE SUMMARY

I. INTRODUCTION 1

II. BACKGROUND 2

A. ທັດສນະລວມກ່ຽວກັບການຮ່ວມມື ລະຫວ່າງ ເອດີບີ ແລະ ເອັນຈີໂອ 2

B. ນະໂຍບາຍ ໃໝ່ກ່ຽວກັບ ການຮ່ວມມື ກັບ ເອັນຈີໂອ 3

C. ຍຸດທະສາດການຫລຸດຜ່ອນຄວາມທຸກຈົນ 4

D. ການຮ່ວມມືລະຫວ່າງເອດີບີ ແລະເອັນຈີໂອ ໃນປະຈຸບັນ. 5

E. ພັດທະນາໂຄງຮ່າງການຮ່ວມມື. 9

III. VISION 9

IV. ISSUES AND CHALLENGES 10

A. ຈຳເປັນຕ້ອງໃຫ້ພາກສ່ວນກ່ຽວຂ້ອງມີສ່ວນຮ່ວມຫລາຍຂຶ້ນໃນໂຄງການທີ່ເອດີບີໃຫ້ ການ ສະຫນັບສະຫນູນ. 11

B. ຄວາມຕ້ອງການທີ່ຈະຕ້ອງເສີມຂະຫຍາຍຄວາມໂປ່ງໃສ ແລະ ການປະສານງານກັນໃຫ້ສາມາດເຂົ້າເຖີງ ຂໍ້ມູນຂ່າວສານ 12

C. ຄວາມຕ້ອງການເສີມສ້າງຄວາມອາດສາມາດໃຫ້ເຂັ້ມແຂງເພື່ອສົ່ງເສີມການຮ່ວມມືລະຫ່ວາງພາກສ່ວນກ່ຽວ ຂ້ອງ

D. ຄວາມຕ້ອງການສ້າງຄວາມເຂັ້ມແຂງດ້ານການຮ່ວມມືລະຫວ່າງ ລັດຖະບານ-ເອັນຈີໂອ 14

V. REALIZING ADB-GOVERNMENT-NGO COOPERATION 15

VI. MEDIUM-TERM ACTION PLAN 16

A. ການສ້າງຄວາມເຂັ້ມແຂງດ້ານການຮ່ວມມືລະຫວ່າງພາກສ່ວນກ່ຽວຂ້ອງໃນກິດ ຈະກຳທີ່ ເອດີບີ ໃຫ້ການສະໜັບສະໜູນ 16

B. ເສີມຂະຫຍາຍຄວາມໂປ່ງໃສ ແລະ ຄວາມຮັບຜິດຊອບໂດຍເຂົ້າເຖີງຂໍ້ມູນຂ່າວສານ 22

C. ການພັດທະນາຄວາມອາດສາມາດຂອງເອດີບີເພື່ອການຮ່ວມມືກັບເອັນຈີໂອ 25

D. ການສ້າງຄວາມອາດສາມາດໃຫ້ ເອັນຈີໂອ ແລະ ຈັດຫາການຊຸກຍູ້ສົ່ງເສີມແຫ່ງສະຖາບັນ 27

E. ການເສີມຂະຫຍາຍໃນການຮ່ວມມືລະຫ່ວາງລັດຖະບານ-ເອັນຈີໂອ 29

VII. IMPLEMENTING THE FRAMEWORK 31

A. ການປະຕິບັດໂຄງຮ່າງການຮ່ວມມືລະຫວ່າງ ເອດີບີ- ເອັນຈີໂອ 31

B. ຜົນກະທົບຕໍ່ທຶນ 32

APPENDIXES

## ພາກສັງລວມ

1. ໂຄງຮ່າງການຮ່ວມມືລະຫວ່າງເອດີບີ-ເອັນຈີໂອ ແລະລັດຖະບານ, 2003 - 2005 ແມ່ນຂີດຫມາຍອັນສຳຄັນຂອງການວິວັດທະນາສາຍພົວພັນ ລະຫວ່າງ ທະນາຄານ ພັດທະນາ ອາຊີ (ເອດີບີ) ແລະອົງການເອກກະຊົນສາກົນ (ເອັນຈີໂອ), ເຊັ່ນດຽວກັບການພົວພັນ 3 ຝ່າຍ ລະຫວ່າງ ເອດີບີ - ອົງການເອກກະຊົນສາກົນ ແລະອົງການລັດຖະບານ. ໂຄງຮ່າງຕ້ອງການໃຫ້ໄດ້ຜົນປະໂຫຍດຢ່າງແທ້ຈິງ ຕໍ່ບັນດານະໂຍບາຍທີ່ພົວພັນເຖິງເອດີບີ, ສະເພາະ, ນະໂຍບາຍການຮ່ວມມືລະຫວ່າງ ທະນາຄານພັດທະນາອາຊີ ແລະ ອົງການທີ່ບໍ່ຂຶ້ນກັບລັດຖະບານ (ນະໂຍບາຍ)[1]. ໂຄງຮ່າງດັ່ງກ່າວຈັດຢູ່ໃນແຜນດຳເນີນງານ ເຊິ່ງລວມຢູ່ ໃນແຜນຍຸດທະສາດການດຳເນີນງານ ຂອງເອດີບີ ທັງໃນໄລຍະກາງ ແລະ ໄລຍະຍາວ, ພິເສດ ແມ່ນການສົ່ງເສີມ "ສ້າງເງື່ອນໄຂສຳລັບການມີສ່ວນຮ່ວມ ໃນການຕັດສິນເພື່ອໃຫ້ມີປະສິດທິພາບສູງຂຶ້ນຕື່ມ, ລວມທັງໃຫ້ມະຫາຊົນມີ ສ່ວນຮ່ວມໃນການຕັດສິນ"[2] ໂຄງຮ່າງການຮ່ວມມືແມ່ນສອດຄ່ອງ ກັບການແນະນຳ ຂອງຄນະ ປະທານ ແລະ ຄນະກຳມະການ ສະເພາະກິດກ່ຽວກັບການ ຮ່ວມມື ລະຫວ່າງ ເອດີບີ ແລະ ເອັນຈີໂອ - ກະກຽມ ແຜນຈັດຕັ້ງ ປະຕິບັດ ເພື່e ເຮັດໃຫ້ການຮ່ວມມື ລະຫວ່າງ ເອດີບີ ແລະ ເອັນຈີໂອ ກວ້າງຂວາງ.

2. ໂຄງຮ່າງການຮ່ວມມືມີ ສອງທັດສນະໂດດເດ່ນຄື: ໜຶ່ງ ບັນດາພາກສ່ວນກ່ຽວຂ້ອງໃນ ເອດີບີ ໄດ້ໃຊ້ເວລາກວ່າ 6 ເດືອນ ກະກຽມ ຊຽນໂຄງຮ່າງດັ່ງກ່າວ, ໄດ້ມີການປຶກສາຫາລື ແບບເລັ່ງລັດ 14 ຄັ້ງ, ໄດ້ມີ ການຈັດກອງປະຊຸມປຶກສາຫາລື ທົ່ວຂົງເຂດ. ມີຕົວແທນກວ່າ 500 ທ່ານ ຈາກ ບັນດາອົງການເອກ ກະຊົນສາກົນ, ພະນັກງານຈາກອົງການລັດຖະບານ, ພາກເອກກະຊົນ ແລະ ເອດີບີ, ໄດ ເຂົ້າຮ່ວມ ກອງປະຊຸມ ແລະໄດ້ຮ່ວມກັນ ພິຈາລະນາບັນຫາ, ຈຸດປະສົງ ແລະການຈັດຕັ້ງປະຕິບັດ ໂດຍອີງຕາມບົດຮຽນ ແລະ ປະສົບການ ຂອງບັນດາຕົວແທນທີ່ເຂົ້າຮ່ວມກອງປະຊຸມ. ຂັ້ນຕອນສຸດທ້າຍຂອງຂະບວນການ ແມ່ນໄດ້ມີການຄັດເລືອກ ເອົາຕົວແທນຈາກພາກສ່ວນຕ່າງໆ ມາ ລວມກັນຢູ່ກຸງມານີລາ ເປັນເວລາ 1 ອາທິດເພື່ອ ກະກຽມຊຽນ ໂຄງຮ່າງ ສະບັບທຳອິດ.

3. ສອງ, ໂຄງຮ່າງການຮ່ວມມືບໍ່ແມ່ນນະໂຍບາຍຫຼືຍຸດທະສາດ. ແຕ່ມັນໃຫ້ "ແຜນທິດ" ເພື່ອເຮັດໃຫ້ການຮ່ວມມືລະຫວ່າງ ເອດີບີ ອົງການເອກກະຊົນສາກົນ ແລະ ພາກສ່ວນລັດຖະບານໄປຕາມທິດທາງການດຳເນີນງານໄລຍະກາງຂອງເອດີບີ. ເກືອບສອງທົດສັດຕະວັດຜ່ານມາທີ່ເອດີບີຮັບຮູ້ວ່າ ການປະກອບສ່ວນຂອງ ເອັນຈີໂອແມ່ນມີຄວາມສຳຄັນຕໍ່ການພັດທະນາແບບຍືນຍົງ, ນີ້ເປັນ ເທື່ອທຳອິດທີ່ໄດ້ມີການກະກຽມໂຄງຮ່າງຢ່າງລະອຽດເພື່ອໃຫ້ແທດເໝາະກັບວິທີການຮ່ວມມືດັ່ງກ່າວ.

4. ບັນດາພາກສ່ວນທີ່ມີສ່ວນຮ່ວມ ສາມາດປະກອບຄວາມຄິດເຫັນ ຕໍ່ທັດສະນະ (ວິໃສທັດ) ໄລຍະຍາວຂອງເອດີບີກາວກັບການຮ່ວມມື ລະຫວ່າງ ເອດີບີ ພາກສ່ວນລັດຖະບານ ແລະ ອົງການເອກກະຊົນສາກົນໂດຍມີຫຼາກຫຼາຍຄວາມຄິດເຫັນ, ປະສົບການ ແລະ ສະພາບການແຕກຕ່າງກັນໃນຂົງເຂດ ອາຊີ ປາຊີຟິກ. ຄຳແນະນຳເຫຼົ່ານັ້ນແມ່ນສອດຄ່ອງກັບຈຸດປະສົງຂອງ 3ຝ່າຍ ເຊິ່ງແມ່ນຫຼຸດຜ່ອນຄວາມທຸກຈົນ.

---

[1] ເອດີບີ 1998. *ການຮ່ວມມືລະຫວ່າງ ທະນາຄານພັດທະນາອາຊີ ແລະ ອົງການທີ່ບໍ່ຂຶ້ນກັບລັດຖະບານ*. ມະນີລາ. ນະໂຍບາຍແນະນຳໃຫ້ພະນັກງານນຳໃຊ້ທາງເລືອກຕ່າງໆ, ທີ່ເຫັນວ່າສາມາດເປັນໄປໄດ້ ແລະ ແທດເໝາະເພື່ອເສີມຂະຫຍາຍການຮ່ວມມື ແລະ ປະສານງານກັບເອັນຈີໂອ.

[2] ເອດີບີ 2000. *ແຜນຍຸດທະສາດໄລຍະຍາວຂອງທະນາຄານພັດທະນາອາຊີ ( 2001-2015)*, ເອກະສານຊ້ອນທ້າຍ 2 , ໜ້າ 1. ມານີລາ

*"ເສີມຂະຫຍາຍການຮ່ວມມື ລະຫວ່າງ ເອດີບີ ອົງການເອກກະຊົນສາກົນ ແລະ ອົງການລັດຖະບານ ເພື່ອຫຼຸດຜ່ອນຄວາມທຸກຈົນ ໃນຂົງເຂດ ອາຊີ ປາຊີຟິກ ໂດຍຮ່ວມມືກັນສົ່ງເສີມການການຂະຫຍາຍ ຕົວແບບຍືນຍົງເພື່ອ ຜົນປະໂຫຍດຂອງຄົນທຸກ, ພັດທະນາສັງຄົມ ແລະ ການປົກຄອງ ທີ່ດີ."*

5. ຮັບຮູ້ວ່າເອດີບີ ມີການດຳເນີນງານຢ່າງກ້ວາງຂວາງໃນຫຼາຍສະພາບການ ແລະ ທັດສະນະທີ່ແຕກຕ່າງກັນ ເຊິ່ງມີຜົນດີຕການຕັດສິນໃຈຕໍ່ບັນດາອົງການເອັນຈີໂອໃນຂົງເຂດທີ່ເຮັດບົດບາດກ່ຽວກັບການພັດທະນາ, ການມີສ່ວນຮ່ວມໄດ້ກຳນົດສິ່ງທ້າຍທາຍ 4 ຢ່າງ ເພື່ອໃຫ້ສຳເລັດເປົ້າຫມາຍ, ລວມທັງຄວາມຕ້ອງການດັ່ງນີ້:

(i) ສ້າງເງື່ອນໄຂໃຫ້ຜູ້ມີສ່ວນຮ່ວມໄດ້ປະກອບສ່ວນໃນກິດຈະກຳທີ່ທະນາຄານພັດທະນາອາຊີໃຫ້ການຊ່ວຍເຫລືອ;

(ii) ເສີມຂະຫຍາຍຄວາມໂປ່ງໃສແລະການປະສານເພື່ອໃຫ້ເຂົ້າເຖິງຂໍ້ມູນຂ່າວ ສານ;

(iii) ສ້າງຄວາມອາດສາມາດໃຫ້ເຂັ້ມແຂງເພື່ອສະໜັບສະໜູນການຮ່ວມມືລະຫວ່າງພາກສ່ວນກ່ຽວຂ້ອງດ້ວຍກັນ.

(iv) ເສີມຂະຫຍາຍການຮ່ວມມືລະຫວ່າງພາກລັດຖະບານ ແລະ ອົງການເອກກະຊົນສາກົນ.

6. ຄ້າຍຄືກັນ, ຂໍ້ແນະນຳກ່ຽວກັບການຈັດຕັ້ງປະຕິບັດໃນ3 ປີ ຕໍ່ໜ້າໄດ້ຖືກຍົກຂື້ນພິຈາລະນາພາຍຫຼັງມີການໂຕ້ຖຽງກ່ຽວກັບຄວາມອາດສາມາດ, ຄວາມມຸ່ງຫວັງ ແລະ ສະພາບຕົວຈິງຂອງແຕ່ລະສະຖາບັນ. ບັນດາຂໍ້ແນະນຳດັ່ງກ່າວສາມາດສະຫຼຸບໄດ້ດັ່ງຕໍ່ໄປນີ້:

(i) ສ້າງເງື່ອນໄຂໃຫ້ຜູ້ກ່ຽວຂ້ອງມີສ່ວນຮ່ວມຫລາຍຂຶ້ນໃນກິດຈະກຳທີ່ສະໜັບສະໜູນໂດຍ ເອດີບີ

- ວາງຮູບແບບການມີສ່ວນຮ່ວມ, ລວມທັງກຳນົດມາດຕະຖານ ລະດັບຕ່ຳສຸດ, ແລະ ພັດທະນາເອກກະສານ ແລະ ການປະເມີນຜົນຕົວແບບ.
- ຈັດກອງປະຊຸມ 3 ຝ່າຍ ໃນລະດັບປະເທດ, ຂົງເຂດຍ່ອຍ, ແລະ ລະດັບຂົງເຂດຢ່າງເປັນປະຈຳເພື່ອຕີລາຄາຄວາມຄືບໜ້າຂອງບັນຫາຕ່າງທີ່ເອດີບີ ແລະ ຜູ້ກ່ຽວຂ້ອງມີຄວາມສົນໃຈເພື່ອສຶກສາ ແລະ ແກ້ໄຂບັນຫາດັ່ງກ່າວໃຫ້ທັນເວລາໂດຍບໍປ່ອຍໄວ້ໃຫ້ກາຍເປັນບັນຫາໃຫຍ່ໃນພາຍຫຼັງ.
- ໃຫ້ ເອັນຈີໂອມີສ່ວນຮ່ວມໃນທຸກຂັ້ນຕອນປະຕິບັດໂຄງການ
- ສະເໜີກົນໄກຕ່າງໆ ເພື່ອ ໃຫ້ເອັນຈີໂອ ໄດ້ມີສ່ວນຮ່ວມ ຫຼາຍຂື້ນ ໃນການ ວາງແຜນ ຍຸດທະສາດ ການພັດທະນາ ເຊັ່ນດຽວກັບການຕິດຕາມ ແລະ ປະເມີນນະໂຍບາຍຂອງ ເອດີບີ (ຂໍ້ສະເໜີນີ້ຈຳເປັນຕ້ອງມີການດັດປັບໃນກໍລະນີວັກ 4 ມີການປ່ຽນແປງ)
- ສ້າງຄວາມອາດສາມາດຂອງຜູ້ປະສານງານໃນສຳນັກງານເອດີບີປະຈຳປະເທດໃຫ້ເຂັ້ມແຂງຂຶ້ນຕື່ມໂດຍສະເໜີແຕ່ງຕັ້ງພນັກງານຮັບຜິດຊອບ ແລະ ຜູ້ປະສານງານກັບ ເອັນຈີໂອ.
- ສຳຫຼວດວິທີການເພື່ອໃຫ້ມະຫາຊົນມີອິດທິພົນຕໍ່ນະໂຍບາຍການກູ້ຢືມ (policy-based lending )

(ii) ເສີມຂະຫຍາຍຄວາມໂປ່ງໃສ ແລະ ການປະສານ ເພື່ອໃຫ້ເຂົ້າເຖິງ ຂໍ້ມູນຂ່າວສານ

- ກະກຽມ ແລະ ປັບປຸງ ເອກກະສານ ຄູ່ມື ການປະຕິບັດຢ່າງເປັນຈຳເພື່ອໃຫ້ທັນສະພາບການ
- ເສີມຂະຫຍາຍສູນຂໍ້ມູນຂ່າວສານຂອງເອດີບີ ໂດຍອະນຸຍາດໃຫ້ປະຊາຊົນສາມາດເຂົ້າເຖິງນະໂຍບາຍເຮັດວຽກຮ່ວມມືກັນ ເພື່ອຮັບປະກັນວ່າເອກກະສານດັ່ງກ່າວໄດ້ບັນທຶກໃນລະບົບຂ່າວສານ

- ທົບທວນເອກກະສານທີ່ມີ ໃຫ້ມະຫາຊົນໄດ້ໃຊ້ອີງຕາມນະໂຍບາຍເປີດເຜີຍຂໍ້ມູນ ລວມທັງບັນຫາທີ່ພົວພັນເຖິງການແປເອກກະສານ
- ຈັດຕັ້ງ ແລະ ຂະຫຍາຍກິດຈະກຳເພື່ອກະຕຸ້ນຄວາມຕື່ນຕົວກ່ຽວກັບການດຳເນີນງານຂອງເອດີບີ, ແລະ ຜະລິດເອກະສານສຳຄັນເປັນຫຼາຍພາສາ
- ຈັດຕັ້ງສູນຂໍ້ມູນຂ່າວສານເປັນອົງປະກອບໜຶ່ງຂອງໂຄງການທີ່ ເອດີບີໃຫ້ການສະໜັບສະໜູນ.

(iii) ພັດທະນາ ຄວາມອາດສາມາດຂອງເອດີບີ ໃນການຮ່ວມມືກັບເອັນຈີໂອ ໂດຍ:

- ສືບຕໍ່ຈັດຕັ້ງການຝຶກອົບຮົມໃຫ້ພະນັກງານເອດີບີ ກ່ຽວກັບການມີສ່ວນຮ່ວມ ແລະເຮັດວຽກກັບອົງການ ເອັນຈີໂອ ຮັບຮູ້ຢ່າງເປັນທາງການໃຫ້ພະນັກງານ ເອດີບີ;
- ເຫັນດີ ໃຫ້ພນັກງານ ເອດີບີເຮັດວຽກຢ່າງໃກ້ສິດກັບເອັນຈີໂອໃນການອອກແບບ ແລະ ປະຕິບັດໂຄງການ;
- ມີການແລກປ່ຽນພນັກງານລະຫວ່າງເອດີບີ ແລະ ເອັນຈີໂອ.

(iv) ສ້າງຄວາມອາດສາມາດ ແລະ ສະໜັບສະໜູນ ອົງການເອັນຈີໂອ ດ້ວຍວິທີດັ່ງນີ້:

- ທົບທວນວິທີການໃຫ້ທຶ ແກ່ບັນດາອົງການເອັນຈີໂອ ແລະ ສ້າງກົນໄກໃໝ່ເພື່ອໃຫ້ແທດເໝາະກັບສະພາບການ;
- ໃຫ້ການຊ່ວຍເຫຼືອດ້ານວິຊາການ ເພື່ອສ້າງຄວາມອາດສາມາດຂອງເອັນຈີໂອ;
- ຮັບຮູ້ວ່າ ເອັນຈີໂອມີວິທີເຮັດວຽກທີ່ສ້າງສັນ ເຊິ່ງສອດຄ່ອງກັບວິທີດຳເນີນງານຂອງເອດີບີ.

(v) ສ້າງຄວາມເຂັ້ມແຂງດ້ານການຮ່ວມມື ແລະ ການຊ່ວຍເຫຼືອເຊິ່ງກັນ ແລະ ກັນ ລະຫວ່າງເອດີບີ ແລະ ເອັນຈີໂອດັ່ງນີ້:

- ພັດທະນາໂຄງຮ່າງກົດໝາຍ ແລະ ເອກກະສານຕ່າງໆ ເພື່ອອຳນວຍຄວາມສະດວກໃຫ້ແກ່ການຮ່ວມມືລະຫວ່າງລັດຖະບານ, ແລະ ເອັນຈີໂອ, ແລະ ສ້າງຄວາມອາດສາມາດຂອງພະນັກງານລັດໃນການປະສານງານກັບເອັນຈີໂອ

7. ແຜນດຳເນີນງານຂອງສູນເອັນຈີໂອຂອງ ເອດີບີໃນ 3 ປີຕໍ່ໜ້າຈະລວມເອົາ ບັນດາດ້ານຂໍ້ແນະນຳຕ່າງໆທີ່ສະເໜີໃນກອງປະຊຸມ. ສູນເອັນຈີໂອ ຈະຮັບຜິດຊອບໂດຍກົງຕໍ່ການຄຸ້ມຄອງໂຄງຮ່າງການຮ່ວມມື, ມີບົດບາດໃນການປະຕິບັດໂຄງຮ່າງ ເຊິ່ງໄດ້ແຈ້ງບອກໃຫ້ບັນດາກົມໃນສຳນັກງານເອດີບີ, ລັດຖະບານ ແລະ ເອັນຈີໂອ. ຈະມີການຕິດຕາມ ແລະ ປະເມີນຜົນ ແລະ ລາຍງານໃຫ້ມະຫາຊົນຮັບຮູ້ໃນແຕ່ລະປີ. ໂຄງຮ່າງອັນໃໝ່, ສຳລັບ 2006-2010 ແມ່ນສອດຄ່ອງກັບແຜນຍຸດທະສາດໄລຍະກາງຂອງເອດີບີ, ຈະຖືກກະກຽມໃນ ປີ 2005 ໂດຍນຳໃຊ້ວິທີການແບບມີສ່ວນຮ່ວມຄ້າຍຄືວິທີການຄັ້ງນີ້.

8. ຂໍ້ແນະນຳຕ່າງໆ ໄດ້ຖືກຍົກຂຶ້ນພັດທະນາໃນກອງປະຊຸມ ແລະ ໃນເວລາຂຽນໂຄງຮ່າງ ເພື່ອໃຫ້ສອດຄ່ອງກັບນະໂຍບາຍ ແລະ ລະບຽບການຂອງເອດີບີ. ສະນັ້ນເຫັນວ່າຄວາມຕ້ອງໃຫ້ມີຊັບພະຍາກອນເພີ້ມເຕີມສຳລັບປະຕິບັດໂຄງຮ່າງແມ່ນບໍ່ສູງ. ສຳລັບເອດີບີ, ມູນຄ່າສຳລັບການຈັດຕັ້ງປະຕິບັດຄາດຄະເນປະມານ 3,7 ລ້ານໂດລາສະຫະລັດ ແຕ່ບໍ່ລວມການຊ່ວຍເຫຼືອລ້າຂະໜາດນ້ອຍ.

# I. ພາກສະເໜີ

1. ໂຄງຮ່າງການຮ່ວມມືລະຫວ່າງ ເອດີບີ ແລະ ເອັນຈີໂອ ຖືກຮ່າງຂື້ນ ໂດຍ ຕົວແທນຈາກ ທະນາຄານພັດທະນາ ອາຊີ (ເອດີບີ ), ລັດຖະບານປະເທດສະມາຊິກ ແລະ ອົງການເອກກະຊົນສາກົນ (ອັນຈີໂອ) ແລະ ພາກສ່ວນເອກກະຊົນ. ໂຄງຮ່າງຕ້ອງການໃຫ້ໄດ້ຜົນປະໂຫຍດຢ່າງແທ້ຈິງ ຕໍ່ບັນດານະໂຍບາຍທີ່ພົວພັນເຖິງເອດີບີ, ສະເພາະ ນະໂຍບາຍການຮ່ວມມືລະຫວ່າງທະນາຄານພັດທະນາອາຊີ ແລະ ອົງການທີ່ບໍ່ຂຶ້ນກັບລັດຖະບານ (ນະໂຍບາຍ). ປະທານທະນາຄານ ພັດທະນາ ອາຊີໄດ້ຮັບຮອງເອົາໂຄງຮ່າງດັ່ງກ່າວໃນປີ 2003.

2. ຄຽງຄູ່ກັບນະໂຍບາຍ, ໂຄງຮ່າງການຮ່ວມມືໄດບັນລຸຈຸດປະສົງ ຕາມການແນະນໍາຂອງຄະນະປະທານ ແລະ ຄະນະກໍາມະການສະເພາະກິດປີ 2001 ກ່ຽວກັບການກະກຽມ "ແຜນການຮ່ວມມື" ເຊິ່ງຈະຊ່ວຍຈັດຕັ້ງຂະບວນການປຶກສາຫາລື ແລະ ສົນທະນາລະຫວ່າງສະຖາບັນ. ອັນນີ້, ລະຫວ່າງພາຍໃນອົງການ, ເຮັດໃຫ້ ເອດີບີຮັບຮູ້ວ່າການຮ່ວມມືກັບ ເອັນຈີໂອມີຄວາມສໍາຄັນເຮັດໃຫ້ການດໍາເນີນງານມີປະສິດທິພາບ, ສະແດງໃຫ້ເຫັນໃນຊຸມປີ 1980 ໄດ້ມີການແຕ່ງຕັ້ງຜູ້ປະສານງານໃນ ເອດີບີ ແລະ ໄດ້ຮັບຮອງນະໂຍບາຍກ່ຽວກັບການລິເລີ້ມຮ່ວມມືກັບ ເອັນຈີໂອໃນປີ 1987. ໂຄງຮ່າງດັ່ງກ່າວ ໄດ້ປະຕິບັດຕາມແຜນຍຸດທະສາດການດໍາເນີນງານໄລຍະຍາວ ຂອງເອດີບີ [3], ໂດຍຊີ້ໃຫ້ເຫັນວ່າ ເອດີບີສະໜັບສະໜູນການມີສ່ວນຮ່ວມຂອງ ເອັນຈີໂອໃນການອອກແບບ ແລະ ປະຕິບັດໂຄງການ[4] , ແຜນງານ ແລະ ການບໍລິການສັງຄົມ.

3. ດັ່ງນັ້ນ, ເອດີບີ ມີນະໂຍບາຍກ່ຽວກັບ ສະພາບແວດລ້ອມ, ຍຸດທະສາດການແກ້ໄຂບັນຫາ ແລະໃນປະຈຸບັນ, ມີໂຄງຮ່າງການຮ່ວມມືກັບເອັນຈີໂອ, ມີທິດທາງທີ່ແນ່ນອນ, ສະແດງໃຫ້ເຫັນວ່າເອດີບີ, ລັດຖະບານ[5] ແລະເອັນຈີໂອ ໄດ້ພະຍາຍາມຮ່ວມມືກັນຢ່າງໃກ້ສິດ ເພື່ອຫລຸດຜ່ອນຄວາມທຸກຍາກໃນຂົງເຂດອາຊີ ປາຊີຟິກ. ໂຄງຮ່າງການຮ່ວມມື ໄດ້ລະບຸຫຼັກການ ແລະຂອບເຂດແບບດຽວກັນຂອບເຂດທີ່ກ່ຽວພັນກັນ ເພື່ອປະສານງານ ກັນທີ່ກ່ຽວກັບ ການດໍາເນີນງານຂອງເອດີບີ.

4. ການວິວັດທະນາເອກະສານ ແມ່ນຕ້ອງປັບປຸງ ແລະທົບທວນເອກະສານຢ່າງເປັນປະຈໍາ ອີງຕາມຂໍ້ມູນຈາກການຕິດຕາມ ແລະ ປະເມີນຜົນປະຈໍາປີ. ໄດ້ມີການໄດ້ສຸມທຸກຄວາມພະຍາຍາມໃນການຂຽນໂຄງຮ່າງເພື່ອໃຫ້ເປັນເອກະພາບກັນເທົ່າທີ່ສາມາດຈະເປັນໄດ້, ສ່ວນບັນຫາ ແລະ ຄໍາເຫັນຕ່າງໆທີ່ບໍ່ສາມາດ ເປັນເອກະພາບກັນນັ້ນຈະແກ້ໄຂກໍຕໍ່ເມື່ອມີການຮ່ວມມືກັນຫຼາຍຂື້ນ. ແຜນຕິດຕາມ ແລະປະເມີນຜົນມດັ່ງນັ້ນ, ແມ່ນຈໍາເປັນຕ້ອງມີການດັດປັບໃຫ້ແທດເໝາະກັບສະພາບ. ວິທີການການປະຕິບັດຂອງປະເທດໜຶ່ງອາດບໍ່ແທດເໝາະກັບສະພາບຂອງປະເທດອື່ນ, ຕົວຢ່າງໂຄງການກໍ່ສ້າງທາງຊົນນະບົດອາດບໍ່ແທດເຫມາະກັບໂຄງການພັດທະນາວຽກສາທາລະນະສຸກໃນຕົວເມືອງ. ເພາະສະນັ້ນ, ຂໍ້ແນະນໍາປະຕິບັດທີ່ລວມຢູ່ໃນໂຄງຮ່າງຈະຖືກຈັດຕັ້ງປະຕິບັດອີງຕາມສະພາບການ ແລະ ຄວາມເໝາະສົມ ແລະ ອີງຕາມຜົນຂອງການຕິດຕາມປະຕິບັດ.

---

[3] ເອດີບີ 2000, *ແຜນຍຸດທະສາດ ການດໍາເນີນງານ ໄລຍະຍາວ ຂອງເອດີບີ (2001- 2005)*, ມານີລາ

[4] "ໂຄງການ" ລະບຸໃນເອກກະສານນີ້ ໝາຍເຖິງ ບັນດາໂຄງການຂອງເອດີບີ ດໍາເນີນງານ ເພື່ອຊຸມຊົນ; ເອດີບີ ຍັງໃຫ້ກາຍຊ່ວຍເຫຼືອດ້ານການເງິນແກ່ຂະແໜງເອກກະຊົນ. ບັນດາໂຄງການດັ່ງກ່າວ ໄດ້ນໍາສະສເໜີເຖິງເອດີບີ ເພື່ອຂໍການຊ່ວຍເຫຼືອດ້ານການເງິນເມື່ອພິຈາລະນາເຫັນວ່າ ມີຄວາມພ້ອມ. ຕາມທໍາມະດາ ເອດີບີ ບໍມີສ່ວນຮ່ວມໃນການອອກແບບ ແລະ ກະກຽມໂຄງການ ຂອງເອກກະຊົນ. ໂຄງການທີ່ໄດ້ໜັບການ ຊ່ວຍເຫຼືອຄວນປຶກສາຫາລືກັບ ເອັນຈີໂອໃນຊ່ວງໄລຍະພັດທະນາໂຄງການ ແລະ ເອດີບີ ຈະສືບຕໍ່ຊຸກຍູ້ການປຶກສາຫາລືພິເສດໃນກໍລະນີ ການປະຕິບັດໂຄງການມີຜົນກະທົບຕໍ່ປະຊາຊົນ.

[5] "ລັດຖະບານ" ໃນເອກະສານນີ້ ລວມເອົາລັດຖະບານທຸກລະດັບ : ລະດັບຊາດ, ຂົງເຂດ ຫລື ແຂວງ ແລະທ້ອງຖິ່ນ.

5. "ເອັນຈີໂອ"ໃນເອກກະສານສະບັບນີ້ໝາຍເຖິງບັນດາອົງການທີ່ບໍ່ຂຶ້ນກັບລັດຖະບານ ແລະ ເປັນອົງການທີ່ດໍາເນີນງານ ໂດຍບໍ່ຫວັງຜົນກໍາໄລ. ເອດີບີມີການຮ່ວມມືກັບເກືອບທຸກອົງການເອັນຈີໂອທີ່ເຮັດວຽກພັດທະນາ, ອົງການຕົວແທນມະຫາຊົນ, ສະມາຄົມຊຸມຊົນ, ອົງການອາສາສະໝັກ ຫຼື ອົງການອາສາສະມັກພັດທະນາເອກກະຊົນ, ບັນດາອົງການສື່ກາງ, ກຸ່ມມະຫາຊົນທີ່ມີຈຸດມຸ່ງໝາຍດຽວກັນ ເຊັ່ນສະມາຄົມນັກວິຊາການ ແລະ ສະຫະພັນກໍາມະບານ "ອົງການມະຫາຊົນ" (CSOs) ໃນທີ່ນີ້ ໝາຍເຖິງບັນດາອົງການເອກກະຊົນ ແລະ ອົງການທີ່ດໍາເນີນງານ ເພື່ອຮັບໃຊ້ສັງຄົມ, ໃນເອກກະສານໂຄງຮ່າງການຮ່ວມມືສະບັບນີ້ຈະໃຊ້ຄໍາສັບຫຍໍ້ວ່າ ເອັນຈີໂອ ເຊິ່ງໝາຍເຖິງບັນດາອົງການຕ່າງໆທີ່ກ່າວຂ້າງເທິງນັ້ນ. ອົງການ ເອັນຈີໂອທີ່ເຮັດວຽກຢູ່ທຸກລະດັບນັບແຕ່ທ້ອງຖິ່ນ, ລະດັບຊາດ ແລະ ລະດັບສາກົນລ້ວນແຕ່ມີສ່ວນຮ່ວມໃນທຸກກິດຈະກໍາທີ່ ເອດີບີໃຫ້ການ ຊ່ວຍເຫຼືອ.

## II. ປະຫວັດຄວາມເປັນມາ

### A. ທັດສນະລວມກ່ຽວກັບການຮ່ວມມື ລະຫວ່າງ ເອດີບີ ແລະ ເອັນຈີໂອ

6. ເອດີບີໄດ້ຈໍາກັດການຮ່ວມມືກັບ ເອັນຈີໂອຈົນເຖິງໄລຍະກາງຂອງທົດສະວັດ 1980. ເນື່ອງຈາກມີການຮ່ວມມືເພີ້ມຂື້ນ, ເຖິງແນວໃດກໍ່ຕາມ, ເອດີບີເຫັນວ່າມີຄວາມຈໍາເປັນຕ້ອງມີ ແຜນນະໂຍບາຍສະເພາະ ແລະ ຖ້າເປັນໄປໄດ້ຄວນມີການດໍາເນີນງານຮ່ວມກັນ ໃນຂົງເຂດອື່ນໆ.

7. ໃນປີ 1987ເອດີບີ ໄດ້ ດັດປັບນະໂຍບາຍ ໂດຍຈັດຕັ້ງ ໂຄງຮ່າງການຮວ່ມມື ລະຫວ່າງ ເອດີບີ ແລະ ເອັນຈີໂອໃຫ້ກວ້າງຕື່ມ. ນະໂຍບານດັ່ງກ່າວ ໄດ້ແກ້ໄຂຂອບເຂດ ການພົວພັນ ແລະ ດໍາເນີນງານ ຮ່ວມກັນ ລະຫວ່າງສະຖາບັນ. ເຫັນວ່າການຮ່ວມມືກັບ ເອັນຈີໂອແມ່ນວິທີການນຶ່ງທີ່ສົ່ງເສີມການປະຕິບັດໂຄງການໃຫ້ມີປະສິດທິຜົນ ແລະ ໄດ້ຖະແຫຼງວ່າ ເອດີບີໄດ້ເສີມຂະຫຍາຍການດໍາເນີນງານໃຫ້ມີປະສິດທິຜົນ ໂດຍນໍາໃຊ້ຄວາມອາດສາມາດ ສະເພາະ ແລະ ຄວາມຊໍານິຊໍາຊານ ຂອງເອັນຈີໂອ.

8. ພາຍໃຕ້ນະໂຍບາຍ (1987), ຈຸດປະສົງຕົ້ນຕໍຂອງການຮ່ວມມື ລະຫວ່າງ ເອດີບີ ແລະ ເອັນຈີໂອ ແມ່ນແກ້ໄຂຄວາມຕ້ອງການອັນພື້ນຖານຂອງກຸ່ມຄົນທີ່ດ້ອຍໂອກາດໃນບັນດາປະເທດສະມາຊິກຂອງເອດີບີ, ແລະ ເພື່ອສົ່ງເສີມການປັບປຸງການຄຸ້ມຄອງ ແລະ ປົກປັກຮັກສາ ຊັບພຍາກອນທໍາມະຊາດ. ທັງນີ້ ໄດ້ກໍານົດກົນໄກ ເພື່ອສ້າງເງື່ອນໄຂໃຫ້ 3 ຝ່າຍ; ເອດີບີ, ລັດຖະບານ ແລະ ເອັນຈີໂອມີການຮ່ວມມືກັນກວ້າງຂວາງຂຶ້ນຕື່ມ; ແລະ ມີການແລກປ່ຽນທັດສນະກ່ຽວກັບການມີສ່ວນຮ່ວມຂອງເອັນຈີໂອໃນການດໍາເນີນງານຂອງເອດີບີ.

9. ໃນທົດສະວັດທີ່ຜ່ານມາ, ສະພາບການພັດທະນາໃນຂົງເຂດ ອາຊີ ປາຊີຟິກ ໄດ້ມີການປ່ຽນແປງ, ການດໍາເນີນງານຂອງເອດີບີ ແລະ ເອັນຈີໂອກໍ່ໄດ້ມີການປ່ຽນແປງເຊັ່ນດຽວກັນ. ເອດີບີໄດ້ຮັບຮອງແຜນຍຸດທະສາດການດໍາເນີນງານ ເພື່ອສົ່ງເສີມການປະສານງານ, ການເຕີບໂຕຂອງບັນດາໂຄງການພັດທະນາ ແລະຍັງສົ່ງເສີມບັນດາໂຄງການເຮັດວຽກກ່ຽວກັບການພັດທະນາມະນຸດ ແລະ ສັງຄົມ. ແລະການປົກປັກຮັກສາສະພາບແວດລ້ອມ. ເອັນຈີໂອ, ໃນເວລາດຽວກັນ, ໄດ້ສືບຕໍ່ ສ້າງຄວາມອາດສາມາດ, ບົດບາດ ແລະ ອິດທິພົນ ໃນການຂະບວນການພັດທະນາໃຫ້ຈະເລີນເຕີບໂຕ. ການປ່ຽນແປງເຫຼົ່ານີ້ ໄດ້ສົ່ງຜົນຕໍ່ການພົວພັນລະຫວ່າງເອດີບີ ແລະ ເອັນຈີໂອ.

10. ຍິ່ງກວ່ານັ້ນ, ຕ້ອງເອົາໃຈໃສ່ບາງອົງການເອັນຈີໂອ ແລະ ການດຳເນີນງານ ດ້ານພັດທະນາຂອງເອັນຈີໂອ, ວິທີການການຄັດຄ້ານຕ່າງໆຂອງ ເອັນຈີໂອກ່ຽວກັບການພັດທະນາໄດ້ປະກົດເດັ່ນຂື້ນໃນເຄືອຄ່າຍການ ພັດທະນາຂອງ ສ ກົນ. ການເຄື່ອນໄຫວຂອງເອັນຈີໂອ ປີ 1999 ກ່ຽວກັບການປົກປັກຮັກສາແຫຼ່ງນ້ຳໃນກອງປະຊຸມການຄ້າໂລກ ເຊິ່ງຈັດຢູ່ກຽວຊີອາໂຕໄດ້ກາຍເປັນເຫດການອັນສຳຄັນໃນກອງປະຊຸມສາກົນ. ສຳລັບ ເອດີບີ, ການເຄື່ອນໄຫວຂອງເອັນຈີໂອໃນກອງປະຊຸມປະຈຳປີຂອງເອດີບີ ໃນເດືອນພຶດສະພາ ປີ 2000 ທີ່ຊຽງໃໝ່ ໄດ້ປະກົດເດັ່ນຊັດຂື້ນ. ການພັດທະນາດັ່ງກ່າວ ໄດ້ເນັ້ນໜັກໃຫ້ເຫັນວ່າ ເອດີບີຈຳເປັນຕ້ອງປະສານງານ ບໍ່ພຽງແຕ່ກັບບັນດາອົງການເອັນຈີໂອ ທີ່ມີໃຫ້ຄວາມສົນໃຈຮ່ວມມື ປະຕິບັດໂຄງການເທົ່ານັ້ນ; ແຕ່ຍັງຕ້ອງຮ່ວມມືກັບ ເອັນຈີໂອ ເພື່ອຄັດຄ້ານ "ການປ່ຽນແປງໂລກຈັກກະວານ" ແລະ ຮຽກຮ້ອງໃຫ້ບັນດາສະຖາບັນການເງິນລວມທັງ ເອດີບີດັດແປງ ນະໂຍບາຍ ແລະ ການດຳເນີນງານເພື່ອຄວາມເປັນທຳຂອງສັງຄົມ.

## B. ນະໂຍບາຍ ໃໝ່ກ່ຽວກັບ ການຮ່ວມມື ກັບ ເອັນຈີໂອ

11. ການພັດທະນາເຫລົ່ານັ້ນ ເຮັດໃຫ້ເອດີບີມີການທົບທວນຍຸດທະສາດ 1997-2000 ແລະ ນະໂຍບາຍການເຮັດວຽກກັບ ເອັນຈີໂອຢ່າງຕໍ່ເນື່ອງນັບແຕ່ປີ 1997-2002. ໃນເດືອນເມສາ 1998, ເອດີບີໄດ້ຮັບຮອງນະໂຍບາຍການເຮັດວຽກກັບ ເອັນຈີໂອ[6], ນະໂຍບາຍດັ່ງກ່າວ, ມີຜົນບັງຄັບຈົນເຖິງປະຈຸບັນ, ໄດ້ຮັບຮູ້ຄວາມຫລາກຫລາຍຂອງບັນດາອົງການ ເອັນຈີໂອ ແລະ ໄດ້ກຳນົດ "ການພັດທະນາອົງການເອກະຊົນສາກົນ" ເຊັ່ນດຽວກັນພັດທະນາການຮ່ວມມືກັບອົງການມະຫາຊົນ. ນະໂຍບາຍຍັງໄດ້ໃຈ້ແຍກການພັດທະນາຂອງ ເອັນຈີໂອເປັນ 2 ປະເພດ, ປະເພດເຄື່ອນໄຫວກິດຈະກຳເພື່ອພັດທະນາ ແລະ ປະເພດທີ່ເຮັດວຽກງານເຜີຍແຜ່ເປັນໜ້າທີ່ຕົ້ນຕໍ.

12. ໃນປີ 1998 ນະໂຍບາຍໄດ້ແນະນຳໃຫ້ເອດີບີ ຂະຫຍາຍການຮ່ວມມືກັບ ເອັນຈີໂອ ໂດຍມີຈຸດມຸ່ງຫມາຍເຮັດໃຫ້ການບໍລິການຂອງ ເອດີບີມີຄຸນນະພາບ, ມີປະສິດທິພາບ, ຍືນຍົງ. ມັນຍັງຊຸກຍູ້ການຮວບລວມ ປະສົບການ,ຄວາມຮູ້ ແລະ ຄວາມຊຳນານຂອງ ເອັນຈີໂອປະສົມປະສານເຂົ້າໃນການດຳເນີນງານຂອງ ເອດີບີທັງນີ້, ໃຫ້ມີການຍົກເອົາບັນຫາ ແລະ ບຸລິມະສິດຕ່າງໆຂື້ນມາປຶກສາຫາລືໃນກອງປະຊຸມເອດີບີ ເພື່ອເຮັດໃຫ້ການປະຕິບັດກິດຈະກຳທີ່ເອດີບີໃຫ້ການຊ່ວຍເຫລືອມີປະສິດທິພາບສູງຂື້ນ.

13. ນະໂຍບາຍໄດ້ກຳນົດການຮ່ວມມືກັບ ເອັນຈີໂອເປັນ 3 ຂົງເຂດໃຫຍ່, ການຮ່ວມມືປະຕິບັດໂຄງການເງິນກູ້ຢືມ ແລະ ການຊ່ວຍເຫລືອລ້າດ້ານວິຊາການ, ການວາງແຜນງານ ແລະ ການພັດທະນານະໂຍບາຍຂອງປະເທດ. ມັນຊີ້ໃຫ້ເຫັນວ່າ ເອດີບີຈະເສີມສ້າງຄວາມອາດສາມາດດ້ານການຮ່ວມມືກັບ ເອັນຈີໂອ ເພື່ອສ້າງເງື່ອນໄຂໃຫ້ມີການພົວພັນກັບເອັນຈີໂອ ສະໜິດແໜ້ນຂື້ນຕື່ມ. ເພື່ອໃຫ້ບັນລຸຜົນນີ້ ແມ່ນຄວນມີການຝຶກອົບຮົມ ແລະພັດທະນາວິຊາການໃຫ້ພະນັກງານຕົນ.

14. ນະໂຍບາຍຍັງຢາກໃຫ້ ເອດີບີ ມີບົດບາດເປັນຜູ້ປະສານການຮ່ວມມືລະຫວ່າງ ເອດີບີ, ລັດຖະບານ ແລະອົງການມະຫາຊົນ. ໂດຍສະເພາະມັນໄດ້ລະບຸວ່າການຮ່ວມມືກັບເອັນຈີໂອ ໃນລະດັບປະເທດ ຕ້ອງດຳເນີນຢ່າງ ເປັນຂະບວນ ການ ເຊິ່ງຕ້ອງມີສ່ວນຮ່ວມຂອງທັງ 3 ຝ່າຍ ໃນການຈັດຕັ້ງປະຕິບັດ ເພື່ອເສີມຂະຫຍາຍສາຍພົວພັນຂອງທັງ 3

[6] ອາດີບີ 1998, *ການຮ່ວມມືລະຫວ່າງທະນາຄານພັດທະນາອາຊີ ແລະອົງການເອກະຊົນສາກົນ*, ມານີລາ

ຝ່າຍ. ນະໂຍບາຍປີ 1998 ຍັງເຫນັ້ນຫນັກເຖິງຄວາມຈຳເປັນຕ້ອງມີການພັດທະນາສະຖາບັນ ແລະສ້າງຄວາມອາດສາມາດຂອງລັດຖະບານ ແລະອົງການເອັນຈີໂອ.

## C. ຍຸດທະສາດການຫລຸດຜ່ອນຄວາມທຸກຈົນ

15. ໃນປີ 1999, ເອດີບີ ໄດ້ຮັບຮອງເອົາການຫລຸດຜ່ອນຄວາມທຸກຈົນເປັນຈຸດຫມາຍທີ່ສຳຄັນທີ່ສຸດ ແລະໄດ້ວາງຍຸດທະສາດການພັດທະນາຂົງເຂດໂດຍອີງຕາມຫລັກຫມັ້ນ 3 ຢ່າງທີ່ມີການພົວພັນ ເຊິ່ງກັນ ແລະກັນເຊັ່ນ: ການຂະຫຍາຍຕົວແບບຍືນຍົງ ເພື່ອຜົນປະໂຫຍດຂອງຄົນທຸກຈົນ, ການພັດທະນາສັງຄົມ ແລະ ການປົກ ຄອງທີ່ດີ. ຄຽງຄູ່ກັນນັ້ນ, ການມີສ່ວນຮ່ວມຂອງເອັນຈີໂອ ໃນແຕ່ລະວຽກທີ່ກ່າວຂ້າງເທິງນັ້ນກໍມີຄວາມສຳຄັນ ໃນວຽກງານ ພັດທະນາ. ເອດີບີເຫັນວ່າການປະຕິບັດງານຂອງເອັນຈີໂອ ແມ່ນມີອິດທິພົນຕໍ່ທຸກທັດສະນະ ການດຳ ເນີນງານທີ່ເອເດບີບໍ່ເຄີຍມີປະສົບການມາກ່ອນ, ດັ່ງນັ້ນ ຄວນສຸມທຸກຄວາມພະຍາຍາມ ເພື່ອເສີມ ຂະຫຍາຍ ການຮ່ວມມືຂອງ 3 ຝ່າຍ.

16. ໃນເດືອນພຶດສະພາ 2000, ທ່ານ ຕາດາວ ຊີໂນ, ປະທານທະນາຄານພັດທະນາອາຊີໄດ້ແຕ່ງຕັ້ງຄະນະກຳມະການຂັ້ນສູງ ເພື່ອທົບທວນແຜນການຮ່ວມມືກັບ ເອັນຈີໂອ ແລະ ພິຈາລະນາວ່າມີຄວາມພ້ອມ ຫຼືຍັງ ໃນການປະຕິບັດ ເພື່ອຫລຸດຜ່ອນຄວາມທຸກຈົນ. ຄະນະກຳມະການຂັ້ນສູງໄດ້ແຕ່ງຕັ້ງຄະນະກຳມະການສະເພາະກິດກະກຽມບົດສະເຫນີສະເພາະ. ເພື່ອປະກອບເຂົ້າໃນບົດລາຍງານສະບັບສົມບູນ. ບົດລາຍງານ ສະບັບດັ່ງກ່າວຈະຕ້ອງໄດ້ການປຶກສາທັງພາຍໃນພາຍນອກ ຈຶ່ງນຳສະເຫນີຂໍອະນຸມັດຈາກປະທານຂອງ ທະນາຄານອາຊີ. ຄນະກຳມະການສະເພາະກິດໄດ້ພິຈາລະນາປະສົບ ເຮັດວຽກຂອງເອດີບີຮ່ວມກັບ ເອັນຈີໂອ ແລະ ໄດ້ທົບທວນການດຳເນີນງານ ແລະປະເມີນຜົນການສຶກສາວິໃຈກ່ຽວກັບການຮ່ວມມືລະຫວ່າງ ເອດີບີ ແລະ ເອັນຈີໂອໃນໄລຍະຜ່ານມາ.

17. ຄະນະກຳມະການສະເພາະກິດໄດ້ແນະນຳວ່າ ເອດີບີ ຄວນເສີມຂະຫຍາຍແຜນການ ແລະຂະບວນການເພື່ອສະຫນັບສະຫນູນການປຶກສາຫາລື ແລະສົນທະນາກັບເອັນຈີໂອ ແລະ ເພື່ອແກ້ໄຂໃຫ້ທັນສະພາບການ, ແລະເຮັດໃຫ້ການສ້າງຕັ້ງສູນ ເອັນຈີໂອຢູ່ຫ້ອງການເອດີບີປະກົດເປັນຈິງ. ອີງຕາມຂໍ້ແນະນຳ ປີ 2001. ເອດີບີໄດ້ສ້າງຕັ້ງ ຕາຫນ່າງການພົວພັນເອັນຈີໂອໂດຍຈັດຕັ້ງສູນເອັນຈີໂອ ເຊິ່ງປະກອບດ້ວຍຕົວແທນຈາກບັນດາກົມຫ້ອງການທີ່ສັງກັດໃນເອດີບີ. ສູນເອັນຈີໂອ ເປັນສູນກາງການປະສານງານ ລະຫວ່າງ ເອດີບີ ແລະເອັນຈີໂອ, ທັງເປັນບ່ອນຕິດຕໍ່ສຳລັບບັນດາອົງການເອັນຈີໂອທີ່ຢາກຮູ້ຕື່ມ ກ່ຽວກັບການດຳເນີນງານຂອງເອດີບີ. ໂດຍສະເພາະມັນຍັງ ມີຫນ້າທີ່ ຮວບຮວມຄວາມຮູ້ ແລະປະສົບການຂອງ ເອັນຈີໂອມາໃຊ້ໃນການດຳເນີນງານຂອງ ເອດີບີ, ສືບຕໍ່ໃຫ້ມະຫາຊົນມີສ່ວນຮ່ວມໃນການສົນທະນາ, ກຳນົດ ແລະ ພັດທະນາແຜນຍຸດທະສາດພັນທະມິດ ແລະ ປັບປຸງຄວາມອາດສາມາດຂອງສະຖາບັນໃຫ້ມີຄວາມຫ້າວຫັນໃນການປະສານງານກັບເອັນຈີໂອ.

18. ນັບແຕ່ສູນເອັນຈີໂອ ໄດ້ສ້າງຕັ້ງຂຶ້ນ, ສູນດັ່ງກ່າວໄດ້ເລີ້ມພັດທະນາກົນໄກ ເພື່ອປັບປຸງການປຶກສາຫາລື ແລະສົນທະນາກັບເອັນຈີໂອ. ອັນນີ້ ໄດ້ນຳໄປສູ່ການ ພັດທະນາ, ປີ 2002, ລິເລີ້ມຈັດຕັ້ງການຊ່ວຍເຫລືອດ້ານວິ ຊາການໃນຂົງເຂດ (RETA) ໂດຍມີຕົວແທນຈາກຊຸມຊົນເອັນຈີໂອ, ອົງການມະຫາຊົນທົ່ວໄປ, ລັດຖະບານ ແລະ ພາກເອກະ ຊົນ ເຂົ້າຮ່ວມໂຄງຮ່າງການຮ່ວມມືກັບເອັນຈີໂອ. RETA 6021, "ການຊ່ວຍເຫລືອ ລັດຖະບານດ້ານເຕັກນິກແມ່ນ ເພື່ອກະກຽມໂຄງຮ່າງການຮ່ວມມືລະຫວ່າງເອດີບີ ແລະເອັນຈີໂອ" ເຊິ່ງໄດ້ຮັບການສະຫນັບ ສະຫນູນຈາກລັດຖະບານອິດສະຕາລີ ແລະລັດຖະບານອັງກິດ.

19. ແຜນຍຸດທະສາດໄລຍະກາງຂອງເອດີບີ (2001-2005) ຮັບຮູ້ຖ້າຢາກເພີ້ມປະສິດທິພາບການນຳໃຊ້ການຊ່ວຍເຫລືອດ້ານວິຊາການນັ້ນ ຮຽກຮ້ອງໃຫ້ ເອດີບີມີການພັດທະນາການພົວພັນກັບບັນດາເພື່ອນຮ່ວມງານ ທີ່ເຮັດວຽກດ້ານພັດທະນາໃຫ້ເຂັ້ມແຂງກວ່າເກົ່າ, ລວມທັງພັດທະນາການພົວພັນກັບບັນດາອົງການ ເອັນຈີໂອທີ່ເຮັດວຽກໃນຂົງເຂດດຽວກັນ. ແຜນຍຸດທະສາດໄລຍະກາງຍັງສະເຫນີໃຫ້ເຫັນເຖິງຄວາມຈຳເປັນຕ້ອງເຮັດວຽກຮ່ວມກັບເອັນຈີໂອ, ຍິ່ງກວ່ານັ້ນການປະຕິບັດບັນດາໂຄງການທີ່ສະຫນັບສະຫນູນ ໂດຍລັດຖະບານ ຍີ່ປຸ່ນ (JFPR) ຈະຕ້ອງຖືກພັດທະນາ. ແຜນຍຸດທະສາດໄລຍະຍາວຂອງ ເອດີບີຍັງເຫັນວ່າການເຮັດວຽກຮ່ວມກັບຜູ້ໃຫ້ທຶນຕ່າງໆ, ຮ່ວມກັບອົງການມະຫາຊົນ ແລະ ພາກເອກະຊົນແມ່ນມີຄວາມສຳຄັນຕໍ່ຂະບວນການພັດທະນາ. ທັງນີ້ ເພື່ອຮັບປະກັນການນຳໃຊ້ຊັບພະຍາກອນອັນຈຳກັດນັ້ນຢ່າງມີປະສິດທິຜົນ. ແຜນຍຸດທະສາດໄລຍະຍາວຍັງສະເຫນີວ່າ ເອດີບີຄວນພັດ ທະນາວິທີເຮັດວຽກກັບ ເອັນຈີໂອ, ອົງການມະຫາຊົນ ແລະ ພາກເອກະຊົນໃຫ້ໃກ້ສິດກວ່າເກົ່າ. ການພົວພັນລະຫວ່າງເພື່ອນຮ່ວມງານ, ໃນນີ້, ອາດແມ່ນການມີສ່ວນຮ່ວມໃນການສົນທະນາກ່ຽວກັບນະໂຍບາຍ ແລະ ການເງິນ, ມີສ່ວນຮ່ວມໂດຍກົງໃນການອອກ ແບບ ແລະປະຕິບັດໂຄງການ ແລະການຕິດຕາມ ແລະ ປະເມີນຜົນກະທົບຈາກການປະຕິບັດໂຄງການ.

**D. ການຮ່ວມມືລະຫວ່າງເອດີບີ ແລະເອັນຈີໂອ ໃນປະຈຸບັນ.**

20. ເອດີບີ ໄດ້ມີການຮ່ວມມືກັບເອັນຈີໂອ ໃນຫລາຍໂຄງການ. ພາກນີ້ ຄວນອ່ານຄຽງຄູ່ກັບຂໍ້ແນະນຳຕ່າງໆທີ່ຈະສະເຫນີໃນພາກຕໍ່ໄປ.

**1. ສ້າງເງື່ອນໄຂເຮັດໃຫ້ພາກສ່ວນກ່ຽວຂ້ອງມີສ່ວນຮ່ວມຫຼາຍຂຶ້ນ ໃນບັນດາກິດຈະກຳຂອງ ເອດີບີ**

21. ໃນຫລາຍທົດສະວັດທີ່ຜ່ານມາ, ເອັນຈີໂອ ມີບົດບາດສຳຄັນໃນຂະບວນການພັດທະນາ ແລະມັນກໍໄດ້ຮັບການເຫັນດີ ແລະຮັບຮອງຈາກບັນດາອົງການມະຫາຊົນ, ເອດີບີ, ທະນາຄານພັດທະນາລະຫວ່າງຊາດ ແລະບັນດາອົງການຊ່ວຍເຫລືອສາກົນ.

22. ເອັນຈີໂອ ມີຄວາມເຂັ້ມແຂງ ແລະມີຜົນງານຫລາຍດ້ານ ເຊິ່ງເປັນຂໍ້ດີຕໍ່ ໃຫ້ແກ້ຊຸມຊົນທີ່ໄດ້ຮັບຜົນກະທົບຈາກການປະຕິບັດໂຄງການ ແລະ ຕອບສະຫນອງຄວາມຕ້ອງການຂອງທ້ອງຖິ່ນ. ເອັນຈີໂອໄດ້ນຳໃຊ້ວິທີການພັດທະນາແບບສ້າງສັນ ເພື່ອຊ່ວຍໃຫ້ໂຄງການສາມາດປະຕິບັດໄດ້ຕາມຄາດຫມາຍ, ຊ່ວຍເຮັດໃຫ້ໂຄງການສາມາດດຳເນີນໄດ້ຢ່າງຕໍ່ເນື່ອງ, ເຜີຍແຜ່ ເພື່ອໃຫ້ມີຄວາມໂປ່ງໃສເພີ້ມຂຶ້ນ ແລະມີການປົກຄອງ ທີ່ດີ ແລະເປັນກະ ບອກສຽງໃຫ້ແກ່ກຸ່ມຄົນທີ່ດ້ອຍໂອກາດ.

23. ວິທີດຳເນີນງານແບບໃຫມ່ຂອງເອດີບີ, ໄດ້ຮັບຮອງໃນຕົ້ນປີ 2002, ແນະນຳໃຫ້ມີການປຶກສາຫາລືກັບ ເອັນຈີໂອໃນທຸກຂັ້ນຕອນຂອງການອອກແບບ ແລະປະຕິບັດໂຄງການ. ໃນຊ່ວງໄລຍະກະກຽມໂຄງການເງິນກູ້ ຫຼື ໂຄງການຊ່ວຍເຫລືອລ້າ, ພະນັກງານ ເອດີບີຄວນມີການປຶກສາຫາລືກັບ ເອັນຈີໂອຢ່າງເປັນປະຈຳ ເພື່ອເກັບກຳຂໍ້ມູນແລະຮັບຮູ້ຄວາມຄິດເຫັນຈາກຫຼາຍທັດສະນະ, ໂດຍສະເພາະຈາກບຸກຄົນ ຫຼື ຊຸມຊົນທີ່ໄດ້ຮັບຜົນກະທົບ ໂດຍກົງຈາກການປະຕິບັດໂຄງການສະຫນັບສະຫນູນຈາກເອດີບີ. ອີງຕາມສະພາບການ ແລະ ຄວາມເໝາະສົມ, ເອັນຈີໂອ ອາດຍັງເຮັດໜ້າທີ່ເປັນທີ່ປຶກສາເພື່ອຊ່ວຍໃນການປະຕິບັດໂຄງການເງິນກູ້ ແລະ ໂຄງການຊ່ວຍເຫລືອລ້າ. ຍິ່ງກວ່ານັ້ນ; ເອັນຈີໂອຄວນມີສ່ວນຮ່ວມໃນ ເວລາ ທີ່ພະນັກ ງານເອດີບີ ສຳພາດ, ປຶກສາຫາລືກັບພາກສ່ວນກ່ຽວຂ້ອງ ຫລືໃນການ ປະເມີນຜົນການ ດຳເນີນງານ ຂອງເອດີບີ.

24. ເອັນຈີໂອ ໄດ້ມີສ່ວນຮ່ວມໃນການປະຕິບັດໂຄງການເພີ້ມຂື້ນຈາກ 10% ໃນປີ 1990 ມາເປັນ 50% ໃນທົດສະຕະວັດຕໍ່ມາ. ການມີສ່ວນຮ່ວມດັ່ງກ່າວ ແມ່ນມາໃນຮູບແບບສາຍພົວ ພັນລະຫວ່າງຜູ້ໃຫ້ການສະຫນັບ ສະໜູນ. ທີ່ປຶກສາ, ເອັນຈີໂອ ຍັງມີສ່ວນຮ່ວມໃນການອອກແບບ, ຕິດຕາມໂຄງການ ເຊິ່ງບໍ່ແມ່ນເອດີບີໃຫ້ການຊ່ວຍ ເຫລືອໂດຍກົງດ້ານການເງິນ.

25. ກອງທຶນຊ່ວຍເຫລືອ ເພື່ອຫລຸດຜ່ອນຄວາມທຸກຈົນຂອງລັດຖະບານຍີ່ປຸ່ນ (JFPR) ໄດ້ສ້າງຕັ້ງຂື້ນໃນເດືອນພຶດສະພາ 2000, ເປັນກອງທຶນຊ່ວຍເຫລືອລ້າ ເພື່ອທົດລອງການປະຕິບັດໂຄງການໃນຮູບແບບໃໝ່ ທີ່ສ້າງ ສັນກວ່າເກົ່າ, ເປັນໂຄງການທີ່ມີສ່ວນຮ່ວມ ແລະຊ່ວຍຫລຸດຜ່ອນຄວາມທຸກຈົນຢ່າງໂດຍກົງ ແລະ ເປັນໂຄງ ການທີ່ພົວພັນ ແລະ ສົ່ງເສີມໂຄງການທີ່ເອດີບີ ໃຫ້ການສະຫນັບສະໜູນ. ໂຄງການເຫລົ່ານີ້ ສ່ວນຫລາຍໃຫ້ ເອັນຈີໂອ ເປັນຜູ້ວິເຄາະ, ຫລືອອກແບບ, ຫລືຄຸ້ມຄອງໂຄງການເອັນຈີໂອ ຈະຖືກແຕ່ງຕັ້ງ ໃຫ້ຮັບຜິດຊອບ ປະຕິບັດໂຄງການ, ເປັນຜູ້ຄຸ້ມຄອງໂຄງການ. ເອດີບີ, ລັດຖະບານ ແລະເອັນຈີໂອ ທັງ 3 ຝ່າຍ ກຳລັງສຶກສາ ວິທີເຮັດວຽກ ຮ່ວມກັນ ໃຫ້ດີຂື້ນກວ່າເກົ່າ, ຮ່ວມກັນຜ່ານຜ່າທຸກຄວາມຫຍຸ້ງຍາກ ແລະ ຮ່ວມກັນປະຕິບັດ ເພື່ອຜົນ ປະໂຫຍດຮ່ວມກັນ.

26. ເອັນຈີໂອໄດ້ມີສ່ວນຮ່ວມໃນຫຼາຍໂຄງການຂອງເອດີບີ ຊຶ່ງໄດ້ຮັບການຊ່ວຍເຫລືອ ຈາກຫລາຍປະເທດໂຄງການດັ່ງກ່າວມີກອງທຶນຫລຸດຜ່ອນຄວາມທຸກຈົນ ໂດຍແມ່ນລັດຖະບານອັງກິດໃຫ້ການຊ່ວຍເຫລືອ. ກອງທຶນຊ່ວຍເຫຼືອ ເພື່ອສ້າງຕັ້ງ ແລະ ປະຕິບັດແຜນຍຸດທະສາດຫລຸດຜ່ອນຄວາມທຸກຈົນຂອງປະເທດໂດຍ ແມ່ນ ລັດຖະບານໂຮນແລນໃຫ້ການຊ່ວຍເຫລືອ. ເອັນຈີໂອ ກຳລັງຂຽນບົດວິພາກ ເພື່ອຂໍການ ຊ່ວຍເຫລືອດ້ານການເງິນ (window) ປະຕິບັດໂຄງການທີ່ມີລັກສະນະສ້າງສັນ. ຍິ່ງກວ່ານັ້ນເອັນຈີໂອ ກຳລັງພັດທະນາປື້ມຄູ່ມືກ່ຽວກັບການມີສ່ວນຮ່ວມຂອງ ເອັນຈີໂອໃນການປະຕິບັດໂຄງການຕ່າງໆ, ອີງຕາມທັດສະນະສົ່ງເສີມການ ຮ່ວມມືກັບເອັນຈີໂອ ແບບເພື່ອນຮ່ວມງານ ແທນທີ່ຈະເປັນພຽງຜູ້ປະຕິບັດໂຄງການ.

27. ສ່ວນໃຫຍ່ ເອັນຈີໂອຈະໃຫ້ຂໍ້ມູນປະກອບເຂົ້າໃນການວາງແຜນງານຂອງເອດີບີ, ລວມທັງໂຄງການ ການປະເມີນຄວາມທຸກຈົນແບບມີສ່ວນຮ່ວມ (PPA), ວາງແຜນຍຸດທະສາດ ແລະໂຄງການສຳລັບປະເທດ. ການປຶກສາ ຫາລືກັບລັດຖະບານ, ເອັນຈີໂອ ແລະພາກສ່ວນອື່ນ ໄດ້ກາຍເປັນສ່ວນຫນຶ່ງຂອງຂະບວນການພັດທະນານະໂຍບາຍ ແລະຂໍ້ແນະນຳຂອງເອດີບີ ກ່ຽວກັບວຽກງານດ້ານພະລັງງານ, ສະພາບແວດລ້ອມ, ການກວດສອບ ແລະນ້ຳ. ການປຶກສາຫາລືກັບເອັນຈີໂອ ຍັງເປັນພາກສ່ວນສຳຄັນຂອງກອງປະຊຸມປະຈຳ ຂອງເອດີບີ, ໂດຍເປີດໂອກາດໃຫ້ ເອັນຈີໂອໄດ້ແລກປ່ຽນຄວາມຄິດຄວາມເຫັນກັບພະນັກງານຂັ້ນນຳຂອງເອດີ ບີ ກ່ຽວກັບນະໂຍບາຍ ແລະໂຄງການທີ່ກ່ຽວຂ້ອງໃນແຕ່ລະປະເທດ. ຕາງໜ້າຫ້ອງການຂອງເອດີບີ ປະຈຳແຕ່ລະປະເທດ ໄດ້ຈັດກອງ ປະຊຸມ ກັບ ເອັນຈີໂອ ຢ່າງເປັນປະຈຳ ເພື່ອປຶກສາຫາລືບັນຫາຕ່າງໆທີ່ມີການກ່ຽວພັນກັບເອັນຈີໂອ.

28. ໃນປີ 2002, ສູນເອັນຈີໂອ ໄດ້ກຳນົດການຈັດຕັ້ງກອງປະຊຸມພົບປະໃນທຸກໆ 5 ເດືອນໂດຍຫມູນວຽນລະຫວ່າງບັນດາອົງການ ເອັນຈີໂອໃນປະເທດອາຊຽນ. ກອງປະຊຸມດັ່ງກ່າວໄດ້ເປັນຂີດຫມາຍການເລີ້ມຕົ້ນ ແລະອາດກາຍເປັນລະບົບໃຫ້ພະນັກງານ ເອດີບີທີ່ຮັບຜິດຊອບວຽກງານ ເອັນຈີໂອໄດ້ເຮັດຫນ້າທີ່ນີ້ ໂດຍມີຈຸດປະສົງເສີມຂະຫຍາຍການຮ່ວມມືລະຫວ່າງເອດີບີ ແລະ ເອັນຈີໂອໃຫ້ເຂັ້ມແຂງຂື້ນຕື່ມ ແລະ ເສີມຂະຫຍາຍການແລກປ່ຽນພະນັກງານ ເອດີບີໄປເຮັດວຽກຢູ່ສຳນັກງານເອັນຈີໂອຕ່າງໆ.

## 2. ເສີມຂະຫຍາຍຄວາມໂປ່ງໃສແລະການປະສານງານເພື່ອໃຫ້ເຂົ້າເຖິງຂໍ້ມູນ ຂ່າວສານ.

29. ເອດີບີ ຮັບຮູ້ວ່າການພົວພັນທີ່ດີ ແມ່ນອົງປະກອບສຳຄັນສຳລັບການຮ່ວມມືກັບເອັນຈີໂອ. ເອດີບີ ໄດ້ປະຕິບັດຫລາຍບາດກ້າວ ເພື່ອປັບປຸງການເຜີຍແຜ່ຂໍ້ມູນຂ່າວສານ ແລະ ປັບປຸງການພົວພັນກັບບັນດາພາກສ່ວນທີ່ໃຫ້ຄວາມສົນໃຈຕໍ່ການດຳເນີນງານຂອງເອດີບີ.

30. ຕົວຢ່າງ: ຫ້ອງການ ຫຼື ຫ້ອງການຕາງໜ້າ ເອດີບີຢູ່ຫລາຍປະເທດໄດ້ເສີມຂະຫຍາຍຄວາມສາມາດຂອງຕົນໂດຍເປີດກ້ວາງໃຫ້ຂໍ້ມູນແກ່ອົງການ ເອັນຈີໂອ ແລະ ມະຫາຊົນທົ່ວໄປ. ການໃຫ້ຂໍ້ມູນຕ່າງປະກອບດ້ວຍ ຫລາຍວິທີດັ່ງນີ້: ຈົດໝາຍແຈ້ງຂ່າວ, ເວບໄຊ, ຫ້ອງສະໝຸດ, ແລະແຈກແຜ່ນພັບ. ໃນບາງໂອກາດກອງເລຂາປະຈຳສຳນັກງານໃຫຍ່ ເອດີບີ ແລະຕາງໜ້າສຳນັກງານຢູ່ຫລາຍປະເທດກໍ່ໄດ້ເຊື້ອເຊີນເອັນຈີໂອມາຮ່ວມກອງປະຊຸມສຳມະນາກ່ຽວກັບທັດສະນະຕ່າງໆກ່ຽວກັບການດຳເນີນງານຂອງເອດີບີ.

31. ໃນເດືອນ ພະຈິກ 2001, ເອດີບີໄດ້ພິມຈົດໝາຍແຈ້ງຂ່າວສະບັບທຳອິດກ່ຽວກັບ*ການພົວພັນລະຫວ່າງເພື່ອນຮ່ວມງານ* (Partnership Newsletter), ຈົດໝາຍ ເອເລັກໂຕຼນິກສຳລັບເອັນຈີໂອ. ມີການຈັດພິມ, ແຈກຢາຍ 6 ຄັ້ງຕໍ່ປີ, ຂໍ້ມູນຂ່າວສານກ່ຽວກັບການພັດທະນາ ນະໂຍບາຍ, ໂຄງການ, ກອງປະຊຸມ, ເອກະ ສານ, ທຶນການສຶກສາ ແລະຝຶກອົບຮົມຂອງເອດີບີ ໃນຂົງເຂດອາຊີປາຊີຟິກ. ວາລະສານ“ ເພື່ອນຮ່ວມງານ” ເປັນເອກະສານ ທີ່ມະ ຫາຊົນສາມາດອ່ານ ແລະ ນຳໃຊ້ໄດ້ [7].

32. ສູນເອັນຈີໂອຍັງໄດ້ສ້າງລະບົບສື່ສານກ່ຽວກັບແນວຄວາມຄິດ ແລະ ການຈັດຕັ້ງປະຕິບັດ ການຮ່ວມມືລະຫວ່າງ ເອດີບີ, ລັດຖະບານ ແລະເອັນຈີໂອໃນເວບໄຊຂອງເອດີບີ. ມັນໄດ້ອະທິບາຍກ່ຽວກັບການເຮັດວຽກຂອງເອດີບີຮ່ວມກັບ ເອັນຈີໂອ, ບົດລາຍງານກອງປະຊຸມ, ບົດລາຍງານປະຈຳປີກ່ຽວກັບການຮ່ວມມືກັບເອັນຈີໂອ, ການສຶກສາວິໃຈ, ຂ່າວຕ່າງໆ, ນະໂຍບາຍ, ຄຳປາໄສ ແລະເອກະສານຕ່າງໆກ່ຽວກັບການຮ່ວມມື ກັບເອັນຈີ ໂອ.

33. ສູນເອັນຈີໂອ ໄດ້ສ້າງຕັ້ງເງື່ອນໄຂໃຫ້ມະຫາຊົນສາມາດເຂົ້າເຖິງຂໍ້ມູນຂ່າວສານ ໂດຍໄດ້ສ້າງລະບົບສື່ສານເອເລັກໂຕຼນິກ, ngocoordinator@adb.org. ມີການກວດກາລະບົບດັ່ງກ່າວຢ່າງເປັນປະຈຳ ແລະ ໄດ້ຕອບບັນຫາຢ່າງທ່ວງທັນ.

34. ນະໂຍບາຍຂອງ ເອດີບີກ່ຽວກັບຂໍ້ມູນປິດລັບ ແລະເປີດເຜີຍແມ່ນ ເພື່ອສົ່ງເສີມການ ແລກປ່ຽນຂໍ້ມູນກ່ຽວກັບເອດີບີ ແລະການດຳເນີນງານ. ນະໂຍບາຍດັ່ງກ່າວ, ມີຜົນນຳໃຊ້ໃນປີ 1995, ມີຈຸດປະສົງຊຸກຍູ້ການອະພິປາຍ, ສົນທະນາກ່ຽວກັບນະໂຍບາຍ, ການດຳເນີນງານ, ເຜີຍແຜ່ຂ່າວສານ ແລະທັດສະນະຕ່າງໆ ຕໍ່ເຫດການ ແລະບັນຫາສຳຄັນຕ່າງໆ. ຫລັກການຕົ້ນຕໍຂອງນະໂຍບາຍນີ້ ຢາກໃຫ້ມີການເປີດເຜີຍຂໍ້ມູນຂ່າວສານ, ໃຫ້ມະຫາຊົນຮັບຊາບ. ເອກະສານດັ່ງກ່າວແມ່ນແຈກຢາຍໃຫ້ມະຫາຊົນ ຖ້າຕ້ອງການ, ຍົກເວັ້ນໃນກໍລະນີ ມີການຈຳກັດ ດ້ານກົດໝາຍ. ມີເອກະສານຈຳນວນຫລາຍ ເພື່ອແຈກຢາຍໃຫ້ມະຫາຊົນ ໂດຍເປີດຫໍສະໝຸດກວ່າ 160 ແຫ່ງ ແລະໃນປະຈຸບັນ ເອກກະສານ ກ່ຽວກັບເອັນຈີໂອ ກໍມີແຈກຢາຍ.

---

[7] ເມສາ 2002, ເອດີບີ ໄດ້ຈັດພິມແມ່ນພັບອະທິບາຍການຮ່ວມມືກັບເອັນຈີໂອ ແລະທິດທາງໃນການເຮັດວຽກ ຮ່ວມກັບເອັນຈີໂອ.

35. ຈາກການປຶກສາຫາລື ກັບຫ້ອງການພົວພັນຕ່າງປະເທດ, ເອດີບີໄດ້ອອກຖະແຫລງການກ່ຽວກັບການດຳເນີນງານຂອງ ເອດີບີຜ່ານສື່ຕ່າງໆ. ຖະແຫລງການດັ່ງກ່າວຊີ້ໃຫ້ເຫັນວ່າ ເອັນຈີໂອໄດ້ປະກອບສ່ວນເຂົ້າ ໃນການສ້າງຕັ້ງໂຄງການ ແລະວາງນະໂຍບາຍຂອງເອດີບີ, ແລະແມ່ນກະບອກສຽງອັນສຳຄັນ ເພື່ອເຜີຍແຜ່ໃຫ້ມະຫາຊົນ, ອົງການເອັນຈີໂອ, ຊຸມຊົນນັກທຸລະກິດ ແລະເພື່ອນຮ່ວມພັດທະນາດ້ວຍກັນຮັບຊາບຂໍ້ມູນກ່ຽວ ກັບກິດຈະກຳຂອງເອດີບີ.

### 3. ເອດີບີກຳລັງພັດທະນາຄວາມອາດສາມາດໃນການຮ່ວມມືກັບ ເອັນຈີໂອ.

36. ຫນ້າທີ່ຮັບຜິດຊອບຂອງສູນເອັນຈີໂອ ແມ່ນສ້າງໃຫ້ພະນັກງານ ເອດີບີ ມີຄວາມຮູ້ສຶກຕື່ນຕົວຕໍ່ບັນຫາ ແລະສິ່ງທີ່ຫນ້າສົນໃຈກ່ຽວກັບ ເອັນຈີໂອ, ແລະຍັງພັດທະນາຄວາມອາດສາມາດຂອງພະນັກງານດ້ານການຮ່ວມມືກັບຕົວແທນຂອງ ເອັນຈີໂອໃຫ້ມີປະສິດທິພາບ. ໃນປີ 2002, ສູນເອັນຈີໂອ ຮ່ວມກັບພະແນກງົບປະມານ, ບຸກຄະລາກອນ ແລະຊັບພະຍາກອນໄດ້ຈັດການຝຶກອົບຮົມ ກ່ຽວກັບການເຮັດວຽກກັບເອັນຈີໂອ 4 ຄັ້ງ ທັງຢູ່ ສຳນັກໃຫຍ່ ແລະຢູ່ຫ້ອງການປະຈຳປະເທດ. ຄາດວ່າຈະເລີ້ມມີການຝຶກອົບຮົມໄລຍະຍາວ ເຊິ່ງໃນບາງໂອກາດ ກໍໄດ້ມີການເຊີນຕົວແທນຂອງ ເອັນຈີໂອ ແລະລັດຖະບານເຂົ້າຮ່ວມການຝຶກອົບຮົມດັ່ງກ່າວ. ໃນປີ 2002 ກໍຍັງມີ ການຝຶກອົບຮົມກ່ຽວກັບການພັດທະນາແບບສ່ວນຮ່ວມໃຫ້ແກ່ພະນັກງານ ເອດີບີ.

37. ເອດີບີ ໄດ້ຈັດຕັ້ງຕາຫນ່າງເຮັດວຽກກັບເອັນຈີໂອ ພາຍໃນສຳນັກງານ ໂດຍແຕ່ງຕັ້ງພະນັກງານຮັບຜິດຊອບໂດຍກົງໃນ 5 ກົມ, ປະຈຳສຳນັກງານ ແລະຫ້ອງການຕ່າງຫນ້າ, ແລະຫນ່ວຍງານອື່ນໆ ນັບແຕ່ປີ 2001 ສູນເອັນຈີໂອໄດ້ຖືກສ້າງຕັ້ງຂຶ້ນ ເພື່ອປັບປຸງການປະສານກັບ ເອັນຈີໂອໃຫ້ແຫນ້ນແຟ້ນ ໂດຍໄດ້ແຕ່ງຕັ້ງ ພະນັກງານຮັບຜິດຊອບໂດຍກົງ (3 ຄົນ ໃນການປະສານງານກັບ ເອັນຈີໂອ ແລະແຕ່ງຕັ້ງພະນັກງານຕິດຕໍ່ວຽກງານກັບ ຢູເອັນ ໂດຍແບ່ງເວລາ ເມື່ອຮັບຜິດຊອບທັງ 2 ຫ້ອງການ ລະຫວ່າງຫ້ອງການພົວພັນຕ່າງປະ ເທດ ແລະສູນເອັນຈີໂອ.

### 4. ສ້າງຄວາມອາດສາມາດ ແລະໃຫ້ການສະຫນັບສະຫນູນ ເອັນຈີໂອ.

38. ເອດີບີ ໄດ້ສົ່ງເສີມການສ້າງຄວາມອາດສາມາດຂອງ ເອັນຈີໂອ ໂດຍຈັດກອງປະຊຸມ, ສຳມະນາ ແລະຝຶກອົບຮົມ ເພື່ອແລກປ່ຽນບົດຮຽນ. ບັນດາໂຄງການກູ້ຢືມ, ແລະໂຄງການຊ່ວຍເຫຼືອດ້ານວິຊາການຍັງໄດ້ລວມເອົາກິດຈະກຳຕ່າງໆ ເພື່ອເສີມຂະຫຍາຍການຄຸ້ມຄອງ ແລະການດຳເນີນງານຂອງເອັນຈີໂອ. ຕົວຢ່າງ, ໄດ້ໃຫ້ການຊ່ວຍເຫລືອທຶນໃຫ້ພະນັກງານຍິງ 180 ຄົນ ຈາກອົງການ ເອັນຈີໂອໃນ 7 ປະເທດ ພັດທະນາລະບົບການວາງແຜນ, ຕິດຕາມ ແລະປະເມີນຜົນໂຄງການ. ເອດີບີຮ່ວມກັບອົງການອາຊີ ປາຊີຟິກ ຟີລັນໂຕຼປີ້ ຄອນໂຊຊຽມ ໃຫ້ການສະຫນັບສະຫນູນ ພິມວາລະສານ “ລົງທຶນເພື່ອເຮົາເອງ”: “ການໃຫ້ ແລະຊອກຫາ ແຫຼ່ງທຶນໃນອາຊີ” ເຊິ່ງຈັດພິມໃນປີ 2001. ວາລະສານ ດັ່ງກ່າວ ແມ່ນຂຽນໂດຍເອັນຈີໂອ ໂດຍມີຈຸດ ປະສົງ ສົ່ງເສີມ ບັນດາອົງການເອັນຈີໂອ ໃນອາຊີ ປາຊີຟິກ ເພື່ອຊອກຫາແຫລ່ງທຶນ. ກິດຈະກຳ ສ້າງ ຄວາມອາດສາມາດຕ່າງໆ ແມ່ນກຳລັງປະຕິບັດ ແລະຈະຢູ່ໃນແຜນການຊ່ວຍເຫລືອບັນດາປະເທດສະ ມາຊິກທີ່ ກຳລັງພັດທະນາ.

### 5. ເສີມຂະຫຍາຍການຮ່ວມມື ແລະ ການຊ່ວຍເຫຼືອເຊິ່ງກັນ ແລະ ກັນ

39. ນະໂຍບາຍປີ 1998 ກ່ຽວກັບການຮ່ວມມືກັບອົງການເອກະຊົນສາກົນ (ເອັນຈີໂອ) ສະເຫນີ ”ຈະຕ້ອງມີການພັດທະນາສະຖາບັນ ແລະສ້າງຄວາມອາດສາມາດຕ່າງໆ ທີ່ກ່ຽວກັບເອັນຈີໂອ ໃຫ້ແກ່ພະນັກງານລັດ”

ນະໂຍບາຍຍັງຊີ້ໃຫ້ເຫັນວ່າ" ການຮ່ວມມືກັບ ເອັນຈີໂອໃນລະດັບຊາດ ຄວນດຳເນີນຢ່າງເປັນຂະບວນ ໂດຍມີສ່ວນຮ່ວມຈາກເອດີບີ, ລັດຖະບານ ແລະເອັນຈີໂອ ເພື່ອ, ແລະເອດີບີ ຈະເຮັດໜ້າທີ່ ເພື່ອເສີມຂະຫຍາຍສາຍພົວພັນລະຫວ່າງ 3 ຝ່າຍ ເອດີບີ, ລັດຖະບານ ແລະເອັນຈີໂອ."[8] ໃນຫຼາຍສະພາບທີ່ແຕກຕ່າງກັນ, ເອດີບີ ພະຍາຍາມໃຫ້ມີການຮ່ວມມື ລະຫວ່າງລັດຖະບານ, ແລະເອັນຈີໂອ ໃນບັນດາປະເທດສະມາຊິກທີ່ກຳລັງພັດທະນາ (DMC) ແລະເຂົ້າຮ່ວມໃນການອອກແບບ ແລະປະຕິບັດໂຄງການທີ່ເອດີບີ ໃຫ້ການສະໜັບສະໜູນ ແລະໃນການປະເມີນຄວາມທຸກຈົນເພື່ອວາງແຜນຍຸດທະສາດຂອງປະເທດ. ໃນບາງໂອກາດ, ພະນັກງານ ເອດີບີໄດ້ພົບປະກັບ ລັດຖະບານ, ເອັນຈີໂອ ຫຼື ຕົວແທນຂອງຊຸມຊົນ ເພື່ອຊ່ວຍ ແກ້ໄຂບັນຫາຕ່າງໆ ທັງນີ ເພື່ອປັບປຸງ ຄວາມເຂົ້າໃຈ ເຊິ່ງກັນ ແລະກັນ ແລະຊ່ວຍກັນແກ້ໄຂບັນຫາດັ່ງກ່າວ.

### 6. ເສີມຂະຫຍາຍການຮ່ວມມື

40. ເອດີບີໄດ້ຂະຫຍາຍບາດກ້າວໃນການຮ່ວມມືກັບບັນດາເອັນຈີໂອ ທີ່ເຮັດ ວຽກດ້ານພັດທະນາ ຢ່າງເລິກເຊິ່ງ ແລະກ້ວາງຂວາງ. ຄວາມຄືບໜ້າໃນການຮ່ວມມືໄດ້ສະແດງໃຫ້ເຫັນຢ່າງຈະແຈ້ງໃນໄລຍະ 2-3 ທີ່ຜ່ານມາ. ເຖິງວ່າ ເອັນຈີໂອ ໄດ້ນຳເອົາຄວາມຊຳນິຊຳນານ ແລະຄວາມອາດສາມາດປະກອບສ່ວນເຂົ້າໃນການດຳເນີນ ງານຂອງ ເອດີບີ, ແຕ່ ເອດີບີຕ້ອງເຮັດອີກຫລາຍຢ່າງ ຈຶ່ງຈະໄດ້ຮັບຜົນປະໂຫຍດຈາກການຮ່ວມມືນັ້ນຢ່າງເຕັມປ່ຽມ. ພາຍໃຕ້ໂຄງຮ່າງການຮ່ວມມືສະບັບນີ້, ແນະນຳວ່າທຸກໆກິດຈະກຳ ຈະຕ້ອງປະຕິບັດໃນຮູບແບບດຽວກັນ. ອີງຕາມປະສົບການທີ່ຜ່ານມາ, ຈະມີການປັບປຸງການປະສານງານລະຫວ່າງ ເອດີບີ ແລະ ເອັນຈີໂອ ໂດຍພັດທະ ນາຄວາມອາດສາມາດຂອງສະຖາບັນ ແລະຄວາມຮູ້ກ່ຽວກັບວິທີປະສານງານ ກັບ ເອັນຈີໂອ.

## E. ພັດທະນາໂຄງຮ່າງການຮ່ວມມື.

41. ໂຄງຮ່າງການຮ່ວມມືສະບັບນີ້ ແມ່ນຜົນໄດ້ຮັບອັນທຳອິດຈາກໂຄງການ RETA 6021 ເຊິ່ງເປີດກ້ວາງການສົນທະນາລະຫວ່າງ ບັນດາຜູ້ທີ່ມີສ່ວນຮ່ວມ. ຕິດຕາມດ້ວຍການຈັດຕັ້ງກອງປະຊຸມປຶກສາຫາລືຫລາຍຄັ້ງ ໂດຍມີຕົວແທນຈາກ ເອດີບີ ແລະ ຊຸມຊົນເອັນຈີໂອ, ລັດຖະບານ ແລະພາກເອກະຊົນຈາກຫລາຍປະ ເທດໃນອາຊີ ປາຊີຟິກເຂົ້າຮ່ວມ ແລະ ໄດ້ເປັນເອກະພາບກັນກ່ຽວກັບວິທີການຊ່ວຍເຫລືອ ເຊິ່ງກັນ ແລະກັນ ເພື່ອຫລຸດ ຜ່ອນຄວາມທຸກຈົນ. ເອກະສານຊ້ອນທ້າຍ ສະເໜີຂະບວນການປຶກສາຫາລື.

## III. ວິໃສທັດ

42. ໂຄງຮ່າງການຮ່ວມມື ລະຫວ່າງ ເອດີບີ, ລັດຖະບານ ແລະເອັນຈີໂອ ຮັບຮູ້ວ່າ 3 ຝ່າຍໄດ້ປະຕິບັດໜ້າທີ່ສຳຄັນ ແລະຖືກຕ້ອງຢ່າງສົມບູນໃນຂະບວນການພັດທະນາ, ແລະໄດ້ປະກອບສ່ວນອັນສຳຄັນໃນການຫຼຸດ ຜ່ອນຄວາມທຸກຈົນ ໂດຍມີການພັດທະນາແບບຍືນຍົງສຳລັບຜູ້ທຸກ, ພັດທະນາສັງຄົມ ແລະການປົກຄອງ ທີ່ດີ. ການຈະເສີມຂະຫຍາຍການພົວພັນ ເຊິ່ງກັນ ແລະກັນຢ່າງມີປະສິດທິຜົນ ແມ່ນມີຄວາມສຳຄັນ ຕໍ່ທຸກ ຄວາມ ພະຍາຍາມ ເພື່ອຫລຸດຜ່ອນຄວາມທຸກຈົນ

---

[8] ເອດີບີ 1998 *ການຮ່ວມມືລະຫວ່າງທະນາຄານພັດທະນາອາຊີ ແລະອົງການເອກະຊົນສາກົນ*, ໜ້າ 34 ມາ ນີລາ.

43. ການຮ່ວມມືເຊິ່ງກັນ ແລະກັນ ຕ້ອງອີງໃສ່ຄວາມເຂົ້າໃຈ ແລະມີຄວາມມຸ່ງຫວັງຮ່ວມກັນ ໂດຍແຕ່ລະຝ່າຍມີອິດທິພົນຕໍ່ການປະຕິບັດເຖິງວ່າສາຍພົວພັນລະຫວ່າງ 3 ຝ່າຍບໍ່ທັນດຸ່ນດ່ຽງ. ຄວາມບໍ່ດຸ່ນດ່ຽງນີ້ແມ່ນບໍ່ມີຜົນກະທົບຕໍ່ການ ປະກອບ ສ່ວນຂອງເອັນຈີໂອ ໃນການພັດທະນາໃຫ້ມີປະສິດທິຜົນ ແລະຍືນຍົງ.

44. ຍ້ອນມີລະບົບການປະສານກັບ ເອັນຈີໂອຫລາຍຂຶ້ນ, ເອດີບີ ແລະລັດຖະບານໄດ້ເພີ້ມຄວາມພະຍາຍາມໃນການຫຼຸດຜ່ອນຄວາມທຸກຈົນ. ຍິ່ງໄປກວ່ານັ້ນ, ໂຄງຮ່າງການຮ່ມມືຈະສ້າງເງື່ອນໄຂໃຫ້ມີການຮ່ວມມືກັນຫລາຍຂື້ນ, ການສະໜັບສະໜູນນະໂຍບາຍ, ການປະຕິບັດແຜນງານແລະໂຄງການດີຂຶ້ນນັ້ນ ຈະສະທ້ອນໃຫ້ເຫັນເຖິງຄວາມສົນໃຈ ແລະຄວາມອາດສາມາດຂອງທັງ 3 ຝ່າຍ.

45. ວິໃສທັດຂອງໂຄງຮ່າງແມ່ນເຮັດໃຫ້ສາຍພົວພັນລະຫວ່າງ 3 ຝ່າຍ ເອັນຈີໂອ, ລັດຖະບານ ແລະເອດີບີແໜ້ນແຟ້ນຂຶ້ນຕື່ມ, ຢາກໃຫ້ແຕ່ລະຝ່າຍສະແດງບົດບາດທີ່ເດັ່ນຂອງຕົນໃນຂະບວນການພັດທະນາ, ຮັບຮູ້ວ່າສາຍພົວພັນລະຫວ່າງ 3 ຝ່າຍ ຈະບໍ່ສະເໝີກັນ, ຈຸດປະສົງທຳອິດ ແມ່ນຕ້ອງການເຮັດໃຫ້ສາຍພົວພັນ ລະຫວ່າງ ເອດີບີ ແລະເອັນຈີໂອ, ລະຫວ່າງ ເອັນຈີໂອ ແລະລັດຖະບານເຂັ້ມແຂງຂຶ້ນຕື່ມ. ການຮ່ວມມືທີ່ເຂັ້ມແຂງຈະຊ່ວຍເສີມຂະຫຍາຍຂະບວນການພັດທະນາ, ເຮັດໃຫ້ການພັດທະນາມີປະສິດທິຜົນດີກວ່າເກົ່າ; ເຊັ່ນດຽວກັນການມີສ່ວນຮ່ວມຂອງລັດຖະບານຫລາຍຂຶ້ນ.

46. ເອດີບີສາມາດເຮັດບົດບາດອັນສຳຄັນໃນການເສີມຂະຫຍາຍການເຮັດວຽກຮ່ວມກັນລະຫວ່າງ ເອັນຈີໂອ ແລະ ລັດຖະບານ, ແລະປັບປຸງການພັດທະນາຂອງຕົນໃຫ້ມີປະສິດທິພາບ ໂດຍເພີ້ມການຮ່ວມມືກັບເອັນຈີໂອ.

47. ຈຸດປະສົງລວມຂອງການຮ່ວມມືລະຫ່ວາງເອດີບີ-ລັດຖະບານ-ເອັນຈີໂອ:ໂຄງຮ່າງການດຳເນີນງານແມ່ນດັ່ງຕໍ່ໄປນີ້:

> ***ການປັບປຸງການຮ່ວມມືລະຫ່ວາງທະນາຄານພັດທະນາອາຊີ, ເອັນຈີໂອ ແລະ ລັດຖະບານແມ່ນເພື່ອຫຼຸດຜ່ອນ ຄວາມ ທຸກຈົນໃນຂົງເຂດອາຊີ ປາຊີຟິກ ໂດຍຮ່ວມກັນສົ່ງເສີມການຂະຫຍາຍໂຕແບບຍືນຍົງເພື່ອຄົນທຸກ, ພັດທະ ນາສັງຄົມ ແລະມີການປົກຄອງທີ່ດີ.***

## IV. ບັນດາ ແລະສິ່ງທ້າທາຍຕ່າງໆ.

48. ການປຶກສາຫາລື ແລະການວິໄຈໃນຊຸມປີທີ່ຜ່ານມາ[9] ໄດ້ສະແດງໃຫ້ເຫັນບັນຫາ ແລະສິ່ງທ້າທາຍສຳລັບການຮ່ວມມືລະຫວ່າງ ເອດີບີ, ລັດຖະບານ-ເອັນຈີໂອ.

---

[9] (i) ການປຶກສາໃນກຸ່ມນ້ອຍທີ່ກອງປະຊຸມພາກພື້ນ ແລະກອງປະຊຸມກະກຽມຂຽນບົດລາຍງານ ຊຶ່ງຈັດຢູ່ສຳ ນັກງານໃຫຍ່ຂອງເອດີບີ (ພຶດຈິກກາ 2002 ); (ii) ສະເໜີຂໍ້ມູນຂອງ ເອດີບີ ກ່ຽວກັບການຮ່ວມມືລະຫວ່າງ ເອດີບີ ແລະເອັນຈີໂອ ໃນເມື່ອກ່ອນ, ກອງປະຊຸມເອັນຈີໂອ ກ່ຽວກັບການປະຕິບັດງານຂອງເອດີບີ (ພຶດສະຈິກາ 2002); (iii) ກອງປະຊຸມປຶກສາຫາລື ທັງໃນລະດັບປະເທດ ແລະລະດັບຂົງເຂດຍ່ອຍ (ມິຖຸນາ - ຕຸລາ 2002); (iv) ຂໍ້ແນະນຳຂອງຜູ້ທີ່ເຂົ້າຮ່ວມໃນ ການກອງປະຊຸມເປີດກ້ວາງກ່ຽວກັບ ເອັນຈີໂອໃນກອງປະຊຸມປະຈຳປີຄັ້ງທີ 35 ຂອງເອດີບີ, ຈັດທີ່ຊຽງຣາຍ (ພຶດສະພາ 2002), (v) *ຂໍ້ແນະນຳ ເພື່ອເສີມຂະຫຍາຍການປຶກສາຫລື ແລະ ຮ່ວມມືລະຫວ່າງເອດີບີ ແລະເອັນຈີໂອ* , ບົດລາຍງານຂອງເອດີບີ ສຳລັບການລວມຮ່ວມບັນດາ ອົງການເອັນຈີໂອ ໃນອາຊີ ເພື່ອ ການປັບປຸງການຈັດແບ່ງທີ່ດິນ ແລະການພັດທະນາຊົນນະບົດ( ມີນາ 2002); (vi) ເອດີບີ, *ບົດລາຍງານຂອງຄະນະກຳມະການສະເພາະກິດ ກ່ຽວກັບກຳນົດສະຖາບັນເພື່ອການຮ່ວມມືກັບ ອົງການເອກະຊົນສາກົນ* (ກັນຍາ 2001); (vii) “ຈັດຕັ້ງສູນເອັນຈີ3ອ ໃໝ່ທີ່ສຳນັກງານ ເອດີບີ” ກອງປະຊຸມປຶກສາຫາລື ເພື່ອທົບຄວນ 01-17, ກອງປະຊຸມປຶກສາຫາລືເອັນຈີໂອ ກ່ຽວກັບການປະຕິບັດງານຂອງເອດີບີ (ເມສາ 2001); ແລະ (viii) ເອດີບີ, *ການວິໃຈປະເມີນຜົນສະ ເພາະກ່ຽວກັບ*

## A. ຈຳເປັນຕ້ອງໃຫ້ພາກສ່ວນກ່ຽວຂ້ອງມີສ່ວນຮ່ວມຫລາຍຂຶ້ນໃນໂຄງການທີ່ເອດີບີໃຫ້ ການ ສະໜັບສະໜູນ.

### 1. ບັນດາໂຄງການ.

49. ຄວນເພີ້ມການມີສ່ວນຮ່ວມຂອງ ເອັນຈີໂອໃນຂະບວນການປະຕິບັດໂຄງການ. ຄວນໃຫ້ຄວາມສົນໃຈ ໂດຍສະເພາະ ໃນການຮ່ວມມືກັບ ເອັນຈີໂອ ແລະຊຸມຊົນທີ່ໄດ້ຮັບຜົນກະທົບຈາກການອອກແບບໂຄງການທີ່ ເອດີບີໃຫ້ການຊ່ວຍເຫລືອ, ແລະເພີ້ມການປະສານງານລະຫວ່າງ ເອັນຈີໂອ ແລະລັດຖະບານ ໃນເວລາພິຈາລະນາ ໂຄງການ. ເອັນຈີໂອ ບໍ່ພຽງແຕ່ເຮັດໜ້າທີ່ເປັນທີ່ປຶກສາໃນການອອກແບບໂຄງການ ແຕ່ຍັງຊ່ວຍສ້າງ ຄວາມຮູ້ສຶກຕື່ນຕົວ ແລະເຜີຍແຜ່ຂໍ້ມູນຂ່າວສານ, ແລະຊ່ວຍສ້າງເງື່ອນໄຂເຮັດໃຫ້ມີຄວາມເປັນເອກະພາບ ກັນ ລະຫວ່າງ ພາກສ່ວນກ່ຽວຂ້ອງ.

50. ເອັນຈີໂອຍັງມີຄວາມຕັ້ງໃຈຢາກປັບປຸງນະໂຍບາຍ ການຮ່ວມມືລະຫວ່າງລັດຖະບານ ແລະສະຖາບັນການເງິນສາກົນ. ເອັນຈີໂອສະແດງຄວາມເປັນຫ່ວງຕໍ່ນະໂຍບາຍການກູ້ຢືມ (policy-based lending) ແລະການກູ້ຢືມແບບມີເງື່ອນໄຂ ເຊິ່ງຄ້າຍຄືວ່າຈະມີຜົນກະທົບຕໍ່ກຸ່ມຄົນ ເນື່ອງຈາກບໍ່ໃຫ້ມະຫາຊົນ ແລະເອັນຈີໂອ ມີສ່ວນຮ່ວມ ແລະບໍ່ແຈ້ງໃຫ້ຮູ້ຜົນການອະພິປາຍກ່ຽວກັບການປັບປຸງມາດຕະການ. ຈຸດປະສົງຂອງການແລກປ່ຽນ ຂໍ້ມູນຂ່າວສານແມ່ນເພື່ອຫຼຸດຜ່ອນ ບັນຫາທີ່ກ່າວຂ້າງເທິງໃຫ້ຈັດມີກອງປະຊຸມພົບປະ ລະຫວ່າງ ຜູ້ນຳທີ່ສຳຄັນ ເພື່ອ ປຶກສາຫາລື.

51. ຍິ່ງໄປກວ່ານັ້ນ, ເຖິງວ່າ ເອດີບີໄດ້ສ້າງຕັ້ງລະບຽບຕິດຕາມ ແລະປະເມີນຜົນການປະຕິບັດໂຄງການ, ລະບຽບການເຫລົ່ານັ້ນ ບາງຄັ້ງກໍບໍ່ໄດ້ກວມເອົາການມີສ່ວນຮ່ວມຂອງປະຊາຊົນຜູ້ທີ່ຖືກຜົນກະທົບ, ກຸ່ມເປົ້າຫມາຍສະເພາະ, ແລະຜູ້ທີ່ມີສ່ວນຮ່ວມອື່ນໆ. ເອດີບີ ສາມາດປັບປຸງການຕິດຕາມ ແລະປະເມີນຜົນການປະຕິບັດງານ ໂດຍໃຫ້ກຸ່ມຄົນເຫລົ່ານັ້ນມີສ່ວນຮ່ວມ. ໃນຄະນະດຽວກັນ, ຖ້າເປີດກ້ວາງໃຫ້ກຸ່ມຄົນເຫລົ່ານັ້ນປະກອບສ່ວນໃນການຕິດຕາມ ແລະປະເມີນຜົນ ແມ່ນສາມາດເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບການຕິດຕາມ ແລະປະເມີນຜົນການປະຕິບັດງານຂອງ ເອດີບີ ເຊັ່ນດຽວກັບການພົບເຫັນບັນຫາອັນພື້ນຖານຂອງການ ປະຕິ ບັດໂຄງການ. ການຊຸກຍູ້ໃຫ້ມີຕົວແທນຂອງລັດຖະບານ ແລະອົງການມະຫາຊົນເຂົ້າຮ່ວມໃນຂະບວນ ການຕິດ ຕາມ ແລະປະ ເມີນຜົນ ແມ່ນມີຄວາມສຳຄັນ.

52. ການບໍ່ມີຖານຂໍ້ມູນທີ່ສາມາດນຳໃຊ້ໄດ້ຢ່າງງ່າຍດາຍ ແລະ ສະເພາະໂຄງການທີ່ກວມເອົາກິດຈະກຳທີ່ໄດ້ຮັບການສະນັບສະໜູນຈາກ ເອດີບີ ເປັນການຂັດຂວາງການມີສ່ວນຮ່ວມຂອງຜູ້ທີ່ມີສ່ວນກ່ຽວຂ້ອງໂດຍສະເພາະໃນດ້ານການຕິດຕາມໂຄງການ.

### 2. ການຂຶ້ນແຜນງານຕ່າງໆ

53. ຖ້າບັນດາ ເອັນຈີໂອຂັ້ນທ້ອງຖິ່ນ ແລະຂັ້ນປະເທດໄດ້ມີໂອກາດປະກອບສ່ວນໃນການຂຶ້ນແຜນງານການພັດທະນາຊາດ ແລະການຫລຸດຜ່ອນຄວາມທຸກຍາກລວມທັງແຜນຍຸດທະສາດຂອງປະເທດ ແຜນດັ່ງກ່າວຈະ ກ່າວເຖິງຫຼາຍປັດໃຈທີ່ກ່ຽວຂ້ອງ ແລະ ໄດ້ຮັບຜົນດີໂດຍນໍາໃຊ້ຄວາມຊໍານິຊໍານານ, ຄວາມຮູ້ ແລະ ເຄືອຂ່າຍຂອງ ເອັນຈີໂອ[10]

### 3. ນະໂຍບາຍຕ່າງໆ

54. ປະສົບການຜ່ານມາໄດ້ສະແດງໃຫ້ເຫັນວ່າ ການສ້າງນະໂຍບາຍທີ່ມີທັດສະນະລວມຈະໃຫ້ເຮັດກົດໝາຍ ແລະຂໍ້ກໍານົດມີປະສິດທິພາບ ແລະໄດ້ຮັບການສະໜັບສະໜູນຈາກສາທາລະນະຊົນ. ແຕ່ວ່າມີພຽງບາງລັດຖະບານທີ່ອານຸຍາດໃຫ້ບັນດາ ເອັນຈີໂອ ມີສ່ວນຮ່ວມໃນການກະກຽມນະໂຍບາຍອັນສໍາຄັນ, ກົດໝາຍ ແລະຂໍ້ກໍານົດທີ່ກ່ຽວຂ້ອງ. ປັດໃຈໜຶ່ງທີ່ເປັນການກີດກັ້ນການມີສ່ວນຮ່ວມຂອງ ເອັນຈີໂອໃນການພິຈາລະນານະໂຍບາຍ ແລະກົດໝາຍຂອງຊາດແມ່ນຍ້ອນ ເອັນຈີໂອ ບໍ່ມີຄວາມຄຸ້ນເຄີຍໃນຂັ້ນຕອນການສ້າງຕັ້ງນະໂຍບາຍ ແລະ ຂັ້ນຕອນການອອກກົດໝາຍຕ່າງໆຂອງລັດຖະບານ.

## B. ຄວາມຕ້ອງການທີ່ຈະຕ້ອງເສີມຂະຫຍາຍຄວາມໂປ່ງໃສ ແລະ ການປະສານງານກັນໃຫ້ສາມາດເຂົ້າເຖິງຂໍ້ມູນຂ່າວສານ

55. ກິດຈະກໍາຂອງ ເອດີບີ ກ່ຽວກັບການໃຫ້ຂໍ້ມູນຕໍ່ສາທາລະນະຊົນແມ່ນລວມທັງ ເວັບໄຊ້, ການພິມເອກະສານ, ການອອກຂ່າວ, ເຄືອຂ່າຍຫໍສະໝຸດ, ວີດີໂອ ແລະວິທີການສ້າງຈິດສໍານຶກອື່ນໆ. ເຖິງຢ່າງໃດກໍ່ຕາມ, ຄວາມພະຍາຍາມດັ່ງກ່າວນີ້, ຍັງມີຂໍ້ມູນບໍ່ພຽງພໍ, ສະນັ້ນຈຶ່ງມີຄວາມບໍ່ເຂົ້າໃຈກ່ຽວກັບວິທີການເຮັດວຽກຂອງ ເອດີບີໃນລະດັບປະເທດ. ມີຂໍ້ມູນຈໍາກັດທີ່ສຸດກ່ຽວກັບເອດີບີ ແລະ ວິທີການເຮັດວຽກຂອງ ເອດີບີ ທີ່ແປເປັນພາສາທ້ອງຖິ່ນ. ການບໍ່ມີເອກະສານເປັນພາສາທ້ອງຖິ່ນ ເປັນສ່ວນເຮັດໃຫ້ບໍ່ມີຈິດສໍານຶກ ແລະຮັບຮູ້ໂດຍກົງກ່ຽວກັບວິທີການເຮັດວຽກຂອງ ເອດີບີ. ເອກະສານນະໂຍບາຍ ແລະ ເອກະສານທີ່ກ່ຽວຂ້ອງກັບໂຄງການແມ່ນຈະຖືກແປເປັນບາງເອກະສານສະເພາະເທົ່ານັ້ນ ໂດຍສ່ວນໃຫຍ່ໄດ້ນໍາໃຊ້ທຶນຊ່ວຍເຫຼືອດ້ານເຕັກນິກຈາກ ເອດີບີ.

56. ເຊັ່ນດຽວກັນການຮັບຮູ້ກ່ຽວກັບຂັ້ນຕອນການຕັດສິນໃຈຂອງ ເອດີບີ ແລະໂຄງສ້າງຂອງ ເອດີບີຍັງຈໍາກັດ. ຕົວຢ່າງ, ໃນໄລຍະຜ່ານມາບໍ່ດົນນີ້ ເອດີບີໄດ້ມີການປຶກສາຫາລືຢ່າງກ້ວາງຂວາງກ່ຽວກັບນະໂຍບາຍຕ່າງໆ, ແຕ່ບໍ່ຈະແຈ້ງວ່າຜົນຂອງການປຶກສາຫາລືນັ້ນ ນໍາໄປໃຊ້ແນວໃດ ຫຼື ຂັ້ນຕອນການປັບປຸງເອກະສານສະບັບສົມບູນກ່ອນຈະສະເໜີໃຫ້ຄະນະປະທານຂອງ ເອດີບີ ເພື່ອຮັບຮອງເອົາ.

---

10 ວິທີການດໍາເນີນທຸລະກິດໃໝ່ຂອງ ເອດີບີ ມີຄວາມຕ້ອງການຢ່າງຊັດເຈນ ໃຫ້ມີການປຶກສາຫາລືກັບຜູ້ທີ່ມີສ່ວນກ່ຽວຂ້ອງ ລວມທັງຊຸມຊົນພົນລະເຮືອນໃນເວລາກະກຽມຮ່າງແຜນຍຸດທະສາດຂອງປະເທດ ແລະ ໃນການກະກຽມໂຄງການ. ການຈັດການປະສານງານດ້ານກອງທຶນພາຍນອກ ແລະ ການຮ່ວມມືໄດ້ກ່າວເຖິງ ວິທີການໃນການຮ່ວມມື ແລະ ປະສານງານກັບຜູ້ມີສ່ວນກ່ຽວຂ້ອງ ທາງດ້ານການພັດທະນາຂອງບັນດາປະເທດຊະມາຊິກທີ່ກໍາລັງພັດທະນາ ລວມທັງຊຸມຊົນພົນລະເຮືອນໃນການປະຕິບັດແຜນຍຸດທະສາດຂອງປະເທດ.

57. ຄວາມຮູ້ຂອງ ເອດີບີກ່ຽວກັບຂອບເຂດວຽກງານ ແລະການມີສ່ວນຮ່ວມໃນບັນຫາການພັດທະນາຕ່າງໆ, ຄວາມສຳພັນລະຫວ່າງເອັນຈີໂອ ແລະ ລັດຖະບານຕ່າງໆ ແລະ ຄວາມ ອາດສາມາດ ແລະ ຄວາມຊຳນິຊຳນານຂອງ ເອັນຈີໂອຍັງຈຳກັດ. ສະນັ້ນໃນກໍລະນີທີ່ ເອດີບີ ຈະຊອກຫາເພື່ອນຮ່ວມງານສະເພາະການປະຕິບັດ ກິດຈະກຳກ່ຽວກັບ ການພັດທະນາ, ຈະກ່ຽວກັບໂຄງການ ຫຼື ກ່ຽວກັບນະໂຍບາຍ, ເອດີບີຈະບໍ່ສາມາດຫາອົງການທີ່ເໝາະສົມໄດ້ ເຊິ່ງຈະ ສົ່ງຜົນກະທົບໂດຍລວມຕໍ່ໂຄງການ.

58. ເຖິງວ່າ ເອດີບີໄດ້ເຮັດວຽກຮ່ວມມືກັບບັນດາ ເອັນຈີໂອ ກິນກວ່າ 20 ປີແລ້ວ, ຄວາມອາດສາມາດໃນການຄຸ້ມ ຄອງ ແລະການແລກປ່ຽນຂໍ້ມູນກ່ຽວກັບການມີສ່ວນຮ່ວມຂອງ ເອັນຈີໂອໃນການດຳເນີນງານຂອງ ເອດີບີພ້ອມທັງບົດ ຮຽນຈາກໂຄງການທີ່ຜ່ານມາຍັງບໍ່ທັນໄດ້ປັບປຸງໃຫ້ດີເທື່ອ. ການບໍ່ມີ "ຄວາມຊົງຈຳຂອງສະຖາບັນ" ກ່ຽວກັບການຮ່ວມ ມືກັບ ເອັນຈີໂອເປັນການຈຳກັດຄວາມສາມາດຂອງ ເອດີບີໃນການຮຽນຮູ້ຈາກປະສົບການທີ່ຜ່ານມາ. ນອກຈາກນີ້ມີ ຄວາມຕ້ອງການທີ່ຈະຕ້ອງເກັບກຳ, ປະເມີນ ແລະເກັບກຳປະສົບການຈາກອົງການທີ່ໃຫ້ທຶນຕ່າງໆ ໃນການປະຕິບັດ ວຽກງານກັບ ເອັນຈີໂອ.

59. ໂດຍທົ່ວໄປແລ້ວ ເອດີບີຄວນເຮັດວຽກຢ່າງໃກ້ຊິດ ແລະຮຽນຮູ້ປະສົບການຂອງອົງການໃຫ້ທຶນອື່ນໃນການປະ ຕິບັດໂຄງຮ່າງການຮ່ວມມືລະຫວ່າງ ເອດີບີ-ເອັນຈີໂອ. ພາຍໃນປະເທດໃດໜຶ່ງ, ເອດີບີ ຄວນມີ ການພົວພັນກັບເຄືອ ຂ່າຍອົງການພັດທະນາສາກົນ ເພື່ອສ້າງເງື່ອນໄຂໃຫ້ແກ່ການແລກປ່ຽນວິທີການ ນຳໃຊ້ຂອງແຕ່ລະອົງການໃນການ ຮ່ວມມືກັບ ເອັນຈີໂອຢ່າງເປັນປົກກະຕິ.

## C. ຄວາມຕ້ອງການເສີມສ້າງຄວາມອາດສາມາດໃຫ້ເຂັ້ມແຂງເພື່ອສົ່ງເສີມການຮ່ວມມືລະຫ່ວາງພາກສ່ວນກ່ຽວ ຂ້ອງ

60. ເອດີບີ ແມ່ນໄດ້ຮັບພາລະສ້າງຄວາມເປັນເຈົ້າຂອງໂຄງການຊ່ວຍເຫຼືອຕ່າງໆຂອງປະເທດ. ຈຸດປະສົງນີ້ຈະ ບັນລຸໄດ້ດີກ່ວາເກົ່າ ຖ້າເອັນຈີໂອມີສ່ວນຮ່ວມໃນການພັດທະນາບັນດາໂຄງການດັ່ງກ່າວນີ້. ແຕ່ວ່າຄວາມອາດສາ ມາດໃນການເສີມສ້າງການຮ່ວມມືໃຫ້ເຂັ້ມແຂງລະຫວ່າງ ເອດີບີ, ລັດຖະບານ ຕ່າງໆ ແລະບັນດາ ເອັນຈີໂອແມ່ນຈຳ ກັດ ຍ້ອນຂາດຄວາມເຂົ້າໃຈລະຫວ່າງກັນ ແລະກັນ, ການຮັບພາລະ, ຊັບພະຍາກອນ, ແລະໂອກາດຕົວຈິງສຳລັບ ການຮ່ວມມື. ນອກຈາກນີ້ແມ່ນບໍ່ມີກົນໄກເພື່ອຮັບປະກັນການສົນທະນາ, ຄວາມໂປ່ງໃສ ແລະ ການຮັບຜິດຊອບຂອງ ທຸກໆຝ່າຍ. ການຮ່ວມມືຖືກຈຳກັດຍ້ອນຂາດຄວາມເຂົ້າໃຈ ແລະຮັບຮູ້ ກ່ຽວກັບບົດບາດ ແລະສ່ວນປະກອບຂອງແຕ່ ລະພາກສ່ວນກ່ຽວຂ້ອງໃນຂະບວນການພັດທະນາ. ສະພາບດັ່ງກ່າວນີ້ ແມ່ນໜັກຂຶ້ນຕື່ມຍ້ອນ ຂາດມາດຕະຖານທີ່ ຮັບຮອງໂດຍທົ່ວໄປໃນການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ ໃນຂະບວນຂອງການພັດທະນາ. ທັງ ເອດີບີ ແລະ ບັນດາລັດຖະບານແມ່ນບໍ່ໄດ້ໃຫ້ຄວາມສົນໃຈ ແລະ ບໍ່ໄດ້ ຈັດຫາຊັບພະຍາກອນຢ່າງພຽງພໍສຳລັບຮ່ວມມືກັບບັນດາ ເອັນຈີໂອ ເຊັ່ນດຽວກັບບັນດາເພື່ອນຮ່ວມງານດ້ານການພັດທະນາຢ່າງເຕັມ ສ່ວນ, ສະນັ້ນຈະບໍ່ມີປະສົບການພຽງພໍ ໃນການສ້າງຕັ້ງ ແລະ ການພັດທະນາການຮ່ວມມືທີ່ມີປະສິດທິຜົນ ຕໍ່ທັງສອງຝ່າຍ.

61. ບໍ່ໝາຍຄວາມວ່າທຸກ ເອັນຈີໂອມີຄວາມອາດສາມາດ ຫຼື ທ່າແຮງລວມທີ່ຈະຮັບໃຊ້ເປັນຜູ້ຮ່ວມງານດ້ານການ ພັດທະນາທີ່ເຕັມສ່ວນໄດ້. ໃນຫຼາຍໆປະເທດ, ບັນດາ ເອັນຈີໂ ຍັງຕ້ອງພັດທະນາວິທີການ ການແລກປ່ຽນປະສົບການ

ຫຼື ມີເຄືອຂ່າຍເພື່ອສາມາດປຶກສາຫາລືຢ່າງມີປະສິດທິພາບກັບກຸ່ມເປົ້າໝາຍ, ລັດຖະບານ, ອົງ ການຊ່ວຍເຫຼືອສາກົນ ແລະຜູ້ຮ່ວມມືໃນການພັດທະນາອື່ນໆ. ບັນດາເອັນຈີໂອສ່ວນໃຫຍ່ຈະສຸມໃສ່ກິດຈະກຳ ການພັດທະນາເປັນຫຼັກ ແລະ ບໍ່ມີຊັບພະຍາກອນມະນຸດ ແລະການເງິນທີ່ພຽງພໍເພື່ອສົ່ງເສີມການພັດທະນາ ແລະການ ສ້າງຄວາມເຂັ້ມແຂງໃນການຮ່ວມມືແບບຍຸດທະສາດກັບລັດຖະບານ ແລະອົງການຊ່ວຍເຫຼືອຫຼາຍພາກສ່ວນເຊັ່ນ ເອດີບີ, ຍົກເວັ້ນການເປັນທີ່ປຶກສາໃນການປະຕິບັດກິດຈະກຳຂອງໂຄງການທີ່ມີທຶນສະນັບສະໜູນຈາກອົງການຊ່ວຍເຫຼືອ. ປະສິດທິພາບຂອງບັນດາເອັນຈີໂອຍັງມີຂໍ້ຈຳກັດອີກຫຼາຍລະດັບກ່ຽວກັບຄວາມອາດສາມາດໃນການຄຸ້ມຄອງ ແລະການຈັດຕັ້ງ. ບັນດາ ເອັນຈີໂອ ໂດຍສະເພາະ ເອັນຈີໂອຂັ້ນທ້ອງຖິ່ນມີທ່າແຮງທາງດ້ານການເງິນທີ່ບໍ່ພຽງພໍ ໃຫ້ພະນັກງານ, ການພັດທະນາ ແລະການຈັດຕັ້ງປະຕິບັດໂຄງການ ແລະ ການຂຶ້ນແຜນໂຄງການ ແລະ ການສ້າງເຄືອ ຂ່າຍພົວພັນລະຫວ່າງເອັນຈີໂອ. ຂໍ້ຈຳກັດໃນການສ້າງເຄືອຂ່າຍ ແລະການສ້າງຄວາມຮ່ວມມືລະຫວ່າງ ເອັນຈີໂອ ເຊັ່ນດຽວຄວາມບໍ່ຈະແຈ້ງ ຂອງການເປັນຕົວແທນຂອງ ເອັນຈີໂອເປັນຂໍ້ຈຳກັດໃນການຊີ້ບົ່ງບັນຫາທຄ້າຍຄືກັນ ແລະກີດກັ້ນການປະສານງານທີ່ມີປະສິດທິພາບ ແລະຄວາມພະຍາຍາມໃນການແກ້ຕາງ. ການແຂ່ງຂັນລະຫວ່າງບັນດາ ເອັນຈີໂອອາດຈະກີດກັ້ນຄວາມສາມາດຂອງເຂົາເຈົ້າໃນການເສີມສ້າງການຮ່ວມມື.

62. ການຄັດເລືອກ ເອັນຈີໂອແມ່ນມີຄວາມສຳຄັນ ເພື່ອຮັບປະກັນການຮ່ວມມືທີ່ມີຄຸນນະພາບ. ສ່ວນຫຼາຍແລ້ວມັນເປັນການຍາກສຳລັບພະນັກງານ ເອດີບີທີ່ຈະລະບຸ ເອັນຈີໂອທີ່ເໝາະສົມເພື່ອຈະປຶກສາຫາລື ເມື່ອບໍ່ມີການວິເຄາະຢ່າງພຽງພໍກ່ຽວກັບພາກສ່ວນກ່ຽວຂ້ອງ ມັນຈະບໍ່ສະແດງໃຫ້ເຫັນຢ່າງຈະແຈ້ງວ່າບັນດາ ເອັນຈີໂອນັ້ນເປັນຕົວແທນໃຫ້ພາກສ່ວນໃດ. ບາງອົງການກໍ່ບໍ່ສາມາດໃຈ້ແຍກວ່າແຕກຕ່າງຈາກບໍລິສັດທີ່ປຶກສາ. ບາງອົງການອາດຈະມີສ່ວນ ຮ່ວມດ້ານການເມືອງ.

## D. ຄວາມຕ້ອງການສ້າງຄວາມເຂັ້ມແຂງດ້ານການຮ່ວມມືລະຫວ່າງ ລັດຖະບານ-ເອັນຈີໂອ

63. ບັນດາ ເອັນຈີໂອສ່ວນຫຼາຍຈະຖືກເບິ່ງເປັນຜູ້ປະຕິບັດໂຄງການເທົ່ານັ້ນ ຫຼືເປັນ “ໝາຍາມ” ທີ່ສ້າງບັນຫາ. ລັດຖະບານໃນຫຼາຍໆປະເທດຍັງມີຄວາມສົງໃສຕໍ່ພຶດຕິກຳຂອງບັນດາ ເອັນຈີໂອ ແລະບາງລັດຖະບານພະຍາຍາມຈະຄວບຄຸມເຂົາເຈົ້າ. ການຂາດມີຄວາມເຊື່ອໃຈລະຫວ່າງລັດຖະບານ ແລະເອັນຈີໂອ ແລະ ຂາດຄວາມພະຍາຍາມໃນການສື່ສານ, ສ່ວນຫຼາຍຈະນຳໄປສູ່ການປະເຊີນໜ້າຫຼາຍກ່ວາທີ່ຈະມີການຮ່ວມມືກັນ ແລະຈຳກັດການປະກອບສ່ວນທີ່ມີປະສິດທິພາບຂອງ ເອັນຈີໂອໃນການພະຍາຍາມພັດທະນາຊາດ.

64. ບໍ່ແມ່ນໝົດທຸກລັດຖະບານມີໂຄງຮ່າງດ້ານກົດໝາຍ, ການເງິນ ແລະ ກົດລະບຽບທີ່ໂປ່ງໃສ ແລະສະໜັບສະໜູນວິທີການເຮັດວຽກຂອງ ເອັນຈີໂອ. ມີຫຼາຍ ເອັນຈີໂອເຊັ່ນດຽວກັນ ຫຼາຍອົງການລັດໃນບັນດາປະເທດຊະມາຊິກທີ່ກຳລັງພັດທະນາ ໄດ້ສະແດງຄວາມສົນໃຈໃນການສ້າງໂຄງຮ່າງສະເພາະປະເທດ ເພື່ອປັບປຸງການຮ່ວມມືລະຫວ່າງລັດຖະບານ ແລະເອັນຈີໂອ ໂດຍຜ່ານ ເອດີບີ ຫຼືການຊ່ວຍເຫຼືອຂອງຜູ້ໃຫ້ທຶນອື່ນໆ.

65. ສະຖາບັນບໍ່ມີກົນໄກໃຫ້ເອັນຈີໂອມີສ່ວນຮ່ວມ ແລະຈັດຕັ້ງການປຶກສາຫາລືໃນຮູບແບບເປີດເຜີຍ ແລະມີສ່ວນຮ່ວມ. ລັດຖະບານຕ່າງໆສ່ວນໃຫຍ່ບໍ່ມີກົນໄກທີ່ຈະແຈ້ງ ແລະ ມີປະສິດທິພາບສຳລັບການສົນທະນາກັບ ເອັນຈີ

ໄອໃນລະດັບຊາດ (ເຊັ່ນ:ສະເພາະກະຊວງ ຫຼື ກົມ) ຫຼື ໃນທັດສະນະການຮ່ວມມືຂອງ ເອັນຈີໂອໃນຂະແໜງສະເພາະ (ເຊັ່ນ:ກະສິກຳ, ສະພາບແວດລ້ອມ, ສາທາລະນະສຸກ).

66. ມາເຖິງປະຈຸບັນອີງການໃຫ້ທຶນສາກົນຕ່າງໆຍັງເຮັດວຽກນຳລັດຖະບານຢ່າງເຕັມປ່ຽມເພື່ອຮັບປະກັນໃຫ້ມີ ເອັນຈີໂອເຂົ້າຮ່ວມໃນການສົນທະນາດ້ານນະໂຍບາຍ ແລະກ່ຽວກັບໂຄງການ ຫຼື ໃນແງ່ການແບ່ງທຶນພັດທະນາໃຫ້ແກ່ ແຕ່ລະຂະແໜງການ ຫຼື ໃນດ້ານການປະສານການຊ່ວຍເຫຼືອເຊິ່ງກັນແລະກັນ.

## V. ຄວາມເປັນໄປໄດ້ຂອງການຮ່ວມມືລະຫວ່າງ ເອດີບີ-ລັດຖະບານ-ເອັນຈີໂອ

67. ເມື່ອຜູ້ຕາງໜ້າຂອງຜູ້ມີສ່ວນກ່ຽວຂ້ອງໄດ້ກຳນົດ ແລະສົນທະນາຂໍ້ສະເໜີເພື່ອປະຕິບັດ, ເຂົາເຈົ້າໄດ້ລະບຸຂໍ້ ສົມມຸດຖານ ແລະຂໍ້ສ່ຽງທີ່ກ່ຽວພັນກັບຂໍ້ສະເໜີນີ້. ບໍ່ມີການບັນທຶກລະອຽດກ່ຽວກັບການສົນທະນານີ້ແຕ່ຈະເປັນການດີ ທີ່ທວນຄືດຄືນບາງຈຸດສຳຄັນທີ່ໄດ້ຍົກຂຶ້ນ.

- **ຄວາມພະຍາຍາມຂອງ ເອດີບີທີ່ຜ່ານມາ ແລະການຮ່ວມມືລະຫວ່າງ ເອດີບີ-ລັດຖະບານ-ເອັນຈີໂອ ທີ່ກຳລັງ ດຳເນີນຢູ່ໃນປະຈຸບັນ.** ຜູ້ເຂົ້າຮ່ວມກອງປະຊຸມຊຽນໂຄງຮ່າງຮັບຮູ້ວ່າ ເອດີບີໄດ້ມີຄວາມພະຍາຍາມ ແລະສືບ ຕໍ່ພະຍາຍາມ. ສັງເກດເຫັນໄດ້ໃນເນື້ອໃນຂອງໂຄງຮ່າງການຮ່ວມມືລະຫວ່າງ ເອດີບີ-ເອັນຈີໂອ. ຂໍ້ສະເໜີ ຂອງໂຄງຮ່າງການຮ່ວມມືລະຫວ່າງ ເອດີບີ- ເອັນຈີໂອ ແມ່ນບໍ່ມີເປົ້າໝາຍທີ່ ຈະ "ອອກແບບກິງກວຽນໃໝ່" ຫາກແຕ່ແມ່ນເພື່ອເສີມຂະຫຍາຍຄວາມພະຍາຍາມ, ຈົນມາເຖິງປະຈຸບັນ, ແມ່ນປະຕິບັດແບບສະເພາະກິດ ຫຼື ປະຕິບັດໃນຮູບແບບທີ່ແຕກຕ່າງກັນພາຍໃນສະຖາບັນ.
- **ຄວາມຕ້ອງການໃຫ້ມີຫຼາຍວິທີການເພື່ອໃຫ້ເໝາະສົມກັບສະພາບທ້ອງຖິ່ນ.** ຄວາມຫຼາກຫຼາຍໃນປະເພດ, ຄວາມອາດສາມາດ, ການເປັນຕົວແທນ, ແລະ ລາຍການຂອງ ເອັນຈີໂອ; ການມີລັກສະນະຫຼາຍຮູບແບບ ຄວາມແຕກຕ່າງດ້ານທັດສະນະ ແລະຄວາມອາດສາມາດຂອງລັດຖະບານກ່ຽວກັບການຮ່ວມມືກັບ ເອັນຈີ ໂອ; ຄວາມແຕກຕ່າງຢ່າງກວ້າງຂວາງດ້ານກົດໝາຍ; ແລະ ລະບຽບການ; ການເຮັດວຽກ ຂອງ ເອດີບີຢ່າງ ກວ້າງຂວາງໃນຂົງເຂດ; ແລະ ຄວາມແຕກຕ່າງກັນໃນຫຼາຍໆດ້ານ ແມ່ນບໍ່ສາມາດນຳໃຊ້ຮູບແບບ "ຂະໜາດ ດຽວສຳລັບໝົດທຸກຢ່າງ" ເມື່ອຄວາມທ້າທາຍການສ້າງຄວາມເຂັ້ມແຂງຂອງການຮ່ວມມືລະຫວ່າງ ເອດີບີ- ລັດຖະບານ-ເອັນຈີໂອ. ຂໍ້ສະເໜີທີ່ເຫັນວ່າງ່າຍດາຍອາດຈະບໍ່ສາມາດປະຕິບັດໄດ້ໃນບາງປະເທດ ຫຼື ພາຍ ໃນບາງແຂວງ ແລະບາງລັດ. ສະນັ້ນໂຄງຮ່າງດັ່ງກ່າວໄດ້ສະເໜີໃຫ້ມີການດັດປັບພ້ອມທັງມີການຕິດຕາມ ແລະ ປະເມີນປະຈຳປີຂອງໂຄງຮ່າງການຮ່ວມມືລະຫວ່າງ ເອດີບີ- ເອັນຈີໂອ ແລະ ມີການປັບປຸງໂຄງຮ່າງ ໂດຍອີງໃສ່ຜົນຂອງການປະເມີນ.
- **ວິທີການແບບມີຂັ້ນຕອນໃນການປ່ຽນແປງ.** ດ້ວຍເຫດຜົນທີ່ໄດ້ສະເໜີຂ້າງເທິງນີ້ ແລະຍ້ອນວ່າຊັບພະຍາ ກອນມີຈຳກັດ, ບໍ່ແມ່ນໝົດທຸກຂໍ້ທີ່ຕ້ອງການໃຫ້ປະຕິບັດ "ດ່ວນ" ທີ່ໄດ້ສະເໜີໃນໂຄງຮ່າງການຮ່ວມມືລະ ຫວ່າງ ເອດີບີ-ເອັນຈີໂອ ຈະສາມາດປະຕິບັດໄດ້ໃນທັນທີ ທັນໃດຢູ່ໝົດທຸກສະຖານທີ່. ມັນຮຽກຮ້ອງໃຫ້ທຸກ ພາກສ່ວນອົດທົນ ແລະລໍຖ້າ.
- **ຊັບພະຍາກອນທີ່ສາມາດນຳໃຊ້ໄດ້.** ຜູ້ເຂົ້າຮ່ວມກອງປະຊຸມຊຽນໂຄງຮ່າງໄດ້ພິຈາລະນາຄວາມຈຳກັດຂອງ ຊັບພະຍາກອນດ້ານການເງິນ ແລະດ້ານມະນຸດ ທີ່ກ່ຽວຂ້ອງກັນກັບການສ້າງຄວາມເຂັ້ມແຂງໃນການຮ່ວມມື

ລະຫວ່າງ ເອດີບີ-ລັດຖະບານ-ເອັນຈີໂອ. ເຖິງຢ່າງໃດກໍ່ຕາມພາກສ່ວນກ່ຽວຂ້ອງທັງສາມຝ່າຍຈະຕ້ອງມີຄໍາໝັ້ນສັນຍາສົ່ງເສີມຄວາມຕ້ອງການດ້ານຊັບພະຍາກອນການເງິນ ແລະມະນຸດ. ໄດ້ຄາດຫວັງໄວ້ວ່າ ເອດີບີ ຈະປະຕິບັດຕາມຄໍາໝັ້ນສັນຍາຕາມຂໍ້ຊີ້ນໍາຂອງບົດລາຍງານ ຂອງໜ່ວຍປະຕິບັດງານໂດຍຈະຕ້ອງຈັດຫາຊັບພະຍາກອນທີ່ພຽງພໍ ເພື່ອສໍາເລັດການປັບປຸງການຮ່ວມມືກັບ ເອັນຈີໂອ. ມີຄວາມສໍາຄັນເທົ່າກັນນີ້ແມ່ນຝ່າຍລັດຖະບານ ແລະ ເອັນຈີໂອ ສັນຍາວ່າຈະປະກອບຊັບພະຍາກອນ ເຂົ້າ ໃນຄວາມພະຍາຍາມນີ້, ບາງທີອາດຈະໃນລະດັບທີ່ຈະສູງຫຼາຍກວ່າທີ່ເຄີຍໄດ້ສະໜອງມາ ກ່ອນ.

- **ບົດບາດທີ່ສໍາຄັນຂອງລັດຖະບານ**. ມີຄວາມເປັນໄປໄດ້ ແລະ ມີຄວາມຕ້ອງການທີ່ຈະສ້າງການພົວພັນລະຫວ່າງ ເອດີບີ ແລະເອັນຈີໂອໃຫ້ເຂັ້ມແຂງ. ແຕ່ວ່າລັກສະນະຂອງ ເອດີບີ, ການປະກອບສ່ວນ ຂອງເອັນຈີໂອໃນການລຸດຜ່ອນຄວາມທຸກຍາກໃນເນື້ອໃນການດໍາເນີນ ເອດີບີ ຈະສໍາເລັດໄດ້ ຖ້າລັດຖະບານເປັນພາກສ່ວນໜຶ່ງໃນການພົວພັນລະຫວ່າງສາມຝ່າຍ.

## V. ແຜນປະຕິບັດໄລຍະກາງ

68. ໂຄງຮ່າງການຮ່ວມມືລະຫວ່າງ ເອດີບີ-ເອັນຈີໂອ ໄດ້ສະເໜີກິດຈະກໍາສະເພາະ ເພື່ອປັບປຸງການຮ່ວມມືທີ່ມີປະສິດທິພາບລະຫວ່າງ ເອດີບີ, ລັດຖະບານ ແລະ ເອັນຈີໂອ. ກິດຈະກໍາທີ່ໄດ້ສະເໜີແມ່ນຈັດເປັນ 5 ປະເພດໃຫຍ່ລວມ (ແລະບາງກໍລະນີກໍ່ຊ້ອນກັນ) ດັ່ງຕໍ່ໄປນີ້:

- ການສ້າງຄວາມເຂັ້ມແຂງດ້ານການຮ່ວມມືລະຫວ່າງພາກສ່ວນກ່ຽວຂ້ອງໃນກິດຈະກໍາທີ່ ເອດີບີໃຫ້ການສະໜັບສະໜູນ
- ເສີມຂະຫຍາຍຄວາມໂປ່ງໃສ ແລະ ການປະສານງານເຊິ່ງກັນ ແລະ ກັນເພື່ອໃຫ້ເຂົ້າເຖິງຂໍ້ມູນຂ່າວສານ
- ການພັດທະນາຄວາມອາດສາມາດຂອງ ເອດີບີ ໃນການຮ່ວມມືກັບ ເອັນຈີໂອ
- ການສ້າງຄວາມອາດສາມາດຂອງ ເອັນຈີໂອ ແລະ ໃຫ້ການສະໜັບສະໜູນສະຖາບັນ
- ການສ້າງຄວາມເຂັ້ມແຂງດ້ານການຮ່ວມມື ແລະ ຊ່ວຍເຫຼືອລະຫວ່າງ ລັດຖະບານ-ເອັນຈີໂອ

69. ກິດຈະກໍາທີ່ສະເໜີນີ້ຈະລິເລີ່ມໃນຊ່ວງປີ 2003-2005 (ຕິງກັນກັບແຜນຍຸດທະສາດໄລຍະກາງຂອງ ເອດີບີ). ບາງກິດຈະກໍາຈະສືບຕໍ່ປະຕິບັດເກີນໄລຍະນີ້. ຂໍ້ສະເໜີເພີ້ມຈາກຜູ້ເຂົ້າຮ່ວມກອງປະຊຸມຊຽນໂຄງຮ່າງຈະປະຕິບັດໃນປີ 2006 ຫຼື ຫຼັງຈາກນັ້ນ ແມ່ນໄດ້ສະເໜີຢູ່ໃນເອກະສານຊ້ອນທ້າຍ 2.

### A. ການສ້າງຄວາມເຂັ້ມແຂງດ້ານການຮ່ວມມືລະຫວ່າງພາກສ່ວນກ່ຽວຂ້ອງໃນກິດ ຈະກໍາທີ່ ເອດີບີ ໃຫ້ການສະໜັບສະໜູນ

#### 1. ຂໍ້ແນະນໍາກ່ຽວກັບການມີສ່ວນຮ່ວມຂອງບັນດາພາກສ່ວນກ່ຽວຂ້ອງ

70. ເອດີບີ ມີຂໍ້ແນະນໍາ ແລະ ມາດຕະຖານຫຼາຍໆຢ່າງສໍາລັບການມີສ່ວນຮ່ວມຂອງຜູ້ມີສ່ວນກ່ຽວຂ້ອງ. ຂໍ້ແນະນໍານີ້ແມ່ນໄດ້ລະບຸຢ່າງຈະແຈ້ງໃນ *ເອກະສານຄູ່ມືສໍາລັບການວິເຄາະຄວາມທຸກຍາກ ແລະ ສັງຄົມ: ເອກະສານດໍາ*

*ເນີນງານ* ຂອງ ເອດີບີ ເດືອນທັນວາ ປີ 2001 (ໂດຍສະເພາະເອກະສານຊ້ອນທ້າຍ 4 ກ່ຽວກັບ "ການຮ່ວມມື" ແລະ "ການວິເຄາະກ່ຽວກັບພາກສ່ວນກ່ຽວຂ້ອງ").[11]

71. ການຮ່ວມມືຂອງພາກສ່ວນກ່ຽວຂ້ອງສາມາດ ແລະ ຄວນຈະເກີດຂຶ້ນໃນຫຼາຍລະດັບ ແລະ ຫຼາຍໄລຍະໃນວົງຈອນຂອງໂຄງການ. ເອດີບີໄດ້ພະຍາຍາມທົບທວນເພື່ອໃຫ້ມີການປຶກສາຫາລືຢ່າງກວ້າງຂວາງໃນ ຫຼາຍໆໂຄງການສະຖາບັນສຳລັບໂຄງການ ແລະກິດຈະກຳຕ່າງໆ ຂອງທຶນກູ້ຍືມ ແລະທຶນຊ່ວຍເຫຼືອລ້າ. ການຮ່ວມມືຂອງພາກສ່ວນກ່ຽວຂ້ອງກ່ຽວຂ້ອງແມ່ນໄດ້ເນັ້ນໜັກສະເພາະສຳລັບນະໂຍບາຍຂອງ ເອດີບີ ກ່ຽວກັບສະພາບແວດລ້ອມ, ບົດບາດຍິງ-ຊາຍ, ຊົນເຜົ່າ, ແລະການຍົກຍ້າຍປະຊາຊົນ ໂດຍຈັດຕັ້ງ "ແຜນການປຶກສາຫາລື".

72. ຄວາມພະຍາຍາມສາມາດເພີ້ມຂຶ້ນໄດ້ອີກເພື່ອໃຫ້ສະຖາບັນມີລະບົບ ແລະ ຖືກລະບຽບກ່ຽວກັບການມີສ່ວນຮ່ວມຂອງ ເອັນຈີໂອ ໃນວຽກງານຂອງ ເອດີບີ. ເອດີບີຄວນມີຂໍ້ແນະນຳກ່ຽວກັບການຄັດເລືອກ ແລະວ່າຈ້າງ ເອັນຈີໂອໃນກິດຈະກຳທີ່ສະໜັບສະໜູນໂດຍ ເອດີບີ. ຂໍ້ແນະນຳຈະລະບຸ ເອັນຈີໂອ ຂັ້ນທ້ອງຖິ່ນ, ຂັ້ນຊາດ ແລະ ຂັ້ນສາກົນທີ່ເໝາະສົມ ແລະພັດທະນາແຜນການແບບມີສ່ວນຮ່ວມ ແລະມີຮູບແບບສຳລັບບັນທຶກຜົນຂອງຂະບວນການມີສ່ວນຮ່ວມ, ດີທີ່ສຸດໃຫ້ເປັນພາສາທ້ອງຖິ່ນ.ເອກະສານບັນທຶກດັ່ງກ່າວ, ຄວນກວມເອົາຂໍ້ຕົກລົງສະເພາະ ແລະ ຂໍ້ຄວາມທີ່ບໍ່ເປັນເອກະພາບກັນ, ຄຳຕອບຂອງເອດີບີ ແລະການຕິດຕາມສືບຕໍ່ ພ້ອມທັງລາຍຊື່ທີ່ຄົບຖ້ວນຂອງຜູ້ທີ່ເຂົ້າຮ່ວມໃນການປຶກສາຫາລື. ເອດີບີຄວນຈະແຈກຢາຍເອກະສານດັ່ງກ່າວເພື່ອສ້າງຄວາມເຂົ້າໃຈ ລະຫ່ວາງແຕ່ລະກຸ່ມ ທີ່ຕ້ອງການຢາກຮູ້ ແລະເພື່ອເສີມຂະຫຍາຍ ຄວາມໂປ່ງໃສໃນວຽກງານຂອງ ເອດີບີ. ເອດີບີຄວນຮັບປະກັນເຮັດໃຫ້ການກະກຽມເອກະສານດັ່ງກ່າວສຳເລັດລົງ ແລະສາມາດແຈກຢາຍຂໍ້ມູນພາຍໃນໜຶ່ງເດືອນພາຍຫຼັງກອງປະຊຸມ.

73. ເຖິງວ່າ ເອດີບີຈະປັບປຸງຂໍ້ແນະນຳໃນຂັ້ນສູນກາງ, ຄາດວ່າ ຫ້ອງການເອດີບີ ປະຈຳປະເທດຕ່າງໆ, ລັດຖະບານຂອງບັນດາປະເທດສະມາຊິກທີ່ກຳລັງພັດທະນາ, ແລະ ບັນດາ ເອັນຈີໂອຈະຕ້ອງປະສານເພື່ອເຮັດໃຫ້ຂໍ້ແນະນຳເໝາະສົມກັບສະພາບຂອງແຕ່ລະປະເທດສະເພາະ.

<u>ສັງລວມຂໍ້ສະເໜີຈັດຕັ້ງປະຕິບັດ</u>

A1. ເອດີບີ ຄວນສ້າງຂໍ້ແນະນຳ ກ່ຽວກັບການມີການຮ່ວມມື ຢ່າງເປັນທາງການ ລວມທັງມາດຕະຖານທີ່ຕ່ຳສຸດໃນການມີສ່ວນຮ່ວມ ແລະ ການແຈກຢາຍຂໍ້ມູນ ແລະ ປະກອບໃສ່ຄູ່ມືການດຳເນີນງານ. ເອດີບີ ຄວນພັດທະນາຮູບແບບ ຫຼືແບບຢ່າງເອກະສານການປຶກສາຫາລືທີ່ສຳຄັນ ກັບພາກສ່ວນກ່ຽວຂ້ອງ ລວມທັງກົນໄກການປະກອບຄຳຄິດຄຳເຫັນໃຫ້ພາກສ່ວນກ່ຽວຂ້ອງທີ່ໄດ້ປຶກສາຫາລືນຳ

---

[11] ເອກະສານອື່ນໆແມ່ນລວມເອົາເອກະສານ ເອດີບີ ພຶດສະພາ 1994 *ຄູ່ມືສຳລັບການປະກອບມິຕິທາງດ້ານສັງຄົມເຂົ້າໃນໂຄງການ*, ອາເລ່ນ ຟາວເລີ, *ການປັບປຸງຄວາມຮ່ວມມືໃນແຜນຍຸດທະສາດຂອງປະເທດ ແລະ ແຜນໂຄງການ*, ເອກະສານການພັດທະນາດ້ານສັງຄົມຂອງ ເອດີບີ ເບີ 2, ພຶດສະພາ 2001, ທອມມາສ ເອຟຄາໂຣ, ຕົ້ນທຶນດ້ານສັງຄົມ, *ການເສີມສ້າງຄວາມອາດສາມາດ, ແລະ ການລຸດຜ່ອນຄວາມທຸກຍາກ*, ເອກະສານການພັດທະນາດ້ານສັງຄົມຂອງ ເອດີບີ ເບີ 3 ພຶດສະພາ 2001; ແລະ ເອກະສານເອດີບີ ທັນວາ 2001 *ຂັ້ນຕອນທຸລະກິດສຳລັບການຈັດຕັ້ງໃໝ່ຂອງ ເອດີບີ.* ອີກເອກະສານໜຶ່ງທີ່ມີຄຸນປະໂຫຍດຫຼາຍແມ່ນ ແຊມເຄນເບີ, ເລັນນີ ລິນ, ແຄດເທີລີນ ໂທດີ້, ຊຊາຣາ ຟີສ. ແລະ ດູແອນ ເບີເຈີ້, *ຂໍ້ຊີ້ນຳສຳລັບຜູ້ອຳນວຍການຕັດສິນໃຈແບບມີສ່ວນຮ່ວມ*, ນິວ ໂຊໄຊຕີ້ ພັບບລິກເຊີ້, ເມສາ 2001 (ທີ່ຖືກນຳໃຊ້ເປັນພື້ນຖານສຳລັບການເຝິກອົບຮົມຂອງພະນັກງານເອດີບີ ໃນດ້ານ "ການອຳນວຍ").

## 2. ກົນໄກການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ

### a. ໃນລະດັບປະເທດ

74. ຈຸດສຸມອັນຕົ້ນຕໍສໍາລັບການສ້າງຄວາມເຂັ້ມແຂງ ການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ ຄວນຈະຢູ່ໃນລະດັບປະເທດ. ຫ້ອງການເອດີບີປະຈໍາປະເທດ ແລະລັດຖະບານຂອງບັນດາປະເທດສະມາຊິກປະເທດທີ່ກໍາລັງພັດທະນາຄວນຈະຈັດກອງປະຊຸມເປັນປະຈໍາ (ຢ່າງນ້ອຍປະຈໍາປີ) ລະຫ່ວາງສາມຝ່າຍ ເພື່ອສົນທະນາກ່ຽວກັບການດໍາເນີນງານຂອງ ເອດີບີໃນປະເທດທີ່ກ່ຽວຂ້ອງນັ້ນໃຫ້ສອດຄ່ອງກັບຫຼັກການທີ່ໄດ້ສະເໜີໃນຂໍ້ 67. ການປຶກສາຫາລືນັ້ນຄວນຈະຈັດຂຶ້ນເພື່ອການອະທິບາຍ ຫຼືປັບປຸງແຜນຍຸດທະສາດ ແລະ ແຜນໂຄງການປະເທດຂອງ ເອດີບີພ້ອມທັງການປະເມີນຄວາມຄືບໜ້າ ຢ່າງເປັນປະຈໍາກ່ຽວກັບການບັນລຸເປົ້າໝາຍການຫຼຸດຜ່ອນຄວາມທຸກຍາກທີ່ໄດ້ຈັດຕັ້ງຂຶ້ນຜ່ານຂໍ້ຕົກລົງການຮ່ວມມື ກ່ຽວກັບການຫຼຸດຜ່ອນຄວາມທຸກຍາກ ຫຼືຜ່ານເປົ້າໝາຍການພັດທະນາໃນສະຫະສະຫວັດ, ຫ້ອງການເອດີບີປະຈໍາປະເທດ,ໂດຍມີການສົນທະນາກັບພະນັກງານ ສໍານັກງານສູນກາງ ແລະ ພະນັກງານລັດທີ່ກ່ຽວຂ້ອງຈະມີບົດບາດຫຼັກໃນການຈັດຕັ້ງ "ກອງປະຊຸມຮ່ວມມື" ນີ້

75. ໃນຂັ້ນຕອນທຸລະກິດໃໝ່ຂອງເອດີບີ ໄດ້ໃຫ້ສິດ(ອໍານາດ)ປຶກສາຫາລື ກັບມະຫາຊົນໃນການກະກຽມແຜນຍຸດທະສາດ ແລະແຜນໂຄງການຂອງປະເທດ, ບັນດາກົມໃນເຂດ ແລະລັດຖະບານຕ່າງໆ (ທີ່ມີການສະນັບສະໜູນຈາກສູນເອຈີໂອ) ຄວນຈະຮ່ວມມືກັນ ເພື່ອໃຫ້ມີ ເອັນຈີໂອເຂົ້າຮ່ວມຢ່າວຫ້າວຫັນໃນຂະບວນ ການສ້າງແຜນຍຸດທະສາດ ແລະແຜນການໂຄງການຂອງປະເທດຢ່າງໄວ. ຕົວແທນຂອງບັນດາເອັນຈີໂອຄວນຈະເຂົ້າຮ່ວມໃນການພັດທະນາແຜນການຮ່ວມມືກັບພາກສ່ວນກ່ຽວຂ້ອງ, ໃນຂະບວນພັດທະນາແຜນຍຸດທະສາດ ແລະຄວນເຂົ້າຮ່ວມການສົນທະນາກ່ຽວກັບເນື້ອໃນຂອງແຜນຍຸດທະສາດ ແລະແຜນການໂຄງການຂອງປະເທດ ກ່ອນຈະມີການຕັດສິນໃຈ ນອກຈາກນັ້ນເອັນຈີໂອ ແລະພາກສ່ວນກ່ຽວຂ້ອງອື່ນໆ ຄວນໄດ້ຮັບແຜນຍຸດທະສາດ ແລະແຜນການໂຄງການຂອງປະເທດ ໃຫ້ທ່ວງທັນເວລາ. ທີມງານວາງແຜນຍຸດທະສາດ ແລະແຜນການໂຄງການຂອງປະເທດ ຄວນຈະບັນທຶກຄໍາຄິດເຫັນສ່ວນກ່ຽວຂ້ອງຕໍ່ເນື້ອໃນຂອງແຜນຍຸດທະສາດ ແລະ ແຜນການໂຄງການຂອງປະເທດ ແລະການຮັບຮອງເອົາ.

76. ນອກຈາກນັ້ນເອດີບີ ແລະລັດຖະບານຄວນຈະສຶກສາຊອກວິທີທາງທີ່ ເອັນຈີໂອຈະສາມາດປະກອບສ່ວນໃຫ້ດີຂຶ້ນ ໃນຂະບວນການກະກຽມໂຄງການເງິນກູ້. ຕົວຢ່າງ, ເອັນຈີໂອອາດຈະຊ່ວຍໃຊ້ຄວາມທ້າທາຍ ຫຼືຂໍ້ຫຍໍ້ທໍ້ໃນຂະແໜງໃດໜຶ່ງ ແລະ ສ້າງເງື່ອນໄຂໃຫ້ ລວມທັງການໃຫ້ຄວາມຮູ້ຕໍ່ຕົວແທນຕ່າງໆ ກ່ຽວກັບຄວາມສໍາຄັນຂອງການປ່ຽນແປງທີ່ສະເໜີຂຶ້ນ ຫຼືສ້າງເງື່ອນໄຂສ້າງເງື່ອນໄຂໃຫ້ການສົນທະນາມີເນື້ອໃນ ແລະມີເຫດຜົນ. ໃນໄລຍະປະຕິບັດໂຄງຮ່າງການຮ່ວມມືລະຫ່ວາງ ເອດີບີ-ເອັນຈີໂອ, ເອດີບີຄວນຈະນໍາເອົາ ເອັນຈີໂອເຂົ້າໃນຂະບວນການກະກຽມໂຄງການທົ່ນນໍາໃຊ້ເງິນກູ້ຢືມຢ່າງນ້ອຍໜຶ່ງໂຄງການ. ບົດຮຽນທີ່ໄດ້ຮັບຈະສາມາດປະກອບເຂົ້າໃສ່ໃນຂໍ້ແນະນໍາກ່ຽວກັບການຮ່ວມມືທີ່ໄດ້ສະເໜີຢູ່ຂໍ້ A1 ຂອງການສະເໜີການດໍາເນີນກິດຈະກໍາ.

77. ການປະຕິບັດຂອງຫ້ອງການເອດີບີປະຈໍາປະເທດ ແລະ ອົງການຈັດຕັ້ງປະຕິບັດຂອງປະເທດສະມາຊິກທີ່ກໍາລັງພັດທະນາ ແມ່ນຈັດກອງປະຊຸມພາຍໃນປະເທດກັບNGOຢ່າງເປັນປະຈໍາ (ລວມທັງໃນເຂດໂຄງການ) ເພື່ອປຶກສາຫາລືກ່ຽວກັບໂຄງການສະເພາະ ຫຼືອົງປະກອບຂອງແຜນການໂຄງການເຊິ່ງຄວນຈະຂະຫຍາຍອອກໃຫ້ໄປເຖິງ ຫຼາຍໆປະເທດ. ກອງປະຊຸມຄວນສຸມໃສ່ບັນຫາການຈັດຕັ້ງປະຕິບັດ ຫຼື ຂໍ້ຄົງຂ້າງອື່ນໆ, ຄວາມເປັນຫ່ວງເປັນໃຍຂອງເອັນຈີ

ໄອ ຫຼືຊຸມຊົນກ່ຽວຂ້ອງ, ການຕິດຕາມໂຄງການ, ບັນຫາອື່ນໆ ຫຼືຄວາມຫຸ້ຍງຍາກອື່ນໆ ພ້ອມທັງສ້າງໃຫ້ມີໂອກາດເພີ່ມຄວາມພະຍາຍາມໃນການຮ່ວມມື

78. ໃນກໍລະນີທີ່ບໍ່ສາມາດເປັນເກະພາບກັນລະຫ່ວາງພາກສ່ວນກ່ຽວຂ້ອງ, ເອດີບີ ຄວນຈະເຜີຍແຜ່ຂໍ້ມູນໃຫ້ຖືກຕ້ອງ ແລະເຂົ້າໃຈງ່າຍ ພ້ອມທັງຈັດໃຫ້ມີການປຶກສາຫາລືເພີ້ມ ແລະ ເປັນຄົນກາງໃນການປຶກສາຫາລື,.ຄວນພະຍາຍາມໝົດທຸກວິທີທາງເພື່ອແກ້ໄຂຂໍ້ຂັດແຍ່ງໃນຂັ້ນຕົ້ນ ດັ່ງສາມາດເຮັດໄດ້ ເພື່ອຫຼີກລ້ຽງຄ່າໃຊ້ຈ່າຍເວລາໃນການແກ້ໄຂບັນຫາ (ຕົວຢ່າງຂັ້ນຕອນການກວດກາຂອງເອດີບີ ແລະ/ຫຼື ການຊັກຊ້າໃນການປະຕິບັດໂຄງການຫາກແຕ່ຕ້ອງຮັບຮູ້ວ່າລັດຖະບານຂອງບັນດາປະເທດສະມຊິກທີ່ກໍາລັງພັດທະນາ ມີຄວາມຮັບຜິດຊອບໂດຍລວມ ໃນການຈັດກອງປະຊຸມ ເພື່ອປຶກສາຫາລືເຖິງຄວາມເປັນຫ່ວງເປັນໄຍຂອງພາກສ່ວນທີ່ກ່ຽວຂ້ອງ..

79. ເອດີບີຈະພະຍາຍາມໃຫ້ມີເອັນຈີໂອເຂົ້າຮ່ວມຫຼາຍຂື້ນ ໃນການຕິດຕາມ ແລະ ປະເມີນນະໂຍບາຍໂຄງການຂອງ ເອດີບີ. ການເຂົ້າຮ່ວມອາດມີຮູບແບບເປັນສັນຍາຍ່ອຍ ຫຼື ພາກສ່ວນເອກະລາດ, ຈະເປັນອົງປະກອບເຂົ້າໃນກົນໄກການຕິດຕາມຂອງ ເອດີບີທີ່ມີຢູ່ແລ້ວ, ລວມທັງວິທີການປະຕິບັດຕາມສັນຍາ ແລະກົນໄກປ້ອງກັນ ແລະການນໍາໃຊ້ "ຄະນະຜູ້ຊ່ຽວຊານ". ເອດີບີອາດຈະຕັດສິນໃຈໃຫ້ການຊ່ວຍເຫຼືອດ້ານເຕັກນິກ ໃຫ້ແກ່ບັນດາເອັນຈີໂອ ທີ່ໄດ້ຖືກຂັດເລືອກເພື່ອເພີ້ມຄວາມອາດສາມາດຂອງເຂົາເຈົ້າ ໃນການຕິດຕາມ ແລະ ການປະເມີນຜົນ. ການເພີ່ມການມີສ່ວນຮ່ວມຂອງເອັນຈີໂອ ຄວນຈະເລີ່ມກັບໂຄງການທີ່ເປັນໂຄງໃຫ່ຍ ແລະ ສັບສົນເຊີ່ງອາດຈະມີຜົນກະທົບຕໍ່ຫຼາຍຄົນ.

80. ໃນກໍລະນີເວົ້າເຖິງນະໂຍບາຍ ແລະ ແຜນການຂອງໂຄງການ ຂອງຊາດ ຫຼືແຕ່ລະຂະແໜງທີ ເອດີບີມີສ່ວນກ່ຽວຂ້ອງ, ເອດີບີຄວນຈັດຫາການຊ່ວຍເຫຼືອດ້ານເຕັກນິກ ເພື່ອເສີມສ້າງຄວາມອາດສາມາດຂອງຊາດໃຫ້ເຂັ້ມແຂງໂດຍມີການປຶກສາຫາລືກັບຫຼາຍພາກສ່ວນກ່ຽວຂ້ອງທັງໃນລະດັບປະເທດ ແລະລະດັບຕໍ່າລົງໄປ. ຜົນຂອງການປຶກສາຫາລືລະຫ່ວາງລັດຖະບານ ແລະເອັນຈີໂອນັ້ນຄວນຈະກໍານົດເປັນນະໂຍບາຍເຊີ່ງໄດ້ຮັບການສະໜັບສະໜູນ ຈາກພາກສ່ວນກ່ຽວຂ້ອງ..

81. ນອກຈາກນັ້ນ ເອດີບີຄວນສືບຕໍ່ຂໍຄວາມເຫັນຈາກເອັນຈີໂອ ແລະມະຫາຊົນທົ່ວໄປກ່ຽວກັບການພັດທະນານະໂຍບາຍການດໍາເນີນງານ ແລະນະໂຍບາຍລວມສໍາລັບຂະແໜງການຂອງເອດີບີ, ທີ່ໄດ້ປະຕິບັດນະໂຍບາຍກ່ຽວກັບສະພາບແວດລ້ອມ, ການກວດກາ ,ນໍ້າ ແລະພ້ອມທັງການພັດທະນາໂຄງຮ່າງການຮ່ວມມືລະຫ່ວາງ ເອດີບີ-ເອັນຈີໂອ. ຂໍ້ມູນກ່ຽວກັບການພັດທະນາ ຫຼື ການປັບປຸງນະໂຍບາຍຕ່າງໆຂອງເອດີບີຄວນຈະສະເໜີ ອອກຢູ່ ເວັບໄຊໂດຍໃຫ້ມະຫາຊົນມີເວລາພຽງພໍ ສໍາລັບປະກອບຄໍາຄິດເຫັນ.

82. ໃນການຈັດກອງປະຊຸມຕ່າງໆ, ຫ້ອງການເອດີບີປະຈໍາປະເທດອາດຈະເລືອກ ເອັນຈີໂອມາເປັນຜູ້ຊ່ວຍໃນການກໍານົດລາຍການປະຊຸມ ແລະຂະບວນການປຶກສາຫາລືໃຫ້ເໝາະສົມ, ພ້ອມທັງຈັດໃຫ້ມີການປະກອບ ແລະການຮ່ວມມືຈາກເອັນຈີໂອຫຼາຍ ແລະພາກສ່ວນກ່ຽວຂ້ອງອື່ນໆ. ບັນດາເອັນຈີໂອຈໍາເປັນຕ້ອງພັດທະນາກົນໄກ (ຕາໜ່າງ) ຈັດຕັ້ງກອງປະຊຸມປຶກສາຫາລືລະຫ່ວາງ ເອັນຈີໂອດ້ວຍກັນ ເພື່ອເຜີຍແຜ່ຈຸດຢືນ ແລະທັດສະນະຕໍ່ກັບນະໂຍບາຍ, ແຜນການໂຄງການ ແລະໂຄງການທີ່ສະໜັບສະໜູນໂດຍເອດີບີ. ການແຕ່ງຕັ້ງຜູ້ຮັບຜິດຊອບປະສານງານກັບ ເອັນຈີໂອ (ໂດຍຜ່ານໜ່ວຍງານໃດໜຶ່ງ ຫຼື ຕາມຂະແໜງການ) ຈະສ້າງເງື່ອນໄຂໃຫ້ແກ່ການສົນທະນາກ່ຽວກັບບັນຫາສະເພາະ.

83. ເພື່ອເສີມຂະຫຍາຍການພົວພັນລະຫ່ວາງທັງສາມຝ່າຍ, ຄວນຈະແຕ່ງຕັ້ງຕໍາແໜ່ງຜູ້ປະສານງານກັບ ເອັນຈີໂອຢ່າງສົມບູນ (ຫຼືຜູ້ປະສານງານກັບເອັນຈີໂອ/ຜູ້ພົວພັນພາຍນອກພະນັກງານພົວພັນຕ່າງປະເທດ) ໃຫ້ເຮັດວຽກແຕ່ລະຫ້ອງການປະຈຈໍາປະເທດ[12]. ໃນລະຍະສາມປີຂອງໂຄງຮ່າງການຮ່ວມມືລະຫ່ວາງເອດີບີ-ເອັນຈີໂອນີ້, ແນະນໍາໃຫ້ມີພະນັກງານປະສານງານກັບເອັນຈີໂອຈັດຕັ້ງຂື້ນໃນ3-5 ຫ້ອງການເອດີບີປະຈໍາປະເທດໃນບັນດາປະເທດ ທີ່ເອັນຈີໂອເຄື່ອນໄຫວຢ່າງຫ້າວຫັນ.

84. ຫ້ອງການເອດີບີປະຈໍາປະເທດຄວນມີງົບປະມານສະເພາະສໍາລັບປະຕິບັດກິດຈະກໍາທີ່ພົວພັນກັບເອັນຈີໂອ ພ້ອມກັບສາມາດນໍາໃຊ້ທຶນຊ່ວຍເຫຼືອລ້າດ້ານເຕັກນິກຂະໜາດນ້ອຍ ເພື່ອສົ່ງເສີມ ຫຼືຈັດຕັ້ງການປຶກສາຫາລື ແລະ ການ ຮ່ວມມືກັບ ເອັນຈີໂອ, ແລະ ລະຫວ່າງ ເອັນຈີໂອ ແລະ ລັດຖະບານ.

<u>ສັງລວມຂໍ້ສະເໜີຈັດຕັ້ງປະຕິບັດ</u>.

A2. ໃຫ້ຫຼາຍຫ້ອງການເອດີບີປະຈໍາປະເທດຈັດກອງປະຊຸມລະຫ່ວາງສາມຝ່າຍຢ່າງເປັນປະຈໍາ ເພື່ອປຶກສາຫາລືກ່ຽວກັບແຜນຍຸດທະສາດ, ຄວາມຄືບໜ້າໃນການບັນລຸເປົ້າໝາຍການລຸດຜ່ອນຄວາມທຸກຍາກ, ປະຕິບັດໂຄງການ ຫຼືແກ້ໄຂບັນຫາອື່ນໆ ຫຼືຄວາມຫຍຸ້ງຍາກພ້ອມທັງເຮັດໃຫ້ເອັນຈີໂອ ແລະມະຫາຊົນຮັບຮູ້ເພີ້ມຂື້ນກ່ຽວກັບການປະກອບສ່ວນຂອງເອດີບີໃນການພັດທະນາລະດັບຊາດ.

A3. ບັນດາກົມກອງແຕ່ລະຂົງເຂດ ແລະລັດຖະບານ, ໂດຍການຊ່ວຍເຫຼືອຈາກສູນ ເອັນຈີໂອ, ຄວນໃຫ້ ເອັນຈີໂອເຂົ້າຮ່ວມໃນການພັດທະນາແຜນຍຸດທະສາດ, ແລະ ໃຫ້ເອັນຈີໂອມີສ່ວນປະກອບໃນຂະບວນວາງແຜນຂອງແຜນຍຸດທະສາດ ແລະ ແຜນການໂຄງການ ກ່ອນຈະ ມີການຕັດສິນໃຈ.

A4. ເອດີບີ ແລະລັດຖະບານຄວນຈະໃຫ້ ເອັນຈີໂອເຂົ້າຮ່ວມໃນການກະກຽມໂຄງການກູ້ຢືມຢ່າງໜ້ອຍ 1 ລາຍການ.

A5. ເອດີບີຄວນຈະສ້າງຄວາມເຂັ້ມແຂງໃນການປຶກສາຫາລືຢູ່ສະໜາມກັບພາກສ່ວນກ່ຽວຂ້ອງເພື່ອຮັບປະກັນໃຫ້ມີການຮ່ວມມືກັບຊຸມຊົນກ່ອນໂຄງການຈະໄດ້ຮັບການອະນຸມັດພ້ອມທັງໃຫ້ມີການປຶກສາຫາລືກັບສາທາລະ ນະຊົນ ເພື່ອວັດແທກຜົນປະໂຫຍດກ່ອນເລີ້ມຕົ້ນປະຕິບັດໂຄງການ.

A6. ສໍາລັບນະໂຍບາຍແລະແຜນການໂຄງການຕ່າງໆໃນລະດັບຊາດ ແລະໃນຂະແໜງການທີ່ເອດີບີມີສ່ວນກ່ຽວຂ້ອງ, ເອດີບີຄວນຈັດຫາການຊ່ວຍເຫຼືອດ້ານເຕັກນິກເພື່ອເສີມຂະຫຍາຍການຮ່ວມມືລະຫວ່າງ ຫຼາຍໆຝ່າຍ.

A7. ເອດີບີຄວນຈະໃຫ້ ເອັນຈີໂອເຂົ້າຮ່ວມຢ່າງກ້ວາງຂວາງໃນການພັດທະນານະໂຍບາຍຂອງເອດີບີ.

A8. ເອດີບີຄວນແນະນໍາໃຫ້ ເອັນຈີໂອ ແລະບັນດາຜູ້ທີ່ມີໄດ້ຮັບຜົນໃຫ້ປະກອບສ່ວນໃນການຕິດຕາມ ແລະປະເມີນຜົນໂຄງການທີ່ສະໜັບສະໜູນໂດຍ ເອດີບີ, ແລະຈະຕ້ອງເລີ້ມຈາກໂຄງການທີ່ໃຫຍ່ ແລະສັບສົນເຊິ່ງມີຜົນກະທົບໃນຫຼາຍດ້ານ.

[12] ໃນປີ 2001 ແຕ່ລະຫ້ອງການເອດີບີປະຈໍາປະເທດໄດ້ແຕ່ງຕັ້ງຜູ້ຊ່ຽວຊານດ້ານ ເອັນຈີໂອ. ຫາກແຕ່ວ່າບໍ່ມີຜູ້ໃດໃນນີ້ທີ່ໃຫ້ເວລາເຕັມໃຫ້ແຕ່ລະຊຸມຊົນພົນລະ

A9. ຈົນເຖິງປີ 2005 ເອດີບີຄວນຈະແຕ່ງຕັ້ງ ພະນັກງານຮັບຜິດຊອບປະສານງານກັບ ເອັນຈີໂອ 3-5 ຕໍາແໜ່ງ ໃນຫ້ອງການເອດີບີປະຈໍາປະເທດໃນປະເທດທີ່ມ ເອັນຈີໂອເຄື່ອນໄຫວຢ່າງຫ້າວຫັນ.

### b. ໃນລະດັບຂົງເຂດຍ່ອຍ

85. ມີການສະເໜີໃຫ້ມີກອງປະຊຸມປະຈໍາປີລວມທັງຕົວແທນ ເອັນຈີໂອເຊິ່ງຈະຈັດຕັ້ງຂຶ້ນໃນແຕ່ລະຂົງເຂດຍ່ອຍ ຂອງ ເອດີບີ, ເຊັ່ນອາຊີໃຕ້, ອາຊີຕະເວັນອອກສຽງເໜືອ ແລະ ກາງ, ຂົງເຂດແມ່ຂອງ ແລະ ອາຊີຕະເວັນອອກສຽງ ໃຕ້, ແລະແປຊິຟິກ. ກອງປະຊຸມຂັ້ນຂົງເຂດຍ່ອຍຄວນສຸມໃສ່ບັນຫາທຄວນເອົາໃຈໃສ່ລວມຂອງປະເທດ ພາຍໃນຂົງ ເຂດຍ່ອຍແຕ່ລະເຂດນັ້ນ ແລະກວມເອົາໂຄງການເອດີບີລະຫວ່າງປະເທດ ຫຼືກິດຈະກໍາອື່ນໆຂອງຂົງເຂດຍ່ອຍເຊັ່ນ ການສຶກສາກ່ຽວກັບການລຸດຜ່ອນຄວາມທຸກຍາກ ແລະຍຸດທະສາດຕ່າງໆ, ບັນຫາດ້ານສັງຄົມ ແລະສະພາບແວດ ລ້ອມ, ການປ່ຽນແປງ ແລະປັບປຸງສະຖາບັນ, ແລະບັນດາໂຄງການ ແລະແຜນການໂຄງການພັດທະນາຂົງເຂດຍ່ອຍ ຕ່າງໆ. ເອດີບີຄວນພະຍາຍາມນໍາໃຊ້ວິທີການຕ່າງໆທີ່ມີຢູ່ແລ້ວເພື່ອກ້າວໄປເຖິງຈຸດປະສົງນີ້ເຊັ່ນ ກຸ່ມຄະນະວິໃຈຂະ ແໜງການໃນແຜນການໂຄງການລຸ່ມແມ່ນໍ້າຂອງທີ່ຄວນເຊີນບັນດາ ເອັນຈີໂອເຂົ້າຮ່ວມການ ສົນທະນາໃນນາມ ເພື່ອນຮ່ວມງານ.

86. ຄວນຈະລິເລີ່ມຈັດຕັ້ງກອງປະຊຸມຂົງເຂດຍ່ອຍໃນປີທໍາອິດຂອງໂຄງຮ່າງການຮ່ວມມືລະຫວ່າງເອດີບີ-ເອັນ ຈີໂອ, ເຊັ່ນ ບັນດາກົມກອງພາຍໃນຂົງເຂດ ແລະຫ້ອງການເອດີບີປະຈໍາປະເທດເປັນຜູ້ນໍາພາໃນການຈັດຕັ້ງຮ່ວມມື ກັບບັນດາ ລັດຖະບານປະເທດຊະມາຊິກ ທີ່ກໍາລັງພັດທະນາ. ມີຄວາມສໍາຄັນຫຼາຍທີ່ຕ້ອງເຊີ່ງຕົວແທນຂອງ ເອັນຈີ ໂອທັງໝົດເຂົ້າຮ່ວມກອງປະຊຸມຂົງເຂດຍ່ອຍນີ້, ລວມທັງການປຶກສາຫາລືກະກຽມລາຍການກອງປະຊຸມ ຫຼືຫົວຂໍ້ທີ່ຈະ ສົນທະນາ.

<u>ສັງລວມຂໍ້ສະເໜີປະຕິບັດ</u>:

A10. ກອງປະຊຸມຂົງເຂດຍ່ອຍປະຈໍາປີຄວນຈະຈັດຂຶ້ນໂດຍເອດີບີ ແລະລັດຖະບານເພື່ອປຶກສາຫາລືບັນຫາຂົງ ເຂດຍ່ອຍ ແລະ ບັນຫາລະຫວ່າງປະເທດ ແລະ ບັນຫາກ່ຽວຂ້ອງຕ່າງໆ, ໂດຍນໍາໃຊ້ກົນໄກທີ່ມີຢູ່ແລ້ວ. ຖ້າ ເປັນໄປໄດ້. ຜູ້ແທນຂອງບັນດາເອັນຈີໂອໃນນາມເພື່ອນຮ່ວມງານຕ່າງໆຄວນຈະເຂົ້າຮ່ວມຢ່າງເຕັມທີ່ຢູ່ໃນ ກອງປະຊຸມນີ້.

### c. ໃນລະດັບຂົງເຂດ

87. ກອງປະຊຸມໃນລະດັບຂົງເຂດໄດ້ສະເໜີໃຫ້ຈັດຕັ້ງພາຍໃນສາມປີທໍາອິດຂອງໂຄງຮ່າງການຮ່ວມມືລະຫວ່າງ ເອດີບີ-ເອັນຈີໂອ, ຈັດຂຶ້ນເພື່ອປຶກສາຫາລືກ່ຽວກັບຍຸດທະສາດ, ຫົວຂໍ້ກ່ຽວກັບຂະແໜງການ ແລະ ສະຖາບັນກ່ຽວ ຂ້ອງ. ເອດີບີຄວນໃຫ້ທຶນສະໜັບສະໜູນກອງປະຊຸມຂົງເຂດລະຫວ່າງ ເອດີບີ-ລັດຖະບານ-ເອັນຈີໂອ ແລະລັດຖະ ບານ ແລະເອັນຈີໂອຄວນປະກອບສ່ວນຢ່າງຫ້າວຫັນໃນການຈັດຕັ້ງລາຍການກອງ ປະຊຸມ ແລະ ກະກຽມກອງປະຊຸມ.

---

ເຮືອນ ແລະ ຫຼາຍຄົນມີຄວາມຮັບຜິດຊອບຫຼາຍດ້ານ ທີ່ແຂ່ງຂັນເອົາເວລາໄປ

88. ອີງຕາມຄວາມສຳເລັດຂອງກອງປະຊຸມເອດີບີ-ລັດຖະບານ-ເອັນຈີໂອຄັ້ງທຳອິດ, ເອດີບີອາດຈະພິຈາລະນາຈັດຕັ້ງກອງປະຊຸມດັ່ງກ່າວຂຶ້ນໃນແຕ່ລະສອງປີກ່ອນກອງປະຊຸມປະຈຳປີ ຂອງຄະນະບໍລິຫານງານຂອງເອດີບີ (ແລະໃນກໍລະນີທີ່ກອງປະຊຸມນີ້ຖືກຈັດຂຶ້ນໃນເຂດອາຊີ ແລະ ແປຊີຟິກ, ບໍ່ແມ່ນໃນປະເທດທີ່ບໍ່ມີການກູ້ຢືມ).

<u>ສັງລວມຂໍ້ສະເໜີປະຕິບັດ</u>:

A11. ເອດີບີຄວນຈະຈັດກອງປະຊຸມເອດີບີ-ລັດຖະບານ-ເອັນຈີໂອຄັ້ງທຳອິດຂຶ້ນພາຍໃນສາມປີທຳອິດຂອງການປະຕິບັດໂຄງຮ່າງການຮ່ວມມືລະຫວ່າງ ເອດີບີ-ເອັນຈີໂອ. ກອງປະຊຸມຂົງເຂດ ອາດຈະຈັດຂຶ້ນໃນທຸກສອງປີຄຽງຄູ່ກັບກອງປະຊຸມປະຈຳປີຂອງເອດີບີ ຖ້າກອງປະຊຸມນັ້ນແມ່ນຈັດຂຶ້ນໃນຂົງເຂດອາຊີ ແລະ ແປຊີຟິກ.

## B. ເສີມຂະຫຍາຍຄວາມໂປ່ງໃສ ແລະ ຄວາມຮັບຜິດຊອບໂດຍເຂົ້າເຖິງຂໍ້ມູນຂ່າວສານ

89. ເພື່ອໃຫ້ມີການຮ່ວມມືທີ່ມີປະສິດທິພາບ, ທຸກພາກສ່ວນກ່ຽວຂ້ອງຈະຕ້ອງແລກປ່ຽນຂໍ້ມູນເຊິ່ງກັນ ແລະ ກັນຢ່າງເປີດເຜີຍ. ການປະສານງານແບບນີ້ຈະຊ່ວຍສ້າງບັນຍາກາດໃຫ້ມີຄວາມເຂົ້າໃຈເຊິ່ງກັນແລະກັນ ແລະຄວາມຄິດດີຕໍ່ກັນ. ເອດີບີຈະຕ້ອງເກັບກຳ ແລະ ໃຫ້ຂໍ້ມູນທີ່ມີຄຸນນະພາບກ່ຽວກັບນະໂຍບາຍຂອງເອດີບີໃຫ້ແກ່ພາກສ່ວນກ່ຽວຂ້ອງອື່ນໆ, ແຜນການໂຄງການ ແລະບັນດາໂຄງການຕ່າງໆທັນເວລາ ແລະຂຽນໃນຮູບແບບທີ່ເຂົ້າໃຈງ່າຍ. ພາຍໃຕ້ນະໂຍບາຍກ່ຽວກັບການປິດລັບ ແລະ ການເປີດເຜີຍຂໍ້ມູນຂອງເອດີບີ, ມີຂໍ້ມູນຈຳນວນຫຼວງຫຼາຍທີ່ໄດ້ເປີດເຜີຍຕໍ່ສາທາລະນະຊົນຖ້າຕ້ອງການ. ນອກຈາກນັ້ນ, ເອດີບີໄດ້ໃຫ້ເອກະສານ ແລະຈັດພິມວາລະສານ, ອິນເຕີເນັດ, ກອງປະຊຸມ ແລະສື່ອື່ນໆ. ໃນບາງກໍລະນີເອດີບີໄດ້ຈັດຕັ້ງສູນຂໍ້ ມູນຂ່າວສານຂອງໂຄງການ ເພື່ອແຈກຢາຍຂໍ້ມູນກ່ຽວກັບບາງໂຄງການກູ້ຢືມ.

90. ເຖິງຢ່າງໃດກໍ່ຕາມ, ຜູ້ຕາງໜ້າ ເອັນຈີໂອ ແລະມະຫາຊົນທີ່ກ່ຽວຂ້ອງຍັງບໍ່ມີຂໍ້ມູນ ທີ່ພຽງພໍກ່ຽວກັບນະໂຍບາຍຂອງເອດີບີ ແລະແຜນການໂຄງການ ແລະ ບັນດາໂຄງການຂອງເອດີບີເພື່ອຊ່ວຍໃຫ້ ເຂົາເຈົ້າສາມາດຕັດສິນໃຈແບບມີເຫດຜົນ ແລະໃຫ້ເຂົາເຈົ້າມີສ່ວນຮ່ວມຢ່າງເຕັມສ່ວນໃນນາມພາກສ່ວນກ່ຽວຂ້ອງໃນຂະບວນການພັດທະນາ. ການແຈກຢາຍຂໍ້ມູນຂ່າວສານຢ່າງທ່ວງທັນແມ່ນເປັນກຸນແຈສ້າງຄວາມເຂັ້ມແຂງການປະສານງານ ລະຫວ່າງລັດຖະບານ ແລະມະຫາຊົນໃນລະດັບປະເທດ, ມີຂໍ້ມູນຈຳກັດກ່ຽວກັບໂຄງການຕ່າງໆ ແລະມີພຽງຈຳນວນນ້ອຍ ທີ່ແປເປັນພາສາທ້ອງຖິ່ນ. ບັນດາ ເອັນຈີໂອໄດ້ສະ ແດງຄວາມເປັນຫ່ວງເປັນປະຈຳວ່າ ເຂົາເຈົ້າບໍ່ສາມາດເຂົ້າເຖິງຂໍ້ມູນຂ່າວສານໃນຂັ້ນອອກແບບໂຄງການ, ແລະໄລຍະ ຮ່າງໂຄງການກ່ອນມີການຕັດສິນໃຈທີ່ສຳຄັນ. ນອກຈາກນີ້, ເອດີບີຍັງມີຂໍ້ມູນບໍ່ພຽງພໍກ່ຽວກັບບັນດາ ເອັນຈີໂອ ແລະ ຂອບເຂດການງານ, ຄວາມອາດສາມາດ ແລະ ການຮ່ວມມືຂອງເຂົາເຈົ້າກັ ບັນດາລັດຖະບານ.

### 1. ການຂະຫຍາຍຖານຂໍ້ມູນກ່ຽວກັບ ເອັນຈີໂອ

91. ເພື່ອປັບປຸງສິ່ງສົມການຕັດສິນໃຈໃຫ້ດີຂຶ້ນ ແລະສ້າງການຮ່ວມມື ແລະ ປັບປຸງໃຫ້ມີຂໍ້ມູນຂ່າວສານແກ່ທຸກພາກສ່ວນກ່ຽວຂ້ອງ, ເອດີບີຄວນສືບຕໍ່ປ້ອນຂໍ້ມູນ ແລະ ປົກປັກຮັກສາຂໍ້ມູນກ່ຽວກັບ ເອັນຈີໂອໃນຖານຂໍ້ມູນພົວພັນ *ເອັນຈີໂອລິ້ງ* ທີ່ສ້າງຕັ້ງຂຶ້ນໃໝ່ໆນີ້. *ເອັນຈີໂອລິ້ງ* ມີສ່ວນຊ່ວຍຮັກສາຂໍ້ມູນກ່ຽວກັບ ເອັນຈີໂອ ແລະຂໍ້ມູນອື່ນໆ ກ່ຽວກັບການເຮັດວຽກຂອງ ເອັນຈີໂອກັບເອດີບີ ຫຼືໃນການລິເລີ່ມກິດຈະກຳໃນຂົງເຂດທີ່ເອດີບີສະໜັບສະໜູນ. ເອດີບີຈະພະຍາຍາມໃຫ້ບັນດາ ເອັນຈີໂອທີ່ມີຂໍ້ມູນໃນ ເອັນຈີໂອລິ້ງເຂົ້າເຖິງຂໍ້ມູນໄດ້. ບັນດາ ເອັນຈີໂອຄວນຮັບຜິດຊອບ

ປ້ອນຂໍ້ມູນ ແລະປັບປຸງຂໍ້ມູນກ່ຽວກັບອົງການຂອງເຂົາເຈົ້າ. ເອດີບີຄວນພິຈາລະນາວິທີນຳໃຊ້ ແລະການ ນຳເອົາຂໍ້ມູນດັ່ງກ່າວມາໃສ່ຖານຂໍ້ມູນຂອງເອດີບີທີ່ມີຢູ່ແລ້ວເພື່ອປ້ອນຂໍ້ມູນ ແລະປັບປູງຂໍ້ມູນທີ່ມີປະສິດທິພາບຫຼາຍ ຂຶ້ນ.

92. ເພື່ອຮັບປະກັນການປົກປັກຮັກສາ *ເອັນຈີໂອລິ້ງ*, ບົດລາຍງານ "ກັບຄືນຫ້ອງການ" ຂອງພະນັກງານຂອງ ເອດີບີຄວນລາຍງານການຮ່ວມມືລະຫວ່າງ ພະນັກງານຂອງເອດີບີກັບ ເອັນຈີໂອ. ພະນັກງານເອດີບີຮັບຜິດຊອບໂຄງການ ແລະແຜນການໂຄງການ ແລະ ຫ້ອງການປະຈຳປະເທດຄວນລາຍງານການປະສານງານ ແລະການປະສານງານກັບ ບັນດາ ເອັນຈີໂອຢ່າງເປັນປະຈຳ ແລະຄວນຈະສົ່ງສຳເນົາບົດລາຍງານນີ້ໃຫ້ສູນເອັນຈີໂອ. ສູນເອັນຈີໂອຄວນຈະປ້ອນຂໍ້ມູນເຂົ້າໃນ *ເອັນຈີໂອລິ້ງ*.

### 2. ການບັນທຶກວິທີການທີ່ດີສຳລັບການຮ່ວມມື

93. ເພື່ອປັບປຸງການຮ່ວມມື ແລະສ້າງການຮ່ວມມື ລະຫວ່າງ ເອດີບີ ລັດຖະບານ ແລະ ເອັນຈີໂອ, ວິທີການທີ່ມີປະສິດທິຜົນຄວນຂຽນເປັນເອກະສານໄວ້. ການຮ່ວມມືກັບພາກສ່ວນກ່ຽວຂ້ອງ, ເອດີບີຄວນສ້າງເອກະສານກ່ຽວກັບການປະຕິບັດຕົວແບບສຳລັບການຮ່ວມມືລະຫວ່າງ ເອດີບີ-ລັດຖະບານ-ເອັນຈີໂອ. ອັນນີ້ແມ່ນຄົ້ນຄວ້າຈາກບົດຮຽນໃນການປະຕິບັດຜ່ານມາ, ຂໍ້ແນະນຳເພື່ອປັບປຸງວິທີການໃຫ້ດີຂຶ້ນ. ເອກະສານດັ່ງກ່າວຄວນຖືກທົບທວນ ແລະປັບປຸງຢ່າງເປັນປະຈຳ.

### 3. ການທົບທວນນະໂຍບາຍຂອງເອດີບີກ່ຽວກັບການປິດລັບຂໍ້ມູນ ແລະການເປີດເຜີຍຂໍ້ມູນ

94. ເອດີບີຄວນເຮັດໃຫ້ຈະແຈ້ງວ່າເອກະສານໃດໃນປະຈຸບັນແມ່ນເປີດເຜີຍໃຫ້ສາທາລະນະຊົນໄດ້, ອີງຕາມນະໂຍບາຍ ກ່ຽວກັບການປິດລັບຂໍ້ມູນ ແລະການເປີດເຜີຍຂໍ້ມູນ. ສິ່ງນີ້ຈະບັນລຸໄດ້ໂດຍມີການກະກຽມ ແລະແຈກຢາຍຢ່າງກວ້າງຂວາງກ່ຽວກັບລາຍຊື່ເອກະສານນັ້ນພ້ອມທັງຕົວຢ່າງສະເພາະ. ພ້ອມນັ້ນເອດີບີຄວນຈະພິຈາລະນາການຂະຫຍາຍຂໍ້ ມູນໃນຫຼາຍຮູບແບບທີ່ຈະສົ່ງເຂົ້າບັນດາຫໍສະໝຸດຂອງເອດີບີ, ສະແດງໃນອິນເຕີເນັດ ເຊິ່ງຜູ້ທີ່ສົນໃຈສາມາດຫາໄດ້ຢ່າງງ່າຍດາຍ. ຕົວຢ່າງເອກະສານແມ່ນເອກະສານກ່ຽວກັບການທົບທວນດ້ານເຕັກນິກກະກຽມໂດຍບັນດາທີ່ປຶກສາ, ການເບີກຈ່າຍເງິນກູ້ຢືມ, ແຜນວຽກງານຂອງຄະນະບໍລິຫານງານ ຂອງເອດີບີ; ແລະສັງລວມຜົນກອງປະຊຸມຂອງຄະນະບໍລິຫານງານ. ໃນເມື່ອການໃຫ້ຂໍ້ມູນທີ່ນຳໃຊ້ໄດ້ງ່າຍແມ່ນຂຶ້ນ ກັບ ພາສາ. ດັ່ງນັ້ນເອດີບີຄວນກະກຽມເອກະສານ ເປັນພາສາທ້ອງຖິ່ນ. ໂຄງຮ່າງການຮ່ວມມືລະຫວ່າງ ເອດີບີ-ເອັນຈີໂອ ຄວນຈະແປເປັນຫຼາຍພາສາຫຼັງຈາກໂຄງຮ່າງໄດ້ຖືກຮັບຮອງແລ້ວ. ບັນດາ ເອັນຈີໂອຄວນຈະຊ່ວຍປະກອບສ່ວນໃສ່ຄວາມພະຍາຍາມນີ້ໂດຍສົ່ງຂໍ້ມູນຜ່ານເຄືອຂ່າຍຂອງເຂົາເຈົ້າກ່ຽວກັບເອກະສານຂອງເອດີບີທີ່ມີ.

### 4. ສູນຂໍ້ມູນສາທາລະນະຊົນ

95. ເພື່ອໃຫ້ມີການຮ່ວມມືຈາກພາກສ່ວນກ່ຽວຂ້ອງໃນໂຄງການທີ່ສະໜັບສະໜູນຈາກເອດີບີ, ລັດຖະບານຂອງບັນດາປະເທດຊະມາຊິກທີ່ກຳລັງພັດທະນາ ຄວນໃຫ້ຂໍ້ມູນໂຄງການຢ່າງລະອຽດໃຫ້ແກ່ກຸ່ມທີ່ກ່ຽວຂ້ອງໃຫ້ສອດຄ່ອງກັບນະໂຍບາຍຂອງເອດີບີວ່າດ້ວຍການປິດລັບຂໍ້ມູນ. ໃນໂຄງການ ທີ່ໃຫຍ່ ແລະສັບສົນ, ການຮຽກຮ້ອງຂໍຂໍ້ມູນກ່ຽວກັບໂຄງການເປັນຈຳນວນຫຼາຍ ອາດຈະເປັນວຽກໜັກຕໍ່ພະນັກງານ ຂອງເອດີບີ. ເພື່ອຫຼຸດຜ່ອນໜ້າວຽກນີ້, ວິຊາການໂຄງການຂອງເອດີບີ ແລະອົງການຈັດຕັ້ງປະຕິບັດຂອງລັດຖະບານ ຄວນກຳໜົດວິທີ ທີ່ດີທີ່ສຸດເພື່ອການແຈກຢາຍຂໍ້

ມູນ. ສູນຂໍ້ມູນສາທາລະນະຊົນກ່ຽວກັບຂອບເຂດໂຄງການຜ່ານມາ ເຫັນວ່າຊ່ວຍໄດ້ຫຼາຍ, ເຊັ່ນໂຄງການໄຟຟ້ານ້ຳ ຕົກ ກາລີ ກາດັກກີ"A" ຢູ່ປະເທດເນປານ. "ສູນ" ດັ່ງກ່າວນີ້ຄວນໃຫ້ສາທາລະນະຊົນສາມາດເຂົ້າຫາໄດ້ຢ່າງ່າຍດາຍ ແລະຄວນເກັບເອກະສານທີ່ກ່ຽວຂ້ອງກັບ ເອັນຈີໂອ, ບຸກຄົນທີ່ ອາໃສຢູ່ເຂດໂຄງການ ແລະພາກສ່ວນອື່ນໆທີ່ມີຄວາມ ສົນໃຈ. ຄວນມີບົດລາຍງານຂອງບັນດາໂຄງການກ່ຽວຂ້ອງ, ການປະເມີນຜົນ ແລະ ການຕີລາຄາຜົນກະທົບຈາກການ ປະຕິບັດໂຄງການ.

96. ເອດີບີຈະຕ້ອງຮັບປະກັນໃຫ້ມີເງື່ອນໄຂພຽງພໍໃນຂັ້ນຕອນການກະກຽມໂຄງການ ແລະເອກະສານສັນຍາໂຄງ ການ ເພື່ອໃຫ້ມີການເກັບກຳຂໍ້ມູນພື້ນຖານທີ່ມີປະສິດທິພາບໃນໄລຍະການປະຕິບັດໂຄງການ ແລະໄລຍະການຕິດ ຕາມໂຄງການ. ການຮ່ວມມື ແລະການສະໜັບສະໜູນຂອງພະນັກງານລັດຖະບານຂອງບັນດາປະເທດຊະມາຊິກທີ່ ກຳລັງພັດທະນາ ມີຄວາມສຳຄັນຫຼາຍໃນການໃຫ້ຂໍ້ມູນທ້ອງຖິ່ນເພື່ອເກັບເຂົ້າໃນຖານຂໍ້ມູນ ແລະສາມາດໃຫ້ໝົດທຸກ ຄົນທີ່ຖືກກະທົບສາມາດເຂົ້າຫາຂໍ້ມູນໄດ້. ບັນດາເອັນຈີໂອຄວນຈະຊ່ອຍໃນການເກັບກຳຂໍ້ມູນທີ່ເໝາະສົມ ແລະໃນ ການຕິດຕາມການເກັບກຳຂໍ້ມູນເພື່ອຮັບປະກັນຂໍ້ມູນທີ່ເກັບກຳມານັ້ນຖືກຕ້ອງ

## 5. ກອງປະຊຸມສ້າງຈິດສຳນຶກ ແລະ ການພິມປື້ມຕ່າງໆ

97. ເພື່ອສ້າງຄວາມເຂົ້າໃຈລະຫວ່າງພາກສ່ວນກ່ຽວຂ້ອງທີ່ຕ້ອງການຢາກຮູ້ກ່ຽວກັບເອດີບີ ແລະ ວຽກງານຂອງ ເອດີບີ, ຫ້ອງການເອດີບີປະຈຳປະເທດ ແລະ ຫ້ອງການຕາງໜ້າຕ່າງໆ ຮ່ວມມືກັບບັນດາຫ້ອງການລັດຖະບານຄວນ ຈະຈັດກອງປະຊຸມສ້າງຈິດສຳນຶກ ແລະຈັດພິມບັນດາຂ່າວສານຕ່າງໆເປັນພາສາທ້ອງຖິ່ນ ເພື່ອແຈ້ງໃຫ້ບັນດາ ເອັນຈີ ໂອ, ຂ້າລາດສະການ ແລະ ບັນດາພາກສ່ວນກ່ຽວຂ້ອງອື່ນໆ. ຫ້ອງການເອດີບີປະຈຳປະເທດຄວນຈະຊ່ວຍພະນັກ ງານລັດຖະບານໃນບັນດາປະເທດຊະມາຊິກທີ່ກຳລັງພັດທະນາ ແລະວິຊາການເອດີບີທີ່ຮັບຜິດຊອບໂຄງການ ເພື່ອຈັດ ກອງປະຊຸມສຳລັບພາກສ່ວນກ່ຽວຂ້ອງທ້ອງຖິ່ນກ່ຽວກັບໂຄງການສະເພາະ ຫ້ອງການເອດີບີປະຈຳປະເທດ ເຊັ່ນດຽວ ກັນ ອາດຈະຈັດກອງປະຊຸມລະດັບປະເທດ ເພື່ອອະທິບາຍໃຫ້ບັນດາ ເອັນຈີໂອ ແລະພາກສ່ວນກ່ຽວຂ້ອງ ອື່ນໆກ່ຽວ ກັບແຜນການໂຄງການເອດີບີ ແລະ ວົງຈອນຂອງໂຄງການ, ຂັ້ນຕອນທຸລະກິດຂອງເອດີບີ ແລະ ຂໍ້ມູນອື່ນໆ. ບັນດາ ກອງປະຊຸມນີ້ ທີ່ເອດີບີໄດ້ສະໜັບສະໜູນຄວນຈະໃຫ້ພື້ນຖານຂໍ້ມູນທີ່ຈະຊ່ວຍໃຫ້ມີການຮ່ວມມື ໃຫ້ແກ່ບັນ ດາເອັນ ຈີໂອ ແລະ ບັນດາ ພາກສ່ວນກ່ຽວຂ້ອງອື່ນໆ (ລວມທັງລັດຖະບານ). ວິທີກະຈາຍຂໍ້ມູນແບບອື່ນຄວນນຳໃຊ້ສຳລັບ ແຈກຢາຍຂໍ້ມູນທົ່ວໄປໃຫ້ພົນລະເມືອງກວມເອົາທັງສິ່ງພິມໂຄສະນາ, ຂ່າວສານ, ນິທານ, ການສື່ສານ ທາງດ້ານອີ ເລັກໂທຣນິກ, ການພິມ, ເວັບໃຊ້, ການທັດສະນະ.

<u>ສັງລວມຂໍ້ສະເໜີປະຕິບັດ</u>:

A12. ສູນເອັນຈີໂອຄວນໃຫ້ສາທາລະນະຊົນເຂົ້າເຖິງຂໍ້ມູນ ເອັນຈີໂອ ແລະປັບປຸງຄວາມຮູ້ ຂອງເອດີບີກ່ຽວກັບບັນ ດາເອັນຈີໂອ.

A13. ພະນັກງານເອດີບີ ແລະ ຫ້ອງການເອດບີປະຈຳປະເທດຄວນລາຍງານການຮ່ວມມືຂອງ ເອັນຈີໂອໃນ "ບົດ ລາຍງານກັບຄືນຫ້ອງການ" ແລະສິ່ງສຳເນົາຂອງບົດລາຍງານນີ້ ແລະ ການສື່ສານອື່ນໆທີ່ສຳຄັນກັບບັນດາ ເອັນຈີໂອໃຫ້ແກ່ສູນເອັນຈີໂອເພື່ອປ້ອນເຂົ້າຖານຂໍ້ມູນສູນກາງເອັນຈີໂອ.

| | |
|---|---|
| A14. | ສູນເອັນຈີໂອຄວນກະກຽມການພິມວິທີການທີ່ດີ ແລະ ບົດຮຽນໃນການຮ່ວມມືລະຫວ່າງອົງການສາກົນ, ລັດຖະບານ ແລະ ເອັນຈີໂອ. ປຶ້ມນີ້ຄວນຈະດັດແກ້ ແລະ ປັບປຸງເປັນປະຈຳ. |
| A15. | ເອດີບີຄວນປະເມີນຂໍ້ມູນທີ່ປະຈຸບັນທີ່ສາທາລະນະຊົນສາມາດຮູ້ໄດ້ ແລະ ພິຈາລະນາການຂະຫຍາຍຖັນຂໍ້ມູນທີ່ບຸກຄົນ ແລະອົງການທີ່ສົນໃຈສາມາດນຳໃຊ້ໄດ້. |
| A16. | ລັດຖະບານຄວນຊຸກຍູ້ການຈັດຕັ້ງສູນຂໍ້ມູນສາທາລະນະຊົນຕາມຄວາມເໝາະສົມສຳລັບໂຄງການໃຫຍ່ ແລະ ສັບສົນ. |
| A17. | ລັດຖະບານ ແລະ ຫ້ອງການເອດີບີປະຈຳປະເທດ ແລະ ຫ້ອງການຕົວແທນຄວນຊຸກຍູ້ຈັດຕັ້ງກິດຈະກຳສ້າງຈິດສຳນຶກກ່ຽວກັບວຽກງານເອດີບີ ແລະ ຜລິດປຶ້ມເປັນພາສາທ້ອງຖິ່ນ. |

## C. ການພັດທະນາຄວາມອາດສາມາດຂອງເອດີບີເພື່ອການຮ່ວມມືກັບເອັນຈີໂອ

98. ຈຸດສຸມຂອງການສ້າງຄວາມອາດສາມາດທີ່ກ່ຽວກັບເອັນຈີໂອພາຍໃນເອດີບີແມ່ນການສ້າງຈິດສຳນຶກ ແລະ ຄວາມຊຳນິຊຳນານຂອງພະນັກງານເອດີບີ ພ້ອມທັງເພີ້ມຊັບພະຍາກອນຂອງອົງການ ແລະ ຄຳໝັ້ນສັນຍາທີ່ຈະເຮັດໃຫ້ການຮ່ວມມືກັບ ເອັນຈີໂອເຂັ້ມແຂງຂຶ້ນ. ອັນນີ້ແມ່ນໄດ້ເຊື່ອມຕໍ່ເຂົ້າການປ່ຽນແປງຂອງສະຖາບັນຢ່າງກ້ວາງຂວາງ ແລະ ຂັ້ນຕອນການຕັດສິນໃຈທີ່ໄດ້ສະເໜີຜ່ານການຈັດຕັ້ງຄືນໃໝ່ຂອງເອດີບີໃນປີ 2002 ແລະ ການສເໜີ "ວິທີການທຸລະກິດໃໝ່" ຂອງເອດີບີ. ການເສີມສ້າງຄວາມອາດສາມາດພາຍໃນນີ້ຄວນຈະປະຕິບັດຢູ່ສູນກາງເອດີບີພ້ອມທັງຫ້ອງ ການຕົວແທນ ແລະ ຫ້ອງການປະຈຳປະເທດຂອງເອດີບີ.

### 1. ການຮ່ວມມື ແລະ ການເຝິກອົບຮົມໃນການປະສານກັບ ເອັນຈີໂອສຳລັບພະນັກງານເອດີບີ

99. ໃນໄລຍະປີ 2002, ກົມພັດທະນາທີ່ຍືນຍົງ ແລະ ຂົງເຂດຂອງເອດີບີໄດ້ຈັດຕັ້ງປະຕິບັດການເຝິກອົບຮົມທີ່ສຳເລັດສຳລັບພະນັກງານເອດີບີກ່ຽວກັບການພັດທະນາແບບມີສ່ວນຮ່ວມ ແລະ ການປະສານກັບ ເອັນຈີໂອ, ເອດີບີຄວນສືບຕໍ່ພັດທະນາ ແລະ ຂະຫຍາຍກິດຈະກຳນີ້ ແລະ ຄົ້ນຄວ້າວິທີເຊື່ອມຕໍ່ກິດຈະກຳຕ່າງໆ. ການລິເລີ້ມການເຝິກອົບຮົມເຫຼົ່ານີ້ຄວນຈະເພີ້ມຈິດສຳນຶກ, ຄວາມຊຳນິຊຳນານ ແລະ ການກະຕຸກຊຸກຍູ້ຂອງພະນັກງານເອດີບີ. ແຕ່ລະປີເອດີບີຄວນຈັດຕັ້ງການວິເຄາະຄວາມຕ້ອງການດ້ານເຝິກອົບຮົມເພື່ອປະເມີນຄວາມຊຳນິຊຳນານທີ່ຕ້ອງການຂອງເອດີບີເພື່ອເຮັດວຽກນຳ ເອັນຈີໂອລວມທັງຄວາມຊຳນິຊຳນານສະເພາະ ຫຼື ຄວາມອາດສາມາດທີ່ຕ້ອງການເພື່ອຈັດຕັ້ງປະຕິບັດໂຄງຮ່າງການຮ່ວມມືລະຫວ່າງເອດີບີ-ເອັນຈີໂອ. ຄວນໃສ່ໃຈພິເສດໃຫ້ແກ່ການເຝິກອົບຮົມພະນັກງານໃໝ່ຂອງເອດີບີ.

100. ທີ່ປຶກສາຂອງເອດີບີເຮັດວຽກເປັນປະຈຳກັບບັນດາ ເອັນຈີໂອໂດຍສະເພາະໃນການກະກຽມ ແລະ ການຈັດຕັ້ງປະຕິບັດໂຄງການ. ໃນໜ້າວຽກການສ້າງຄວາມອາດສາມາດ ເອດີບີຈະພິຈາລະນາການສ້າງຈິດສຳນຶກຂອງທີ່ປຶກສາຂອງເອດີບີ.

### 2. ບົດບາດເອັນຈີໂອໃນຮູບແບບບົດຮຽນການແນະນຳໃຫ້ຮູ້ຂັ້ນຕອນການພັດທະນາ

101. ໃນຄວາມພະຍາຍາມເພື່ອໃຫ້ພະນັກງານໃໝ່ຂອງເອດີບີເຮັດວຽກແບບມີປະສິດທິພາບກັບເອັນຈີໂອ, ເອັນຈີໂອຄວນພັດທະນາຮູບແບບກ່ຽວກັບບົດບາດຂອງເອັນຈີໂອໃນຂັ້ນຕອນຂອງການພັດທະນາ ແລະ ນຳຮູບແບບນີ້ເຂົ້າໄປໃນຫຼັກສູດການແນະນຳສຳລັບພະນັກງານເອດີບີ. ຮູບແບບນີ້ຄວນຈະສັງລວມຫຍໍ້ວິທີການທີ່ເອດີບີເນັ້ນຍໍ້າການຮ່ວມມືຂອງພາກສ່ວນກ່ຽວຂ້ອງ, ແລະ ວິທີທີ່ພະນັກງານຈະຕ້ອງຖືກຝຶກອົບຮົມ ແລະ ຊອກຫາຂໍ້ມູນເພີ້ມ. ຫຼັງຈາກສ້າງຕັ້ງຂຶ້ນແລ້ວ ຮູບແບບນີ້ສາມາດນຳເຂົ້າໄປໝົດທຸກບົດຮຽນແນະນຳ ເພື່ອເປີດເຜີຍໃຫ້ກ້ວາງຂວາງຕໍ່ພະນັກງານເອດີບີ.

### 3. ການຮັບຮູ້ວຽກງານຂອງພະນັກງານເອດີບີທີ່ເຮັດວຽກກັບບັນດາ ເອັນຈີໂອ

102. ທີ່ເໝາະສົມກັບຄວາມສຳຄັນທີ່ເອດີບີໃຫ້ແກ່ການຮ່ວມມືກັບ ເອັນຈີໂອ, ເອດີບີຄວນອອກແບບ ແລະ ນຳໃຊ້ລະບົບທີ່ເໝາະສົມເພື່ອຮັບຮູ້ວຽກງານຂອງເອດີບີທີ່ເຮັດວຽກກັບບັນດາ ເອັນຈີໂອແບບຫ້າວຫັນ. ວິທີການໃໝ່ໆ ທີ່ຈະສ້າງຂຶ້ນເພື່ອຮັບຮູ້ວຽກງານຂອງພະນັກງານ ອາດຈະລວມເອົາການພິມຕົວຢ່າງເຫດການໃດໜຶ່ງ ທີ່ເປັນການປະຕິຮູບໃໝ່.

### 4. ແຜນງານການແລກປ່ຽນພະນັກງານ

103. ເອດີບີໄດ້ທົດລອງແຜນງານການແລກປ່ຽນພະນັກງານແບບເປັນຮອບວຽນ ທີ່ພະນັກງານເອັນຈີໂອມາປະຈຳຢູ່ເອດີບີ ເພື່ອຮັບວຽກງານທີ່ມອບໝາຍ ກ່ຽວກັບການຮ່ວມມືລະຫວ່າງ ເອດີບີ-ເອັນຈີໂອ. ເອດີບີຄວນຈະຄົ້ນຄວ້າຄວາມເປັນໄປໄດ້ເພື່ອຈະຂະຫຍາຍແຜນງານປະຈຸບັນນີ້ໃຫ້ເປັນການແລກປ່ຽນລະຫວ່າງສອງຝ່າຍທີ່ສາມາດໃຫ້ພະນັກງານເອດີບີໄປຢູ່ກັບ ເອັນຈີໂອ ແລະພະນັກງານ ເອັນຈີໂອມາຢູ່ເອດີບີໃນໄລຍະເວລາໃດໜຶ່ງທີ່ໄດ້ລະບຸໄວ້. ໄລຍະເວລານີ້ອາດຈະເລີ້ມເປັນສອງອາທິດ ຫຼື ຫຼາຍກ່ວານັ້ນອີງຕາມເນື້ອໃນຂອງໜ້າວຽກທີ່ກ່ຽວຂ້ອງ, ການແລກປ່ຽນນີ້ຄວນ ຈະປະຕິບັດໃນກິດຈະກຳທີ່ມີການຈຳກັດດ້ານເວລາ ແລະ ບໍ່ຕໍ່ເນື່ອງເພື່ອປັບປຸງການຮຽນແບບຮ່ວມກັນ.

<u>ສັງລວມຂໍ້ສະເໜີປະຕິບັດ</u>:

A18. ເອດີບີຄວນສືບຕໍ່ການເຝິກອົບຮົມສຳລັບພະນັກງານເອດີບີກ່ຽວກັບ ການພັດທະນາແບບມີສ່ວນຮ່ວມ ແລະ ການຮ່ວມມືກັບເອັນຈີໂອ. ນອກຈາກນັ້ນເອດີບີຄວນສ້າງຕັ້ງຮູບແບບບົດຮຽນການແນະນຳຫຍໍ້ສຳລັບພະນັກງານໃໝ່ຂອງ ເອດີບີ.

A19. ເອດີບີຄວນຈະສ້າງວິທີການເພື່ອຮັບຮູ້ວຽກງານຂອງພະນັກງານທີ່ເຮັດວຽກແບບຫ້າວກັນກັບ ເອັນຈີໂອ ແລະເພີ້ມການຮ່ວມມືຂອງຜູ້ທີ່ມີສ່ວນກ່ຽວຂອງ.

A20. ເອດີບີຄວນຈະສຶກສາການສ້າງຕັ້ງແຜນງານການແລກປ່ຽນພະນັກງານທັງສອງຝ່າຍ ເອດີບີ-ເອັນຈີໂອ.

## D. ການສ້າງຄວາມອາດສາມາດໃຫ້ ເອັນຈີໂອ ແລະ ຈັດຫາການຊຸກຍູ້ສິ່ງເສີມແຫ່ງສະຖາບັນ

104. ໃນຫຼາຍປີຜ່ານມາ ເອັນຈີໂອໄດ້ສະແດງໃຫ້ເຫັນວ່າເຂົາເຈົ້າເປັນພາກສ່ວນກ່ຽວຂ້ອງຫຼັກໃນການພັດທະນາ. ເອດີບີມີປະສົບການຫຼາຍມາກ່ອນແລ້ວກ່ຽວກັບການເຮັດວຽກກັບ ເອັນຈີໂອ ສ່ວນໃຫຍ່ແມ່ນນຳໃຊ້ເຂົາເຈົ້າເປັນທີ່ປຶກສາແບບບໍ່ທາງການ, ເປັນຜູ້ຮັບເໝົາຂອງໂຄງການໃຫ້ລັດຖະບານ, ແລະ ບາງເທື່ອເປັນຜູ້ຈັດຕັ້ງປະຕິບັດອົງປະກອບສະເພາະຂອງບັນດາກິດຈະກຳການພັດທະນາ ທີ່ເອດີບີໄດ້ສະໜັບສະໜູນ.

105. ຫາກແຕ່ວ່າ, ການພົວພັນລະຫວ່າງເອດີບີ-ລັດຖະບານ-ເອັນຈີໂອທີ່ບໍ່ຢຸດຢັ້ງແມ່ນໄດ້ຖືກຈຳກັດໂດຍປັດໃຈຕ່າງໆດັ່ງຕໍ່ໄປນີ້: ກ). ບໍ່ມີກອງທຶນໂດຍກົງທີ່ພຽງພໍສຳລັບ ເອັນຈີໂອ; ຂ). ການໃຫ້ທຶນເປັນແຕ່ລະໂຄງການ ຫຼື ໃນຮູບແບບການຈຳກັດເວລາເປັນພື້ນຖານ; ຄ). ຄວາມບໍ່ເຂົ້າໃຈ ແລະ ການກະຈາຍຂໍ້ມູນຕາມເວລາໃຫ້ ເອັນຈີໂອ ແລະ ຜູ້ທີ່ຖືກຜົນກະທົບທີ່ບໍ່ພຽງພໍ ແລະ ງ). ຄວາມບໍ່ເຂົ້າໃຈ ແລະ ບໍ່ມີຄວາມອາດສາມາດ, ການບໍ່ມີຄຳໝັ້ນສັນຍາ ຫຼື ການຄັດຄ້ານຈາກບາງລັດຖະບານຕໍ່ການພັດທະນາ ເອັນຈີໂອ ຫຼືຊຸມຊົນພົນລະເຮືອນທີ່ຈູບຈ້າວຫ້າວຫັນ ແລະມີຊີວິດຊີວາ.

106. ເຖິງແມ່ນວ່ານະໂຍບາຍຂອງເອດີບີວ່າດ້ວຍການຮ່ວມມືລະຫວ່າງເອດີບີ ແລະ ເອັນຈີໂອ[13] ຮັບຮູ້ຢ່າງຈະແຈ້ງຄວາມສຳຄັນການຊຸກຍູ້ສິ່ງເສີມທາງດ້ານ ການສ້າງຄວາມອາດສາມາດໃຫ້ ເອັນຈີໂອມາຮອດປະຈຸບັນເອດີບີຍັງບໍ່ມີກົນໄກ ທີ່ຈະຈັດຫາທຶນໂດຍກົງໃຫ້ ເອັນຈີໂອ. ໃນນາມເປັນທະນາຄານພັດທະນາຂົງເຂດ ເອດີບີແມ່ນໃຫ້ທຶນກູ້ຢືມ ແລະ ທຶນຊ່ວຍເຫຼືອຫຼ້າໂດຍກົງໃຫ້ບັນດາລັດຖະບານໃນບັນດາປະເທດຊະມາຊິກທີ່ກຳລັງພັດທະນາຂອງຕົນ. ຍິ່ງໄປກວ່ານັ້ນມີຄວາມຕ້ອງການທີ່ຈະສ້າງຄວາມເຂັ້ມແຂງຄວາມອາດສາມາດຂອງ ເອັນຈີໂອເພື່ອຊອກຫາກອງທຶນຍືນຍົງຈາກແຫຼ່ງອື່ນໆ.

107. ຍ້ອນວ່າ ເອັນຈີໂອມີຄວາມສຳຄັນໃນນາມຜູ້ຮ່ວມພັດທະນາຫຼັກ, ເອດີບີຈະຕ້ອງພະຍາຍາມຫຼາຍຂຶ້ນເພື່ອຊຸກຍູ້ ເອັນຈີໂອໃນບົດບາດເປັນຕົວແທນ, ຜູ້ວ່າຕາງ, ຜູ້ສ້າງຄວາມອາດສາມາດ, ຜູ້ລິເລີ້ມສິ່ງໃໝ່ໃນການພັດທະນາ ແລະ ໃນນາມເປັນກະບອກສຽງທີ່ມີປະສິດທິພາບຂອງຜູ້ດ້ອຍໂອກາດ ຫຼື ກຸ່ມທີ່ຢູ່ເຂດຫ່າງໄກ.

### 1. ການທົບທວນກົນໄກການໃຫ້ທຶນໃນປະຈຸບັນ

108. ເອດີບີຄວນທົບທວນຄືນການບໍລິຫານກອງທຶນໃຫ້ແກ່ ເອັນຈີໂອທີ່ມີປະສິດທິພາບ ແລະ ສ້າງວິທີການໃໝ່ທີ່ເໝາະສົມ. ທີ່ໄດ້ລະບຸຢູ່ໃນຍຸດທະສາດໄລຍະກາງຂອງເອດີບີ[14], ເອດີບີຄວນທົບທວນວິທີການທີ່ ເອັນຈີໂອໄດ້ຮັບຫຼືເບີກຈ່າຍທຶນຈາກເອດີບີ. ການທົບທວນຄວນຈະບົ່ງຊີ້ປະສິດທິພາບ, ຜົນກະທົບ ແລະ ລາຄາທີ່ສົມເຫດສົມຜົນຂອງທຶນນັ້ນພ້ອມທັງການປະກອບເສີມຂອງທຶນຕໍ່ແຜນງານເງິນກູ້ຢືມ ແລະເງິນຊ່ວຍເຫຼືອລ້າຂອງເອດີບີ. ຜົນຂອງການທົບທວນຄວນຈະເປັນການປະເມີນທີ່ກວມລວມເອົາໝົດທຸກຢ່າງຂອງກົນໄກປະຈຸບັນ ແລະ ມີການແນະ ນຳກົນໄກການໃຫ້ທຶນທີ່ເຮັດໃນຮູບແບບໃໝ່, ທີ່ປັບປຸງ, ຫຼື ທີ່ສາມາດດັດແປງໄດ້ ແລະທີ່ຕອບສະໜອງຄວາມຕ້ອງການ. ອົງປະກອບໜຶ່ງໃນການທົບທວນຄວນມີການປຶກສາຫາລືກ່ຽວກັບວິທີໃດທີ່ເອດີບີຈະສົ່ງເສີມການຮ່ວມມືລະຫວ່າງ ເອັນຈີໂອ-ພາກ

---

[13] ເອດີບີ 1998 *ການຮ່ວມມືລະຫວ່າງ ທະນາຄານພັດທະນາອາຊີ ແລະ ບັນດາອົງການຈັດຕັ້ງມະຫາຊົນ.* ມະນີລາ

[14] ເອດີບີ 2001 *ຍຸດທະສາດໄລຍະກາງ (2001-2005)*, ໜ້າ 15. ມະນີລາ.

ສ່ວນເອກະຊົນໃນການສ້າງຄວາມເຂັ້ມແຂງແບບຍືນຍົງດ້ານການເງິນຂອງ ເອັນຈີໂອ ແລະວິທີທີ່ເອັນຈີໂອຈະສາມາດໄດ້ແຫຼ່ງຊຸກຍູ້ສິ່ງເສີມອື່ນ. ຄວນຕັ້ງກອງປະຊຸມຂົງເຂດຂຶ້ນເພື່ອປຶກສາຫາລືຜົນຂອງການທົບທວນ.

109. ການທົບທວນຄວນມີສ່ວນຮ່ວມຈາກພາກສ່ວນກ່ຽວຂ້ອງຫຼັກ ລວມທັງຜູ້ໃຫ້ທຶນຕ່າງໆ, ບັນດາຕົວແທນເອັນຈີໂອ, ຜູ້ຮັບທຶນຊ່ວຍເຫຼືອລ້າ ແລະ ພະນັກງານເອດີບີ. ຮ່າງບົດສຶກສາຄວນຈະແຈກຢາຍຢ່າງກ້ວາງຂວາງ ເພື່ອໃຫ້ມີການປະກອບຄຳຄິດເຫັນ.

## 2. ການສ້າງຕັ້ງແຫຼ່ງທຶນຊ່ວຍເຫຼືອລ້າຂະໜາດນ້ອຍ

110. ໂດຍອີງໃສ່ຜົນຂອງການທົບທວນທີ່ໄດ້ກ່າວມາເທິງນີ້ ເອດີບີຄວນສ້າງຕັ້ງຮູບແບບຂອງທຶນເອດີບີອີກຕ່າງຫາກ (ເຊັ່ນ ແຫຼ່ງທຶນຊ່ວຍເຫຼືອຫຼ້າຂະໜາດນ້ອຍ) ເພື່ອຊຸກຍູ້ສົ່ງເສີມກິດຈະກຳລິເລີ້ມທາງດ້ານການພັດທະນາຂອງເອັນຈີໂອທີ່ມີສ່ວນກ່ຽວຂ້ອງທາງດ້ານຍຸດທະສາດຕໍ່ວຽກງານເອດີບີໃນປະເທດຊະມາຊິກທີ່ກຳລັງພັດທະນາ. ເອດີບີຄວນສ້າງເງື່ອນໄຂສຳລັບແຫຼ່ງທຶນນີ້ແລ້ວສະເໜີເພື່ອປຶກສາຫາລື ລະຫວ່າງພາກສ່ວນກ່ຽວຂ້ອງ. ເງື່ອນໄຂດັ່ງກ່າວຄວນຈະກວມເອົາວິທີການໃໝ່ຂອງ ເອັນຈີໂອຕໍ່ການຫຼຸດຜ່ອນຄວາມທຸກຍາກ ແລະ ການພັດທະນາແບບຍືນຍົງ; ໂຄງການທົດລອງທີ່ມີທ່າແຮງທີ່ຈະເຮັດຢູ່ບ່ອນໃໝ່ຕື່ມອີກໄດ້; ການແນະນຳເຕັກໂນໂລຢີໃໝ່ ຫຼື ວິທີການໃໝ່; ວິທີການຕິດຕາມ ທີ່ປັບປຸງ ຫຼືການກວດກາການປະຕິບັດການບໍລິການສາທາລະນະຊົນ; ຄວາມໂປ່ງໃສ ແລະການປົກຄອງທີ່ດີທີ່ປັບປຸງ; ກິດຈະກຳການສ້າງຄວາມອາດສາມາດ; ຫຼືວິທີການໃໝ່ທີ່ກວມເອົາກຸ່ມທີ່ຢູ່ເຂດຫ່າງໄກ ຫຼືກຸ່ມທີ່ມີຄວາມສ່ຽງ ເຂົ້າໃນກິດຈະກຳໂຄງການ.

111. ຂະໜາດຂອງກອງທຶນຈະເປັນຂະໜາດໃຫຍ່ (ຕົວຢ່າງ 20 ລ້ານດອນລ່າ) ແລະ ຄວນຈະເພີ້ມເຕີມຕາມຄວາມຕ້ອງການ ແລະ ຕາມການຊີ້ບອກໂດຍການທົບທວນເປັນປະຈຳຂອງການປະຕິບັດ ແລະ ມີປະສິດທິພາບ.

## 3. ການຮັບຮູ້ວຽກແບບໃໝ່ຂອງ ເອັນຈີໂອ

112. ເພື່ອສົ່ງເສີມບົດບາດອັນສຳຄັນຂອງ ເອັນຈີໂອທີ່ເປັນຜູ້ຮ່ວມການພັດທະນາທີ່ສຳຄັນ, ເອດີບີຄວນຮັບຮູ້ບັນດາ ເອັນຈີໂອທີ່ໄດ້ສະແດງວິທີການແບບໃໝ່ ຫຼື ວິທີການທີ່ດີໃນການແກ້ໄຂສິ່ງທ້າທາຍໃນການພັດທະນາສະເພາະຂອງປະເທດ. ສູນເອັນຈີໂອສາມາດສ້າງເງື່ອນໄຂສຳລັບລາງວັນໂດຍນຳໃຊ້ແຜນການໃຫ້ລາງວັນ ທີ່ມີຢູ່ໃນປະຈຸບັນທີ່ຄ້າຍຄືກັນເປັນບ່ອນອ້າງອີງ. ຜົນຂອງວຽກນີ້ອາດຈະເປັນການເກັບກຳປະຈຳປີ ແລະ ການບັນທຶກວິທີການໃໝ່ທີ່ດີທີ່ສາມາດນຳໄປໃຊ້ຢູ່ບ່ອນອື່ນໄດ້ອີກໃນຂົງເຂດເອເຊຍ ແລະແປຊິຟິກ. ເອດີບີຄວນຈັດຄະນະຄັດເລືອກທີ່ເປັນເອກະລາດ ລວມທັງລັດຖະບານ, ເອັນຈີໂອ, ຕົວແທນຈາກສະຖາບັນສຶກສາ ແລະ ມວນຊົນ.

113. ຜູ້ໄດ້ຮັບລາງວັນອາດໄດ້ຮັບແບບຟອມຫຼາຍໆຢ່າງຂອງການຮັບຮູ້. ເຊັ່ນວ່າ:ການຂຽນສັນລະເສີນລົງໃນສິ່ງທີ່ໄດ້ພິມເຜີຍແຜ່ສູ່ສາທາລະນະຊົນຂອງເອດີບີນີ້

### 4. ການເຝິກອົບຮົມໃຫ້ພະນັກງານຫຼັກຂອງເອັນຈີໂອ

114. ອົງການເອັນຈີໂອຕ່າງໆ ໃນລະດັບຊາດ ແລະ ບັນດາອົງການທີ່ອີງໃສ່ຊຸມຊົນເປັນພື້ນຖານໃນລະດັບຮາກຖານ ແມ່ນເຮັດວຽກການພັດທະນາຕັ້ງແຕ່ລະດັບຮາກຫຍ້າໄດ້ດີ. ເຖິງຢ່າງໃດກໍ່ຕາມຫຼາຍໆ ຢ່າງ ກໍ່ຍັງຂາດການຄຸ້ມຄອງ ການພັດທະນາແບບຊໍານິຊໍານານ ແລະຄວາມຊໍານິຊໍານານໃນດ້ານການບັນທຶກທີ່ຕ້ອງການໂດຍບັນດາອົງ ການທີ່ໃຫ້ທຶນລະຫວ່າງສອງຝ່າຍ ແລະຫຼາຍຝ່າຍ. ຍິ່ງໄປກ່ວານັ້ນບາງເວລາ ລັດຖະບານ ແລະອົງການທີ່ໃຫ້ທຶນຕໍານິບັນດາເອັນຈີໂອ ທີ່ບໍ່ມີການຄຸ້ມຄອງແບບມີຄວາມຊໍານຊໍານານີໃນດ້ານບັນຊີການເງິນ ແລະ ການປົກຄອງ.

115. ສະນັ້ນເປົ້າໝາຍຂອງວຽກງານນີ້ ແມ່ນເພື່ອພັດທະນາຄວາມຊໍານິຊໍານານ ຂອງບັນດາ ເອັນຈີໂອ ເພື່ອໃຫ້ພວກເຂົາເຮັດວຽກໃຫ້ມີປະສິດທິຜົນຂຶ້ນເພີ່ມອີກ ຢູ່ໃນບັນດາກິດຈະກໍາທີ່ເອດີບີເປັນຜູ້ສະໜັບສະໜູນ. ເອດີບີ ຄວນຈັດຫາການຊ່ວຍເຫຼືອທາງດ້ານເຕັກນິກ ທີ່ເຫັນວ່າມີຄວາມຈໍາເປັນເພື່ອດໍາເນີນກິດຈະກໍາການເຝິກ ອົບຮົມໃຫ້ແກ່ພະນັກງານຫຼັກຂອງເອັນຈີໂອຢູ່ໃນການຄຸ້ມຄອງໂຄງການ ແລະການປົກຄອງ. ຕ້ອງມີຄວາມພະຍາຍາມ ໃນ ການສ້າງຄວາມອາດສາມາດຂອງບັນດາເອັນຈີໂອເຂົ້າໃນການອອກແບບໂຄງການ. ນອກຈາກນັ້ນຢ່າງນ້ອຍການຊ່ວຍເຫຼືອດ້ານເຕັກນິກໃນຂົງເຂດໜຶ່ງຕ້ອງໄດ້ເລີ້ມໃນປີ 2003-2005. ຫ້ອງການເອດີບີປະຈໍາປະເທດອາດຈະລະບຸບັນດາເອັນຈີໂອທີ່ກໍາລັງເຮັດວຽກໂຄງການທີ່ສະໜັບສະໜູນຈາກເອດີບີທີ່ຈະໄດ້ປະໂຫຍດຈາກການເຝິກອົບຮົມດັ່ງ ກ່າວ. ບັນດາຫົວຂໍ້ທີ່ຈະປະຕິບັດສາມາດລວມທັງການອອກແບບ ແລະ ການດໍາເນີນການຕິດຕາມ ແລະ ການປະເມີນໂຄງການ, ການຂື້ນງົບປະມານ ແລະ ແຜນເງິນທີ່ມີຄວາມໝັ້ນຄົງ, ຂໍ້ມູນ ແລະ ຄວາມຮູ້ທາງດ້ານການຄຸ້ມຄອງ, ກົດຂໍ້ບັງຄັບຕົວເອງ ແລະ ວິທີການທາງດ້ານບັນຊີ ການເງິນ. ການເສີມສ້າງຄວາມອາດສາມາດລະຫ່ວາງປະເທດດ້ອຍພັດທະນາ ແລະ ການເຝິກອົບຮົມ ຂອງຜູ້ເຝິກອົບຮົມ ແມ່ນຄືກັນກັບກົນໄກເພື່ອນໍາ ໄປສູ່ຄວາມສໍາເລັດ.

<u>ສັງລວມຂໍ້ສະເໜີປະຕິບັດ</u>:

A21. ເອດີບີຄວນພິຈາລະນາຄືນກົນໄກໃນປະຈຸບັນທັງໝົດ ທີ່ບັນດາເອັນຈີໂອໄດ້ຮັບຫຼືຈ່າຍທຶນຈາກ ເອດີບີ ແລະ ສ້າງຕັ້ງເງິນກອງທຶນນ້ອຍອັນໜຶ່ງເພື່ອສົ່ງເສີມກິດຈະກໍາການພັດທະນາເອັນຈີໂອ.

A22. ວິທີໜຶ່ງເພື່ອສົ່ງເສີມການຮ່ວມມືກັບເອັນຈີໂອ, ເອດີບີຄວນຄົ້ນຄວ້າທິດທາງເພື່ອຮັບຮູ້ການນໍາສະເໜີວິທີການໃໝ່ໆຂອງ ເອັນຈີໂອເພື່ອແກ້ໄຂສິ່ງທ້າທາຍໃນການພັດທະນາ.

A23. ເອດີບີ ຄວນກໍ່ສ້າງຄວາມສາມາດຂອງເອັນຈີໂອທີ່ກ່ຽວຂ້ອງຢູ່ໃນບັນດາກິດຈະກໍາທີ່ເອດີບີໃຫ້ການສະໜັບສະໜູນໂດຍການຈັດຫາການຊ່ວຍເຫຼືອທາງດ້ານເຕັກນິກ ເພື່ອເຝິກພະນັກງານຫຼັກຂອງ ເອັນຈີໂອ ໃນການຄຸ້ມຄອງໂຄງການ ແລະ ການປົກຄອງ.

## E. ການເສີມຂະຫຍາຍໃນການຮ່ວມມືລະຫ່ວາງລັດຖະບານ-ເອັນຈີໂອ

### 1. ຂໍ້ກໍານົດ ແລະ ວິທີການວ່າດ້ວຍການບໍລິຫານທີ່ອໍານວຍຄວາມສະດວກໃຫ້ແກ່ ເອັນຈີໂອ

116. ບັນດາເອັນຈີໂອປະເຊີນໜ້າກັບສິ່ງກີດກັ້ນຫຼາຍໆຢ່າງ, ເຊິ່ງແຕກຕ່າງກັນລະຫວ່າງແຕ່ລະປະເທດ. ເຫຼົ່ານີ້ລວມທັງການບໍ່ສາມາດຮັບເອົາການສົ່ງເສີມຂອງຜູ້ຊ່ວຍເຫຼືອທີ່ເປັນເງິນສົດ ຫຼື ເປັນສິນຄ້າ; ຄວາມຫຍຸ້ງຍາກໃນການ

ຂໍວີຊ່າ ໃຫ້ແກ່ວິຊາການຄົນຕ່າງປະເທດທີ່ຈໍາເປັນທີ່ສຸດສໍາລັບໂຄງການຂອງເຂົາເຈົ້າ, ແລະ ຄວາມຫຍຸ້ງຍາກ ຂອງການອານຸຍາດ ແລະ ໃບອານຸຍາດທີ່ໃຫ້ດໍາເນີນໂຄງການ ແລະ ແຜນການ. ໃນຄວາມພະຍາຍາມອັນໜຶ່ງທີ່ຈະກໍາຈັດສິ່ງກີດກັ້ນໃຫ້ແກ່ເອັນຈີໂອ, ເອດີບີຄວນເຮັດຕາມຖ້າມີການຂໍຮ້ອງໃຫ້ຈັດຫາການຊ່ວຍເຫຼືອທາງດ້ານເຕັກນິກໃຫ້ແກ່ ບັນດາປະເທດສະມາຊິກທີ່ດ້ອຍພັດທະນາ ເພື່ອປັບປຸງກົດລະບຽບ ແລະ ວິທີການໃໝ່ຕາມຄວາມເໝາະສົມ. ໃນບາງປະເທດ, ການປະຕິບັດ ຕາມກົດລະບຽບ ແລະການບໍລິຫານທີ່ມີຢູ່ແລ້ວອາດຈະຕ້ອງປັບປຸງ, ເສີມຂະຫຍາຍ, ຫຼືລົບລ້າງໃນບາງກໍລະນີ. ຜົນທີ່ໄດ້ຮັບຄວນຈະແຈ້ງ ແລະການກໍານົດຂອງການເຮັດວຽກງານ ແລະ ລະບຽບການບໍລິຫານຢູ່ລະດັບທ້ອງຖິ່ນ ຫຼືລະດັບຊາດທີ່ແກ້ໄຂຄວາມຕ້ອງການຂອງເອັນຈີໂອໂດຍທັນທີທັນໃດ.

117. ໃນຫຼາຍໆປະເທດ, ກົດໝາຍສິ່ງແວດລ້ອມອາດມີຄວາມຈໍາເປັນຕ້ອງໄດ້ຖືກປັບປຸງເພື່ອສ້າງຫຼືຍົກສູງການຮ່ວມມືລະຫວ່າງເອັນຈີໂອ ແລະ ລັດຖະບານຂອງເຂົາເຈົ້າ. ເອດີບີຄວນເຮັດຕາມຖ້າມີການຂໍຮ້ອງໃຫ້ຈັດຫາການຊ່ວຍເຫຼືອທາງດ້ານເຕັກນິກໃຫ້ແກ່ ບັນດາປະເທດສະມາຊິກທີ່ດ້ອຍພັດທະນາເພື່ອສ້າງ ຫຼື ສ້າງຄວາມເຂັ້ມແຂງທາງດ້ານນະໂຍບາຍ, ກົດໝາຍ, ການເງິນ ແລະ ອຸປະກອນເຄື່ອງມືທາງດ້ານການບໍລິຫານທີ່ມີຄວາມຈໍາເປັນສໍາລັບການຮ່ວມມືລະຫວ່າງລັດຖະບານ ແລະ ເອັນຈີໂອທີ່ມີປະສິດທິຜົນ.

118. ເອດີບີຄວນທົດລອງບັນດາກິດຈະກໍາເຫຼົ່ານີ້ຢ່າງໜ້ອຍໃນໜຶ່ງປະເທດໃນໄລຍະປີ 2003-2005.

### 2. ການເຝິກອົບຮົມໃຫ້ແກ່ພະນັກງານລັດຖະບານ

119. ມັນເປັນສິ່ງສໍາຄັນທີ່ພະນັກງານລັດຕ້ອງເຂົ້າໃຈເຖິງບົດບາດຂອງ ເອັນຈີໂອ ແລະ ການປະກອບສ່ວນທີ່ສໍາຄັນຂອງພວກເຂົາເຈົ້າໃນຂັ້ນຕອນການພັດທະນາ. ຖ້າມີການຂໍຮ້ອງ, ເອດີບີຄວນຄົ້ນຄ້ວາວ່າເຮັດແນວໃດໃຫ້ການເຝິກອົບຮົມນີ້ເປັນອັນດຽວກັນເຂົ້າໃນແຜນການເຝິກອົບຮົມການຄຸ້ມຄອງໂຄງການໃຫ້ແກ່ພະນັກງານອົງການຈັດຕັ້ງປະຕິບັດຂອງລັດຖະບານ.

120. ເອດີບີຄວນທົດລອງການເຝິກອົບຮົມຢ່າງໜ້ອຍໃນໜຶ່ງປະເທດຕະຫຼອດໄລຍະປີ 2003-2005.

<u>ສັງລວມຂໍ້ສະເໜີປະຕິບັດ</u>:

A24. ເອດີບີຄວນອໍານວຍເຮັດໃຫ້ສາຍພົວພັນການເຮັດວຽກ ລະຫວ່າງ ລັດຖະບານ ແລະເອັນຈີໂອຕະຫຼອດຈົນຮອດການຊ່ວຍເຫຼືອທາງດ້ານເຕັກນິກໃນການພັດທະນາ ຫຼື ເສີມສ້າງໂຄງຮ່າງທາງດ້ານກົດໝາຍໃຫ້ເຂັ້ມແຂງ, ແລະສ້າງຄວາມສາມາດຂອງພະນັກງານລັດຢ່າງໜ້ອຍໃນໜຶ່ງປະເທດໃນໄລຍະປີ 2003-2005..

## VII. ການຈັດຕັ້ງປະຕິບັດໂຄງຮ່າງການຮ່ວມມືລະຫ່ວາງເອດີບີ-ເອັນຈີໂອ

## A. ການປະຕິບັດໂຄງຮ່າງການຮ່ວມມືລະຫວ່າງ ເອດີບີ- ເອັນຈີໂອ

### 1. ການຈັດຕັ້ງປະຕິບັດ

121. ສູນເອັນຈີໂອຄວນມີຄວາມຮັບຜິດຊອບທັງໝົດສຳລັບການຄຸ້ມຄອງການປະຕິບັດໂຄງຮ່າງການຮ່ວມມືລະຫວ່າງເອດີບີ-ເອັນຈີໂອ. ສະນັ້ນ, ແຜນວຽກປະຈຳປີຂອງເອດີບີສຳລັບສົກປີ 2003-2005 ຕ້ອງແມ່ນຕາມການຊີ້ນຳຂອງໂຄງຮ່າງ ການຮ່ວມມືລະຫວ່າງເອດີບີ-ເອັນຈີໂອເປັນສ່ວນໃຫຍ່.

122. ສູນເອັນຈີໂອຄວນສະໜັບສະໜູນ, ປຶກສາຫາລື ແລະປະສານງານກັບບັນດາກົມຕາມຂົງເຂດ, ໂດຍສະເພາະຢ່າງຍິ່ງຫ້ອງການເອດີບີປະຈຳປະເທດ. ໃນການປະຕິບັດ ໂຄງຮ່າງການຮ່ວມມືລະຫວ່າງເອດີບີ-ເອັນຈີໂອ. ບົດບາດສຳຄັນຂອງບັນດາກົມຕ່າງໆໃນຂົງເຂດຄວນອຳນວຍແວດລ້ອມຕ່າງໆໃຫ້ເອັນຈີໂອຢູ່ໂຄງການ, ປະເທດ (ແຜນຍຸດທະສາດ ແລະ ແຜນໂຄງການປະເທດ), ແລະລະດັບຂົງເຂດຍ່ອຍ.

123. ການມີສ່ວນຮ່ວມທີ່ຫ້າວຫັນຂອງຫ້ອງການເອດີບີປະຈຳປະເທດທັງສອງຝ່າຍຖ້າຢາກໃຫ້ໂຄງການຮ່ວມມືລະຫວ່າງເອດີບີ-ເອັນຈີໂອສຳເລັດຜົນ. ບັນດາຫ້ອງການເອດີບີປະຈຳປະເທດໄດ້ຕິດຕໍ່ກັບເອັນຈີໂອເປັນປົກກະຕິ, ແລະສາມາດລະບຸວ່າ ໂຄງຮ່າງການຮ່ວມມືລະຫວ່າງເອດີບີ-ເອັນຈີໂອມີປະສິດທິພາບບໍ່ແລະ ມີປະສິດທິພາບແບບໃດໃນລະດັບພື້ນຖານ. ເຊັ່ນພາກສ່ວນຂອງການປະຕິບັດທີ່ເປັນປົກກະຕິ, ເອດີບີຈັດການວິເຄາະຜູ້ມີສ່ວນຮ່ວມ ໂດຍສະເພາະຢ່າງຍິ່ງແມ່ນໃນໄລຍະຂັ້ນຕອນຂອງການກະກຽມໂຄງການ. ຫ້ອງການເອດີບີປະຈຳແຕ່ລະປະເທດ ແລະ ພະນັກງານເອດີບີອື່ນໆໃນແຕ່ລະຄະນະມີຄວາມສຳຄັນໃນການຈັດຫາຂໍ້ມູນໃຫ້ແກ່ເອດີບີສູນກາງ. ທຸກໆຂໍ້ມູນທີ່ຕິງກັບບັນຫາທີ່ໄດ້ເກັບກຳກ່ຽວກັບເອັນຈີໂອ ຄວນສົ່ງເຂົ້າໃນຖານຂໍ້ມູນຂອງເອັນຈີໂອລົ້ງ ເພື່ອສົ່ງເສີມຄວາມຮູ້ແຫ່ງສະຖາບັນຂອງເອດີບີຂອງຊຸມຊົນເອັນຈີໂອທົ່ວທັງຂົງເຂດ.

124. ອີງຕາມຂໍ້ມູນທີ່ໄດ້ຮັບໃນກອງປະຊຸມຊຽນໂຄງຮ່າງ, ແມ່ນສົມເຫດສົມຜົນທີ່ຈະຄາດຫວັງວ່າບັນດາປະເທດຊະມາຊິກທີ່ກຳລັງພັດທະນາທັງໝົດ ແລະບັນດາເອັນຈີໂອທີ່ເຮັດວຽກດ້ານການພັດທະນາຈະປະກອບສ່ວນໃນການປະຕິບັດໂຄງຮ່າງການຮ່ວມມືລະຫວ່າງເອດີບີ-ເອັນຈີໂອ. ຈະເຫັນຈະແຈ້ງວ່າໂຄງຮ່າງການຮ່ວມມືລະຫວ່າງ ເອດີບີ-ເອັນຈີໂອນັ້ນຈະບໍ່ປະສົບຜົນສຳເລັດ ຖ້າປາດສະຈາກການໃຫ້ຂໍ້ມູນທີ່ໜັກແໜ້ນຈາກທັງສອງພາກສ່ວນ. ການປະກອບສ່ວນທີ່ສຳຄັນຂອງ ລັດຖະບານແມ່ນຄວນຈັດຫາແວດລ້ອມສຳລັບເອັນຈີໂອທີ່ສາມາດເຮັດວຽກຕາມເນື້ອໃນການປະຕິບັດຂອງເອດີບີ (ແລະອື່ນໆ) ຢູ່ໃນບັນດາປະເທດຕ່າງໆ. ບັນດາເອັນຈີໂອຕ້ອງການ "ເຮັດວຽກບ້ານ" ຂອງເຂົາເຈົ້າເພື່ອຈັດຕັ້ງໃຫ້ມີປະສິດທິຜົນ ແລະ ປະກອບສ່ວນໃນວິທີອື່ນທີ່ອຳນວຍການປະຕິບັດ ເຊິ່ງກັນ ແລະ ກັນທີ່ດີຂຶ້ນ.

125. ຮູບພາບ 1 ສະແດງບົດບາດຄວາມສຳຄັນຂອງແຕ່ລະກຸ່ມຜູ້ມີສ່ວນຮ່ວມທີ່ສຳຄັນ. ຮູບພາບ 2 ສະແດງບົດບາດ ຄວາມສຳຄັນສຳລັບບັນດາກົມຕ່າງໆຂອງເອດີບີ. ເອກະສານຊ້ອນທ້າຍ 3 ສະແດງຄວາມຮັບຜິດຊອບຂອງແຕ່ລະກຸ່ມ ຜູ້ມີສ່ວນຮ່ວມທີ່ສຳຄັນ ສຳລັບແຕ່ລະກິດຈະກຳທີ່ໄດ້ສະເໜີ, ເຊັ່ນດຽວກັນກັບໄລຍະເວລາການສຳເລັດວຽກງານ.

### 2. ການຕິດຕາມ

126. ສ່ວນໜຶ່ງຂອງແຜນວຽກງານຂອງເຄືອຂ່າຍເອັນຈີໂອພາຍໃນເອດີບີ ຄວນຈະເໜັ້ນໜັກການຂະຫຍາຍແຜນການຕິດຕາມ ແລະ ປະເມີນຜົນ. ສູນ ເອັນຈີໂອຄວນຈະຮັບຜິດຊອບເປັນຫຼັກການເບິ່ງລວມການຈັດຕັ້ງປະຕິບັດໂຄງຮ່າງການຮ່ວມມືລະຫວ່າງເອດີບີ- ເອັນຈີໂອ ແລະ ຕິດຕາມຄວາມຄືບໜ້າທັງພາຍໃນ ແລະ ພາຍນອກ. ຕົວບົ່ງຊີ້ການສະແດງສຳລັບແຕ່ລະຂໍ້ສະເໜີແມ່ນໄດ້ລວມຢູ່ໃນເອດະສານຄັດຕິດ 3 .

127. ພາຍໃນເອດີບີ ສູນເອັນຈີໂອຄວນຈະລິເລີ້ມວິທີການສະທ້ອນກັບແຕ່ລະປີທີ່ບັນດາກົມແຕ່ລະຂົງເຂດ ແລະ ຫ້ອງການເອດີບີປະຈຳປະເທດ ແລະ ຫ້ອງການຕົວແທນເອດີບີໃຫ້ການປະເມີນຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງຮ່າງການຮ່ວມມືລະຫວ່າງເອດີບີ-ເອັນຈີໂອ. ການສະທ້ອນຄວນຈະເກັບກຳໃນຮູບແບບທີ່ມີໂຄງສ້າງທີ່ມີກອງປະຊຸມກັບແຕ່ລະກົມຂອງແຕ່ລະຂົງເຂດ ທີ່ເໝາະສົມເພື່ອທົບທວນກິດຈະກຳຂອງຂົງເຂດຍ່ອຍຂອງເຂົາເຈົ້າ.

128. ນອກເໜືອໄປກວ່ານັ້ນບັນດາຕົວແທນ ເອັນຈີໂອ ແລະ ລັດຖະບານຄວນທົບທວນໂຄງຮ່າງການຮ່ວມມືລະຫວ່າງເອດີບີ-ເອັນຈີໂອປະຈຳປີໃນກອງປະຊຸມລະດັບປະເທດ ແລະ ລະດັບຂົງເຂດຍ່ອຍລະຫວ່າງສາມຝ່າຍ. ສ່ວນໜຶ່ງ ຂອງກອງປະຊຸມນີ້ຄວນຈະເໜັ້ນໜັກການທົບທວນສະພາບຂອງກິດຈະກຳຂອງໂຄງຮ່າງການຮ່ວມມືລະຫວ່າງເອດີບີ- ເອັນຈີໂອ.

129. ແຕ່ລະປີ ສູນເອັນຈີໂອກະກຽມບົດລາຍງານປະຈຳປີ ທີ່ສັງລວມຄວາມສຳເລັດທົ່ວສະຖາບັນ ກ່ຽວກັບການຮ່ວມມືເອດີບີ-ເອັນຈີໂອ. ບົດລາຍງານປະຈຳປີນີ້ ຄວນເປັນວິທີການລາຍງານຫຼັກສຳລັບການຕິດຕາມ ແລະປະເມີນຜົນຂອງໂຄງຮ່າງການຮ່ວມມືລະຫວ່າງເອດີບີ-ເອັນຈີໂອ ແລະ ຄວນຈະສັງລວມມູມມອງຂອງໝົດທຸກຄົນທີ່ມີສ່ວນກ່ຽວຂ້ອງ.

### 3. ການທົບທວນ

130. ເອດີບີຄວນຈະຈັດການທົບທວນໃຫຍ່ຂອງໂຄງຮ່າງການຮ່ວມມືລະຫວ່າງເອດີບີ-ເອັນຈີໂອໃນກາງປີ 2005 ເພື່ອກະກຽມໂຄງຮ່າງການຮ່ວມມືລະຫວ່າງເອດີບີ-ເອັນຈີໂອໃໝ່ສຳລັບປີ 2006-2010. ການທົບທວນນີ້ຄວນຈະເປັນຂັ້ນຕອນທີ່ຈິງຈັງ ແລະ ມີການຮ່ວມມືຄ້າຍຄືທີ່ໄດ້ປະຕິບັດໃນປີ 2002 ເພື່ອສ້າງໂຄງຮ່າງການຮ່ວມມືລະຫວ່າງເອດີບີ-ເອັນຈີໂອໃນປະຈຸບັນນີ້.

## B. ຜົນກະທົບຕໍ່ທຶນ

131. ສຳລັບຮ່າງທຳອິດຂອງໂຄງຮ່າງການຮ່ວມມືລະຫວ່າງເອດີບີ-ເອັນຈີໂອ, ໄດ້ຄາດຄະເນແບບຄ້າວໆ ຂອງຄວາມຕ້ອງການທຶນເອດີບີ ເພື່ອຈັດຕັ້ງປະຕິບັດ ໂຄງຮ່າງການຮ່ວມມືລະຫວ່າງເອດີບີ-ເອັນຈີໂອໃນໄລຍະ 3 ປີ. ຄວາມຕ້ອງການທຶນໃນໄລຍະ 3 ປີ ແມ່ນປະມານ US$ 4,700,000. ລາຍລະອຽດທີ່ຄາດຄະເນປະຈຳປີແມ່ນ US$2,000,000, US$1,400,000 ແລະ US$1,300,000 ສຳລັບປີ 2003, 2004 ແລະ 2005 ຕາມລຳດັບ. ເອກະ ສານຄັດຕິດ 3 ສະແດງຄວາມຕ້ອງການຂອງທຶນເອດີບີສຳລັບແຕ່ລະຂໍ້ປະຕິບັດທີ່ສະເໜີ. ໂດຍການລວບລວມຂໍ້ປະຕິບັດທີ່ແນະນຳພາຍໃຕ້ຫົວຂໍ້ໃຫຍ່ 3 ຫົວຂໍ້ລາຄາທີ່ຄາດຄະເນໄວ້ຈະແມ່ນ:

| | |
|---|---:|
| ການຮ່ວມມືລະຫວ່າງ 3 ຝ່າຍກ່ຽວກັບໂຄງການ/ແຜນການໂຄງການ/ນະໂຍບາຍ | $1,600,000 |
| ການສ້າງຄວາມອາດສາມາດເອັນຈີໂອ/ລັດຖະບານ | 2,150,000 |
| ການສ້າງຄວາມອາດສາມາດເອດີບີ | 950,000 |
| ລວມ | **$4,700,000** |

132. ການຄາດຄະເນນີ້ບໍ່ໄດ້ລວມເອົາການລົງທຶນທີ່ໄດ້ວາງແຜນໄວ້ສຳລັບກອງທຶນເງິນຊ່ວຍເຫຼືອຫຼ້າຂະໜາດນ້ອຍທີ່ຖາວອນຈາກບັນດາອົງການຊ່ວຍເຫຼືອລະຫວ່າງສອງຝ່າຍ ທີ່ໄດ້ຄາດໄວ້ຈະແມ່ນປະມານ US$20,000,000. ຫງົບປະມານການສ້າງຄວາມອາດສາມາດ ເອັນຈີໂອ-ລັດຖະບານກວມເອົາກອງທຶນຊ່ວຍເຫຼືອລ້າຂະໜາດ ນ້ອຍໃນ 2 ປີທຳອິດເປັນຈຳນວນ US$1,000,000 ທີ່ຈະອອກມາຈາກກອງທຶນພິເສດຂອງເອດີບີທີ່ມີຢູ່ແລ້ວ ເຊັ່ນ: ກອງທຶນການຮ່ວມມືການຫຼຸດຜ່ອນຄວາມທຸກຍາກ.

133. ການຄາດຄະເນຫງົບປະມານແມ່ນສຳລັບສະຖາບັນໂດຍລວມ ແລະ ອາດຈະມີການຊ້ອນກັບກິດຈະກຳທີ່ມີຫງົບປະມານແລ້ວ. ຕົວຢ່າງການຊ່ວຍເຫຼືອດ້ານເຕັກນິກທີ່ໄດ້ສະເໜີເພື່ອສ້າງຄວາມເຂັ້ມແຂງໃຫ້ ເອັນຈີໂອ ຢູ່ອິນໂດນີເຊຍແມ່ນ ຄາດຄະເນວ່າຈະເລີ້ມຈັດຕັ້ງປະຕິບັດໃນປີ 2003 ທີ່ຈະເປັນຈຳນວນ US$300,000 ທີ່ໄດ້ຂຶ້ນຫງົບປະມານໄວ້ໃນໂຄງຮ່າງການຮ່ວມມືລະຫວ່າງເອດີບີ-ເອັນຈີໂອສຳລັບກິດຈະກຳນີ້. ການຄາດຄະເນບໍ່ໄດ້ກວມເອົາການເພີ້ມເວລາຂອງພະນັກງານທີ່ໄດ້ເຮັດວຽກງານກິດຈະກຳທີ່ຄ້າຍຄືກັນຢູ່ແລ້ວ ຫາກແຕ່ວ່າໄດ້ກວມເອົາຂໍ້ແນະນຳທີ່ຈະໃຫ້ມີຜູ້ປະສານງານກັບ ເອັນຈີໂອ 3-5 ຄົນທີ່ເຕັມເວລາໃນບາງຫ້ອງການເອດີບີປະຈຳປະເທດ ພາຍໃນປີ 2003-2005.

**Figure 1: Primary Roles of Each Stakeholder Group**

## Figure 2: Primary Roles of Each ADB Department

**ADB's Key Roles:**

- Develop further guidelines for stakeholder participation as well as enhanced information dissemination
- Strengthen NGO involvement in all phases of the project cycle, in country and subregional programming, and in policy development and monitoring
- Build capacity of all stakeholders to work together toward poverty reduction
- Facilitate enabling environment for NGOs to operate at the country level

**NGO Center/Regional & Sustainable Development Dept:**

- Manage, monitor & evaluate Framework
- Guide & support RDs and RMs/Ros
- Develop participation guidelines & best practices for stakeholder involvement
- With SPD, review NGO funding modalities, including more flexible mechanisms to support NGO activities
- Assist with agenda setting & facilitating national & subregional tripartite meetings
- Organize regional tripartite meetings, with RD cooperation
- Oversee ADB internet & external NGO-related training
- Manage ADB & NGO recognition & exchange programs
- Maintain central database of NGOs & NGO-ASB cooperation

**Regional Departments:**

- Facilitate enabling environment for NGOs to operate in country & subregional context
- Establish, with governments, project information centers
- Organize sub-regional tripartite meetings
- Facilitate NGO and government staff training
- Organize national or project-specific meetings with NGOs
- Copy NGOC on all significant communications with NGOs

**Resident Missions and/or Representative Offices:**

- Organize national tripartite meetings
- Document stakeholder participation in all ADB operations
- Conduct awareness-raising activities on ADB operations
- Facilitate enabling environment for NGOs to operate in country context
- Develop country-level base data on NGOs as contribution to ADB database system

**Other Departments:**

- OGC/OER assess information available to the public
- SPD review with NGOC NGO funding modalities, including more flexible mechanisms to support NGO activities
- Implement ADB internal & external NGO-related training
- Involve NGOs in ADB policy development and review